ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ
ພ້ອມດ້ວຍຄະນະ ລົງຢ້ຽມຢາມ ແລະ ເຮັດວຽກຢູ່ເມືອງສິງ ແຂວງຫຼວງນ້ຳທາ.

(ວັນທີ 22 ກັນຍາ 2023)

ສະບັບ: 260

ປະຈຳເດືອນ ຕຸລາ 2023

Korsangphakmagazine@gmail.com

ວັນທີ 2 ຕຸລາ 2023 ຄະນະຈັດຕັ້ງສູນກາງພັກ ຈັດກອງປະຊຸມສ່ອງແສງວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ປະຈຳໄຕມາດ III ປີ 2023 ໂດຍການເປັນປະທານຂອງສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ ເລຂາທິການສູນກາງພັກ ເລຂາຄະນະພັກ ຄະນະຈັດຕັ້ງສູນກາງພັກ ມີບັນດາສະຫາຍ ຫົວໜ້າກົມຈັດຕັ້ງ-ພະນັກງານ ຈາກກະຊວງ-ອົງການ, ມີຄະນະກົມ, ຫ້ອງການ, ສູນພັດທະນາວຽກງານຈັດຕັ້ງ ທີ່ຂຶ້ນກັບຄະນະຈັດຕັ້ງສູນກາງພັກ ເຂົ້າຮ່ວມ

ວັນທີ 30 ສິງຫາ 2023 ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຈັດພິທີມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ພ້ອມທັງປະກາດການຈັດຕັ້ງ ແລະ ຮັບຊົມຮູບເງົາຫວນຄືນມູນເຊື້ອ 3 ວັນປະຫວັດສາດຂອງຊາດ ໂດຍການເປັນປະທານຂອງສະຫາຍ ບັນດິດ ສຈ ບໍ່ວຽງຄຳ ວົງດາລາ ກຳມະການສູນກາງພັກ, ເລຂາຄະນະພັກ, ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ມີບັນດາສະຫາຍ ຄະນະປະຈຳພັກ, ຄະນະພັກ, ຄະນະໜ່ວຍພັກກົມ, ຄະນະພັກຮາກຖານອ້ອມຂ້າງກະຊວງເຂົ້າຮ່ວມ.

ວັນທີ 21 ກັນຍາ 2023 ແຂວງໄຊຍະບູລີໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການດຳເນີນກອງປະຊຸມໃຫຍ່ຄັ້ງທີ IX ຂອງໜ່ວຍພັກບ້ານດອນໃໝ່ ເມືອງໄຊຍະບູລີ ແຂວງໄຊຍະບູລີ ໂດຍການເປັນປະທານຂອງສະຫາຍ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງໄຊຍະບູລີ ແລະ ສະຫາຍ ປອ ວິສຸກ ພົມພິທັກ ກຳມະການຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ.

ວັນທີ 29 ກັນຍາ 2023 ສູນກາງສະຫະພັນແມ່ຍິງລາວ ໄດ້ຈັດກອງປະຊຸມທົ່ວອົງຄະນະພັກ ປະຈຳໄຕມາດ III ປີ 2023 ໂດຍການເປັນປະທານ ຂອງສະຫາຍ ບາງ ອິນລາວັນ ແກ້ວບຸນພັນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ມີຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຄະນະໜ່ວຍພັກກົມ, ສູນ ພ້ອມດ້ວຍພະນັກງານພາຍໃນສູນກາງສະຫະພັນແມ່ຍິງລາວເຂົ້າຮ່ວມ.

ວັນທີ 26 ກັນຍາ 2023 ຄະນະໂຄສະນາອົບຮົມສູນກາງພັກ ຈັດຊຸດຝຶກອົບຮົມວຽກງານໂຄສະນາຜ່ານສື່ ແລະ ຜູ້ດຳເນີນລາຍການວິທະຍຸ-ໂທລະພາບ ໂດຍການເປັນປະທານຂອງທ່ານ ນາງ ວິລະວອນ ພັນທະວົງ ຄະນະປະຈຳພັກ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ມີທ່ານ ວັນໄຊ ຕະວິນຍານ ຄະນະພັກ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ຫົວໜ້າບັນນາທິການໃຫຍ່ ໜັງສືພິມປະຊາຊົນ, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ, ນັກຝຶກອົບຮົມຈາກພາຍໃນແລະ ມາຈາກພາຍນອກຄື: ວາລະສານກໍ່ສ້າງພັກ, ວາລະສານກວດກາ, ວາລະສານປ້ອງກັນຊາດເຂົ້າຮ່ວມ(ການຝຶກອົບຮົມດັ່ງກ່າວດຳເນີນເປັນເວລາ 4 ວັນ).

ໃນລະຫວ່າງວັນທີ 18-22 ກັນຍາ 2023 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດຊຸດຝຶກອົບຮົມການບໍລິຫານລັດໃຫ້ພະນັກງານນຳພາ-ຄຸ້ມຄອງ ໂດຍການເປັນປະທານຂອງສະຫາຍ ວຽນທອງ ສິງຄຳພັນ ກຳມະການຄະນະພັກ ຫົວໜ້າກົມຈັດຕັ້ງພະນັກງານ, ມີວິທະຍາກອນທີ່ມາຈາກສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງແລະຝຶກອົບຮົມກະຊວງພາຍໃນ, ມີສຳມະນາກອນທີ່ມີຕຳແໜ່ງຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ພາຍໃນຄະນະຈັດຕັ້ງສູນກາງພັກ ຈຳນວນ 46 ສະຫາຍ, ຍິງ 15 ສະຫາຍ ເຂົ້າຮ່ວມ.

ປະທານ ໄກສອນ ພົມວິຫານ
ເວົ້າເຖິງພະນັກງານການນຳ

"ຜູ້ນຳພາຕ້ອງເປັນແບບຢ່າງໃນທຸກດ້ານ ເພື່ອໃຫ້ສະມາຊິກພັກຜູ້ອື່ນໆເອົາເປັນແບບຢ່າງ"

<< ສິ່ງທີ່ຄວນຫຼີກເວັ້ນໃນຂົງເຂດຄຸນສົມບັດສິນທຳປະຕິວັດແມ່ນ: ປາກຫວານດັ່ງນ້ຳອ້ອຍ, ໃຈສົ້ມດັ່ງໝາກນາວ, ຄວາມເວົ້າບໍ່ສອດຄ່ອງກັບການກະທຳ, ມີແຕ່ໂຄສະນາຄຸນສົມບັດສິນທຳແບບນ້ຳເຕົ້າເປົ່າ, ຕັກເຕືອນສັ່ງສອນຜູ້ອື່ນຕ້ອງເຮັດແນວນັ້ນ, ແນວນີ້, ແຕ່ຕົນເອງຊ້ຳພັດບໍ່ເປັນແບບຢ່າງ >>.

<< ໃຜໆກໍຮູ້ດີວ່າ ຖ້າພະນັກງານຂັ້ນສູງຂອງພັກບໍ່ເປັນແບບຢ່າງທາງດ້ານຄຸນສົມບັດສິນທຳແລ້ວ ມັນກໍຈະສົ່ງຜົນສະທ້ອນບໍ່ດີເຖິງຂັ້ນລຸ່ມ ແລະ ໃນເວລານັ້ນໂລຊິກຂອງການດຳລົງຊີວິດກໍຈະພາໄປສູ່ສະພາວະ ທີ່ວ່າ: "ເຮືອນຮົ່ວມາແຕ່ແປ" >>.

<< ບັນຫາອິດທິພົນ ແມ່ນເປັນສິ່ງທີ່ສຳຄັນທີ່ສຸດສຳລັບຜູ້ນຳ ແຕ່ອິດທິພົນບໍ່ແມ່ນຈະມີເອງໄດ້, ມັນຮຽກຮ້ອງຕ້ອງໄດ້ຜ່ານຂະບວນວິວັດແຫ່ງການສູ້ຊົນ, ຝຶກຝົນຫຼໍ່ຫຼອມຂອງແຕ່ລະຄົນ >>

<< ຢາກໃຫ້ມີອິດທິພົນ ແມ່ນຍາກແທ້, ແຕ່ຢາກໃຫ້ອິດທິພົນເສື່ອມເສຍ ແມ່ນງ່າຍທີ່ສຸດ, ພຽງແຕ່ຕົນເອງລະເຫຼີງໄປນາທີດຽວ, ບໍ່ເປັນເຈົ້າຕົນເອງ, ໄດ້ປ່ອຍປະໃຫ້ຊີວິດເປັນໄປຕາມການມະຕັນຫາ, ສັນຊາດຕະຍານອັນຕ່ຳຊ້າແລ້ວ, ອິດທິພົນເຖິງຈະຫຼາຍປານໃດກໍຈະເສຍໄປຢ່າງປະຈຸບັນທັນດ່ວນ ແລະ ໃນເວລານັ້ນກໍຈະນຳພາມະຫາຊົນໄດ້ຍາກທີ່ສຸດ >>

(ຄັດຈາກປຶ້ມມູນເຊື້ອ 55 ປີ ກ່ຽວກັບວຽກງານຈັດຕັ້ງຂອງພັກ ປປ ລາວ ໜ້າ 21-22)

ບາງຜົນສຳເລັດໃນການນຳພາ-ຊີ້ນຳ ຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ໃນໄລຍະເຄິ່ງສະໄໝຜ່ານມາ

ໂດຍ: ແສງຄຳ

ຄະນະບໍລິຫານງານພັກ ທະນາຄານແຫ່ງສປປ ລາວ (ທຫລ) ເປັນອົງຄະນະພັກເອກະລາດ ທີ່ຖືກສ້າງຕັ້ງຂຶ້ນຕາມມະຕິຕົກລົງເລກທີ 103/ກມສພ, ລົງວັນທີ 22 ກັນຍາ 2006, ມີພາລະບົດບາດ ເປັນເສນາທິການ ແລະ ມີຄວາມຮັບຜິດຊອບໂດຍກົງ ໃນການນຳພາ-ຊີ້ນຳວຽກງານຮອບດ້ານຢູ່ຂະແໜງທະນາຄານ. ໃນກອງປະຊຸມຄັ້ງທີ IV ຂອງອົງຄະນະພັກ ທຫລ ໄດ້ວາງທິດທາງແຜນການໄວ້ວ່າ: ແຕ່ປີ 2021-2025 ສືບຕໍ່ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ສະມາຊິກພັກດ້ວຍຫຼາຍຮູບການ ແລະ ມີເນື້ອໃນເລິກເຊິ່ງ; ສືບຕໍ່ປັບປຸງກໍ່ສ້າງພັກ ຕາມຫຼັກການທິດນຳຂອງພັກ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ໂດຍຊຸກຍູ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ມີຄຸນນະພາບ; ປັບປຸງການຈັດຕັ້ງພັກແຕ່ລະຂັ້ນ ໃຫ້ສອດຄ່ອງກັບການປັບປຸງເບື້ອງລັດ; ເອົາໃຈໃສ່ເລືອກເຟັ້ນມະຫາຊົນທີ່ດີເດັ່ນ ແລະ ມີມາດຖານຄົບຖ້ວນ ເພື່ອຂະຫຍາຍເຂົ້າພັກ ໂດຍຖືເອົາຄຸນນະພາບເປັນກົກ; ສັບຊ້ອນຈັດວາງພະນັກງານ ໃຫ້ສອດຄ່ອງກັບລະດັບຄວາມຮູ້, ຄວາມສາມາດ ແລະ ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂອງແຕ່ລະກົມກອງ ຕາມທິດຫັນເປັນ

ໜຸ່ມ; ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງລັດ ລວມທັງລະບຽບກົນໄກຄຸ້ມຄອງໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ບົນພື້ນຖານ ກະທັດຮັດ, ໂປ່ງໃສ, ໜັກແໜ້ນ, ມີປະສິດທິຜົນສູງ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ນອກນັ້ນ, ໃນດ້ານວິຊາສະເພາະແມ່ນ ການຮັກສາສະຖຽນລະພາບເງິນຕາແຫ່ງຊາດຖືເອົາການນໍາພາ-ຊີ້ນໍາການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ນະໂຍບາຍອັດຕາແລກປ່ຽນ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ ເປັນຈຸດສຸມໃຈກາງ ເຊິ່ງຕົ້ນຕໍແມ່ນການນໍາໃຊ້ ເຄື່ອງມືນະໂຍບາຍທາງອ້ອມໃຫ້ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ.

ຕະຫຼອດໄລຍະເຄິ່ງສະໄໝຜ່ານມາ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທຫລ ໄດ້ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະປະເທດເຮົາ ເສດຖະກິດແມ່ນຢູ່ໃນລະຫວ່າງການຟື້ນຕົວ ແລະ ຢູ່ໃນຈັງຫວະຂະຫຍາຍຕົວຊ້າ, ເນື່ອງຈາກຍັງພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ເປັນຕົ້ນແມ່ນ ໂຄງສ້າງເສດຖະກິດມະຫາພາກຍັງຂາດຄວາມສົມດູນ, ການຂາດດູນງົບປະມານ ແລະ ເງິນຕາ, ພັນທະຊໍາລະໜີ້ສິນກັບຕ່າງປະເທດສູງ, ຄັງສໍາຮອງເງິນຕາຕ່າງປະເທດຕໍ່າ ແລະ ບັນຫາການຜະລິດຍັງບໍ່ທັນແຂງແຮງ ເຊິ່ງເປັນສິ່ງທ້າທາຍໃຫຍ່ຫຼວງໃຫ້ແກ່ການຮັກສາສະຖຽນລະພາບດ້ານເງິນຕາແຫ່ງຊາດ ກໍ່ຄືສະຖຽນລະພາບຂອງເສດຖະກິດມະຫາພາກ. ແຕ່ພາຍໃຕ້ການນໍາພາ-ຊີ້ນໍາ ຢ່າງໃກ້ຊິດຕິດແທດຂອງພັກ ແລະ ລັດຖະບານ ກໍ່ຄືຂອງຄະນະພັກ, ຄະນະນໍາ ທຫລ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ສາມາດຍາດໄດ້ບາງຜົນສໍາເລັດດັ່ງນີ້:

ດ້ານການເມືອງ-ແນວຄິດ: ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານຂອງຕົນ ຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ ໂດຍສະເພາະການຈັດຕັ້ງ-ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກົດລະບຽບພັກ ສະໄໝທີ XI ແລະ ນິຕິກໍາຕ່າງໆຂອງພັກ-ລັດກໍ່ຄືມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ແລະ ໄດ້ຈັດຕັ້ງໂຄສະນາ-ປາຖະກະຖາວັນສໍາຄັນຂອງຊາດ, ຂອງພັກ ແລະ ຢ່າງເປັນປົກກະຕິ; ຖືເອົາວຽກງານແນວຄິດເປັນປົກກະຕິ ແລະ ສອດທ້ອຍເຂົ້າໃນທຸກການເຄື່ອນໄຫວວຽກງານ ຕິດພັນກັບການດໍາເນີນຊີວິດການເມືອງພາຍໃນໜ່ວຍພັກ, ຮັບປະກັນໄດ້ຄວາມສາມັກຄີ, ມີທັດສະນະຖືກຕ້ອງ, ມີຄວາມເຊື່ອໝັ້ນ ແລະ ເປັນເອກະພາບຕໍ່ແນວທາງນະໂຍບາຍຂອງພັກ, ມີຄວາມອຸ່ນອຽນທຸ່ນທ່ຽງ, ມີສະຕິຕໍ່ການຈັດຕັ້ງ ແລະ ມີຄວາມເສຍສະຫຼະຕໍ່ຜົນປະໂຫຍດສ່ວນລວມ, ຕື່ນຕົວປະຕິບັດຕາມລະບຽບການ ແລະ ແນວທາງຂອງພັກ ດ້ວຍຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃນດ້ານຕ່າງໆ.

ດ້ານການຈັດຕັ້ງ: ໄດ້ສຸມໃສ່ກໍ່ສ້າງ, ປັບປຸງພັກຕາມຫຼັກການ-ທິດນໍາຂອງພັກ ໃນນັ້ນ, ໄດ້ສໍາເລັດການປັບປຸງການຈັດຕັ້ງພັກ 40 ຮາກຖານພັກ ແລະ ສ້າງຕັ້ງໃໝ່ 3 ຮາກຖານ, ພ້ອມທັງຍຸບເລີກ 1 ຮາກຖານ ເພື່ອໃຫ້ສອດຄ່ອງກັບການປັບປຸງກົງຈັກລັດ, ສົມທົບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ປະກາດສ້າງຕັ້ງຄະນະພັກຮາກຖານທະນາຄານຢູ່ແຂວງຫຼວງນໍ້າທາ, ບໍ່ແກ້ວ ແລະ ຜົ້ງສາລີ; ໄດ້ຕີລາຄາຄຸນນະພາບຂອງການຈັດຕັ້ງຮາກຖານພັກໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ ເຊິ່ງມີໜ່ວຍພັກທີ່ຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຄື: ປີ 2020: ມີ 29 ໜ່ວຍພັກ, ປີ 2021: ມີ 26 ໜ່ວຍພັກແລະ

ປີ 2022 ມີ 24 ໜ່ວຍພັກ ຂອງໜ່ວຍພັກທີ່ໄດ້ຮັບການຕີລາຄາ; ໄດ້ຊຸກຍູ້ສ້າງເງື່ອນໄຂໃນການຈະຂະຫຍາຍອົງການຈັດຕັ້ງມະຫາຊົນ ໄປສູ່ຂົງເຂດເອກະຊົນ, ໄດ້ອອກແຈ້ງການກ່ຽວກັບການປັບປຸງໜ່ວຍພັກຮາກຖານທີ່ມີສະມາຊິກພັກສົມບູນ ແຕ່ 20 ສະຫາຍຂຶ້ນໄປ ໃຫ້ແບ່ງເປັນຫຼາຍຈຸພັກຕາມຄວາມເໝາະສົມ; ພ້ອມນັ້ນ, ໄດ້ເອົາໃຈໃສ່ຂະຫຍາຍພັກໂດຍປະຕິບັດຕາມກົດລະບຽບພັກ ເນັ້ນໃສ່ຄຸນນະພາບເປັນກົກ, ຄັດເລືອກເອົາຜູ້ທີ່ມີຜົນງານພົ້ນເດັ່ນໂດຍຜ່ານການທົດສອບໃນຂະບວນການວຽກງານຕົວຈິງ, ສາມາດເປັນກຳລັງແຮງເຂົ້າໃນວຽກງານ, ໃນນັ້ນ, ໄດ້ອະນຸມັດຮຽນສະໜັບສະໜູນ ໃຫ້ມະຫາຊົນ 230 ສະຫາຍ, ຮຽນກົດລະບຽບພັກ 354 ສະຫາຍ, ຮັບເຂົ້າເປັນສະມາຊິກພັກສຳຮອງໃໝ່ 317 ສະຫາຍ ແລະ ເລື່ອນເປັນສະມາຊິກພັກສົມບູນ 260 ສະຫາຍ, ຄົ້ນຄວ້າອອກບັດສະມາຊິກພັກສົມບູນໃຫ້ 485 ສະຫາຍ; ປະຈຸບັນ ອົງຄະນະພັກ ທຫລ ມີສະມາຊິກພັກທັງໝົດ 1.014 ສະຫາຍ, ຍິງ 491 ສະຫາຍ, ໃນນັ້ນ, ສະມາຊິກພັກສຳຮອງ 132 ສະຫາຍ, ຍິງ 74 ສະຫາຍ.

ວຽກງານພະນັກງານ: ໄດ້ສຳເລັດການສ້າງ ແລະ ຮັບຮອງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂັ້ນຄະນະບໍລິຫານງານພັກ ທຫລ ຄຸ້ມຄອງ ແລະ ຂັ້ນສູນກາງຄຸ້ມຄອງ; ໄດ້ຄົ້ນຄວ້າປັບປຸງການຈັດຕັ້ງຕຳແໜ່ງງານຕ່າງໆ ບົນພື້ນຖານຄວາມຈຳເປັນຂອງວຽກງານຕົວຈິງ ແລະ ແຜນກຳນົດພະນັກງານຂອງຕຳແໜ່ງງານກ່ຽວຂ້ອງຄື: ບັ່ງຕົວແຕ່ງຕັ້ງຮອງເລຂາຄະນະບໍລິຫານງານພັກ ທຫລ, ແຕ່ງຕັ້ງຂຶ້ນຜູ້ວ່າການ ທຫລ 01 ຄົນ, ຮອງຜູ້ວ່າການ ທຫລ 01 ຄົນ, ຊ່ວຍວຽກຄະນະຜູ້ວ່າການ ທຫລ 05 ຄົນ, ຄະນະກົມ-ທຽບເທົ່າ 95 ຄົນ, ຄະນະພະແນກ 324 ຄົນ, ຊ່ວຍວຽກພະແນກ 5 ຄົນ ແລະ ຂັ້ນຂະແໜງ 6 ຄົນ; ອະນຸຍາດໃຫ້ພະນັກງານພັກ ຮັບອຸດໜູນບຳນານ 40 ຄົນ ແລະ ບັນຈຸລັດຖະກອນໃໝ່ 110 ຄົນ. ປັດຈຸບັນພະນັກງານ ທຫລ ມີ 1.409 ຄົນ, ຍິງ 775 ຄົນ.

ວຽກປັບປຸງການຈັດຕັ້ງລັດ: ໄດ້ສຸມໃສ່ປັບປຸງກົງຈັກການຈັດຕັ້ງຂັ້ນຕ່າງໆຂອງຕົນ ຕາມທິດ: "ກະທັດຮັດ, ໂປ່ງໃສ, ໜັກແໜ້ນ, ມີປະສິດທິຜົນສູງ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ" ໃນນັ້ນ, ໄດ້ຄົ້ນຄວ້າປັບປຸງກົງຈັກຂັ້ນກົມໃຫ້ສອດຄ່ອງກັບດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ ສະບັບປັບປຸງໃໝ່ ໂດຍໄດ້ສຳເລັດການຍຸບເລີກກົມນິຕິກຳ ແລະ ສັບຊ້ອນວຽກງານຂອງກົມນິຕິກຳໄປຂຶ້ນກັບຫ້ອງການ, ໂອນວຽກຄັງເງິນສົດສະກຸນເງິນຕາຕ່າງປະເທດຈາກກົມບໍລິການທະນາຄານ ໄປຂຶ້ນກັບຄວາມຮັບຜິດຊອບຂອງກົມພິມຈຳໜ່າຍ ເພື່ອເປັນການໂຮມວຽກຄ້າຍຄືກັນໄວ້ບ່ອນດຽວກັນ, ໄດ້ສຳເລັດການຄົ້ນຄວ້າ ແລະ ປະກາດສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ; ມາຮອດປະຈຸບັນ, ການປັບປຸງພາລະບົດບາດສຳເລັດແລ້ວ 12 ກົມກອງ. ຄຽງຄູ່ກັບການປັບປຸງກົງຈັກການຈັດຕັ້ງ ທຫລ ຍັງໄດ້ກຳນົດຕຳແໜ່ງງານຄືນໃໝ່ ຕາມການປັບປຸງພາລະບົດບາດໃໝ່ຂອງແຕ່ລະກົມກອງ, ຕິດພັນກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ, ໄດ້ສຸມໃສ່ປັບປຸງພາລະບົດບາດລະຫວ່າງກົມວິຊາການ ກັບ ສາຂາ ທຫລ ປະຈຳພາກ ເພື່ອແບ່ງຂັ້ນຄຸ້ມຄອງວຽກງານວິຊາສະເພາະໃຫ້ລະອຽດ-ຈະແຈ້ງ.

ວຽກງານວິຊາສະເພາະ: ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ນັບແຕ່ກາງປີ 2021 ເປັນຕົ້ນມາ, ຄະນະບໍລິຫານງານພັກ ທຫລ ໄດ້ນຳພາ-ຊີ້ນຳປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ໃນທິດທາງທີ່ມີຄວາມຍືດຍຸ່ນຫຼາຍກວ່າເກົ່າ ໂດຍປັບປຸງການກຳນົດອັດຕາແລກປ່ຽນປະຈຳວັນ ໃຫ້ແທດເໝາະກັບສະພາບພື້ນຖານເສດຖະ

ກິດ-ເງິນຕາຫຼາຍຂຶ້ນ ແລະ ຂະຫຍາຍຂອບການກຳນົດອັດຕາແລກປ່ຽນ ທຽບກັບອັດຕາອ້າງອີງ 2 ຄັ້ງ ຈາກ ±0,25% ມາຮອດ ±4,5% ໃນທ້າຍປີ 2022 ແລະ ±7,5% ໃນເດືອນ 6/2023 ພ້ອມກັນນີ້, ໃນສະພາບທີ່ຄວາມສາມາດໃນການສະໜອງເງິນຕາຕ່າງປະເທດມີຈຳກັດ, ພາຍໃຕ້ການເຫັນດີຈາກລັດຖະບານ ໂດຍສົມທົບກັບກະຊວງການເງິນ, ຄະນະບໍລິຫານງານພັກ ທຫລ ໄດ້ຊີ້ນຳຄົ້ນຄວ້າຈັດສັນແຫຼ່ງເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອແກ້ໄຂບັນຫາຂາດແຄນນ້ຳມັນ.

ຄຽງຄູ່ກັນນັ້ນ, ການປະຕິບັດນະໂຍບາຍເງິນຕາແມ່ນຫັນຈາກທິດຜ່ອນຄາຍມາເປັນທິດທາງຮັດກຸມ (ຍ້ອນສະພາບເສດຖະກິດສາກົນມີຄວາມບໍ່ແນ່ນອນ, ທ່າອ່ຽງເງິນເຟີ້ທົ່ວໂລກເພີ່ມຂຶ້ນ ບວກກັບນະໂຍບາຍເງິນຕາຂອງຫຼາຍປະເທດມີທິດທາງຮັດກຸມ). ໃນນີ້, ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານ ສະກຸນເງິນກີບ 3 ຄັ້ງ ມາເປັນ 7,5% ຕໍ່ປີ ໃນຕົ້ນປີ 2023, ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ 2 ຄັ້ງ ມາເປັນ 5,5% ສຳລັບເງິນກີບ ແລະ 8% ສຳລັບເງິນຕາຕ່າງປະເທດ; ອອກຈຳໜ່າຍພັນທະບັດ ທຫລ ໃຫ້ແກ່ມວນຊົນ ແລະ ຈຳໜ່າຍຜ່ານຕະຫຼາດເປີດ 9.504,94 ຕື້ກີບ, ສືບຕໍ່ຈັດຕັ້ງປະຕິບັດການປະມູນພັນທະບັດຄັງເງິນຢູ່ ທຫລ, ໄດ້ສະໜອງແຫຼ່ງທຶນພາຍໃຕ້ໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ຜ່ານກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກອງທຶນພັດທະນາໄຊສົມບູນ, ໂຄງການສະໜອງທຶນໝູນວຽນ ເພື່ອສົ່ງອອກສິນຄ້າກະສິກຳ ແລະ ໂຄງການກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນໃນ ສປປ ລາວ, ແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຈຳນວນ 5.172,6 ຕື້ກີບ (ແຕ່ 2020-ເດືອນ 06/2023), ປະກອບສ່ວນແກ້ໄຂບັນຫາແຫຼ່ງທຶນ ຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດລັດ, ບັນຫາໜີ້ໂຄງການລົງທຶນຂອງລັດ ໂດຍໄດ້ຮັບຊື້ພັນທະບັດບ້ວງອ່າຍໜີ້ 3 ແຈ ຈຳນວນໜຶ່ງ.

ການຄຸ້ມຄອງລະບົບການຊຳລະ: ຄະນະບໍລິຫານງານພັກ ທຫລ ໄດ້ຊີ້ນຳການພັດທະນາວຽກງານຄຸ້ມຄອງລະບົບການຊຳລະ ໃນນີ້, ສຳເລັດການຜັນຂະຫຍາຍຍຸດທະສາດພັດທະນາລະບົບການຊຳລະຂອງຂະແໜງທະນາຄານ-ການເງິນໄລຍະ 5 ປີ (2021-2025), ໄດ້ຄົ້ນຄວ້າການປັບປຸງກົດໝາຍວ່າດ້ວຍລະບົບການຊຳລະ ຊຶ່ງໄດ້ສຳເລັດນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ (ຂັ້ນຜູ້ວ່າການ 03 ສະບັບ ແລະ ຂັ້ນກົມ 03 ສະບັບ), ສ້າງຄູ່ມືການຕິດຕາມກວດກາລະບົບການຊຳລະຂ້າມແດນ, ລົງກວດກາກັບທີ່ຜູ້ຄວບຄຸມລະບົບການຊຳລະ ແລະ ຜູ້ໃຫ້ບໍລິການຊຳລະສຳເລັດເກີນແຜນ, ຄົ້ນຄວ້າຄວາມເປັນໄປໄດ້ໃນການອອກສະກຸນເງິນດິຈິຕອນຂອງທະນາຄານກາງ, ໄດ້ອອກໃບອະນຸຍາດໃຫ້ບໍລິການຊຳລະຂອງທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ນິຕິບຸກຄົນ 39 ກໍລະນີ, ອະນຸຍາດທົດລອງສ້າງຕັ້ງສູນຊື້-ຂາຍເງິນຄຣິບໂຕ 2 ແຫ່ງ; ຊຸກຍູ້ພັດທະນາລະບົບການຊຳລະທຸລະກຳຍ່ອຍ ຜ່ານແອັບພິເຄຊັ່ນເທິງໂທລະສັບມືຖື ໂດຍການນຳໃຊ້ມາດຕະຖານ Lao QR Code; ຊຸກຍູ້ການພັດທະນາລະບົບການຊຳລະງົບປະມານດິຈິຕອນ ແບບລວມສູນຜ່ານລະບົບທະນາຄານ.

ວຽກງານພັດທະນາຕະຫຼາດທຶນ: ໄດ້ຊີ້ນຳຈັດຕັ້ງປະຕິບັດຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030), ປັບປຸງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິສັດຫຼັກຊັບແບບຕີລາຄາຄວາມສ່ຽງ, ສືບຕໍ່ພັດທະນາຕະຫຼາດທຶນພາຍ

ໃນປະເທດໃຫ້ເຂັ້ມແຂງ ແລະ ມີຫຼາກຫຼາຍຜະລິດຕະພັນ, ອະນຸຍາດບໍລິສັດຈົດທະບຽນອອກຮຸ້ນກູ້ຢູ່ພາຍໃນ ໄດ້ 1 ກໍລະນີ ມູນຄ່າ 3 ລ້ານໂດລາ, ຂາຍພັນທະບັດລັດຖະບານໄດ້ 4.038,39 ຕື້ກີບ, ສືບຕໍ່ລະດົມທຶນທັງພາຍໃນ ແລະ ຕ່າງປະເທດ, ນັບແຕ່ 2021-05/2023 ສາມາດລະດົມທຶນ ໄດ້ 11.488,97 ຕື້ກີບ ເຮັດໃຫ້ຍອດລະດົມທຶນຜ່ານຕະຫລາດທຶນທັງໝົດມີຈຳນວນ 34.941,59 ຕື້ກີບ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ອົງຄະນະພັກ ທຫລ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂເປັນຕົ້ນແມ່ນ: ການສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກພັກ-ພະນັກງານ ເຖິງວ່າໄດ້ເຮັດຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການ, ແຕ່ໃນຕົວຈິງຢູ່ຫຼາຍຮາກຖານພັກ ຍັງບໍ່ທັນເລິກເຊິ່ງ ແລະ ແທດເຖິງກັບຈຸດພິເສດຂອງບາງຮາກຖານພັກ; ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນແຕ່ລະປີ ໂດຍລວມບັນລຸຕາມແຜນການ, ແຕ່ຍັງບໍ່ທັນຮັບປະກັນຄຸນນະພາບຢ່າງແທ້ຈິງ ແລະ ການຂະຫຍາຍພັກເຖິງແມ່ນວ່າໄດ້ມີຈຳນວນທີ່ເພີ່ມຂຶ້ນໄວພໍສົມຄວນ ແຕ່ຄຸນນະພາບຂອງການນຳພາຂອງບາງຮາກຖານພັກ ບໍ່ມີຄວາມພົ້ນເດັ່ນ;

ການປັບປຸງກົງຈັກການຈັດຕັ້ງລັດ ມີຄວາມຊັກຊ້າ, ກົງຈັກທີ່ໄດ້ຮັບການປັບປຸງແລ້ວ ຂອດການປະຕິບັດພັດແກ່ຍາວ; ໃນການບຳລຸງ-ກໍ່ສ້າງພະນັກງານທີ່ຢູ່ໃນແຜນກຳນົດ ຍັງເຮັດບໍ່ທັນໄດ້ຢ່າງແຂງແຮງ; ການປະເມີນແຜນກຳນົດພະນັກງານຕຳແໜ່ງງານຕ່າງໆຍັງຊັກຊ້າ, ການຄົ້ນຄວ້າສ້າງພະນັກງານສະເພາະດ້ານ ຍັງຈຳກັດ; ດ້ານວຽກງານວິຊາສະເພາະ: ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຍັງມີຄວາມອ່ອນໄຫວ, ບອບບາງ ໂດຍສະເພາະການຄຸ້ມຄອງເງິນຕາຕ່າງປະເທດຍັງບໍ່ທັນຮັດກຸມ ການຄຸ້ມຄອງປະລິມານເງິນ ບໍ່ທັນເຂັ້ມງວດ, ຄັງສຳຮອງເງິນຕາຕ່າງປະເທດຢູ່ໃນລະດັບຕ່ຳ ແລະ ການບໍລິຫານບໍ່ທັນໄດ້ດີ ເຮັດໃຫ້ອັດຕາແລກປ່ຽນເງິນກີບອ່ອນຄ່າຫຼາຍຢ່າງຕໍ່ເນື່ອງ ແລະ ຢູ່ໃນຈັງຫວະທີ່ໄວ ຊຶ່ງສົ່ງຜົນໃຫ້ເງິນເຟີ້ ເພີ່ມຂຶ້ນໃນລະດັບທີ່ສູງສຸດໃນຮອບ 2 ທົດສະວັດກວ່າຊຶ່ງກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນໂດຍກົງ.

ການປະຕິບັດກົດໝາຍຄຸ້ມຄອງເງິນຕາຕ່າງປະເທດບໍ່ທັນເຂັ້ມງວດ, ການຕິດຕາມກວດກາ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ ຍັງບໍ່ທັນທົ່ວເຖິງ ແລະ ເດັດຂາດ; ການອະນຸມັດຮ້ານແລກປ່ຽນເງິນຕາແຕ່ຂາດການຄຸ້ມຄອງທີ່ຮັດກຸມ, ບໍ່ທັນເຂັ້ມງວດໃນການປະຕິບັດກົດໝາຍ ທຫລ; ການຄຸ້ມຄອງສິນເຊື່ອທີ່ປ່ອຍຍັງບໍ່ທັນໄດ້ດີ ເກີດໜີ້ສິນທວງຍາກ ແລະ ບໍ່ສາມາດເກັບກູ້ໄດ້ຈຳນວນໜຶ່ງ; ການຈັດຕັ້ງປະຕິບັດບາງຕົວເລກຄາດໝາຍທາງດ້ານເງິນຕາ-ການເງິນ ບັນລຸຕາມແຜນການດ້ານປະລິມານ ແຕ່ດ້ານຄຸນນະພາບຍັງບໍ່ທັນປະຕິບັດໄດ້ເຕັມສ່ວນ; ການພັດທະນາລະບົບການຊຳລະ ເຖິງແມ່ນວ່າໄດ້ຮັບການພັດທະນາຢ່າງກວ້າງຂວາງ, ທັນສະໄໝ ຢ່າງເຕັມສ່ວນ, ແຕ່ຍັງບໍ່ທັນເນັ້ນໜັກໃຫ້ເປັນເຄື່ອງມືຊຸກຍູ້ການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ ກົງກັນຂ້າມ ການຊຳລະທີ່ທັນສະໄໝສ່ວນໜຶ່ງ ໄດ້ກາຍເປັນຊ່ອງຫວ່າງໃຫ້ແກ່ສັງຄົມນຳໃຊ້ໃນການແລກປ່ຽນ ແລະ ໂອນເງິນເຂົ້າອອກ ສປປ ລາວ ບໍ່ສອດຄ່ອງຕາມກົດໝາຍ.

ເພື່ອສືບຕໍ່ແກ້ໄຂບັນດາຂໍ້ຄົງຄ້າງດັ່ງກ່າວ ອົງຄະນະພັກ ທຫລ ໄດ້ວາງທິດທາງແຜນການຕໍ່ໜ້າຄື: ເອົາໃຈໃສ່ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານໃຫ້ຫຼາຍຂຶ້ນ ເພື່ອໃຫ້ກຳແໜ້ນບັນດາແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງຕ່າງໆ

ໂດຍສະເພາະຕິດພັນກັບວຽກງານການເງິນ-ເງິນຕາ; ສືບຕໍ່ສຶກສາອົບຮົມແນວຄິດຕໍ່ຖັນແຖວສະມາຊິກພັກ-ພະນັກງານ ໃຫ້ເລິກເຊິ່ງ ແລະ ເປັນປົກກະຕິຕໍ່ເນື່ອງ ຕາມ 3 ລັກສະນະຂອງພັກ; ເອົາໃຈໃສ່ກໍ່ສ້າງປັບປຸງພັກ ໃຫ້ສອດຄ່ອງກັບກົດລະບຽບພັກ, ຊຸກຍູ້ການປະເມີນ ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ສາມາດໄດ້ຮັບຮອງໃຫ້ໄດ້ຢ່າງໜ້ອຍ 50% ຂອງຈຳນວນໜ່ວຍພັກທີ່ໄດ້ຮັບການປະເມີນ; ຄັດເລືອກມະຫາຊົນກ້າວໜ້າຜູ້ທີ່ມີຜົນງານດີເດັ່ນ ເຂົ້າເປັນສະມາຊິກພັກໃໝ່ ໂດຍຖືເອົາຄຸນນະພາບເປັນກົກ.

ສືບຕໍ່ປະຕິບັດລະບອບແບບແຜນການນຳພາຕາມຫຼັກການຂອງພັກ, ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຄະນະພັກທຸກຂັ້ນ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ທັດສະນະ "ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບຂອງພະນັກງານທຸກຕຳແໜ່ງງານໃຫ້ແຂງແຮງກວ່າເກົ່າ; ສືບຕໍ່ຄົ້ນຄວ້າສ້າງເປັນແຜນການລະອຽດກ່ຽວກັບການສັບຊ້ອນ-ຈັດວາງເປົ້າໝາຍທີ່ຢູ່ໃນແຜນກຳນົດເຂົ້າໃນຕຳແໜ່ງງານນຳພາ-ຄຸ້ມຄອງຕົວຈິງໂດຍເລັ່ງໃສ່ເປົ້າໝາຍໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ, ຄົ້ນຄວ້າຂຶ້ນແຜນການສັບປ່ຽນໝູນວຽນບ່ອນປະຈຳການ ຂອງພະນັກງານຕຳແໜ່ງງານຕ່າງໆຂອງ ທຫລ ສຳນັກງານໃຫຍ່, ສາຂາ ທຫລ ປະຈຳພາກ ແລະ ທະນາຄານທຸລະກິດລັດ ເພື່ອຮຽນຮູ້ວຽກງານຕົວຈິງທີ່ກ່ຽວຂ້ອງ.

ດ້ານວຽກງານວິຊາສະເພາະ ສືບຕໍ່ຊີ້ນຳຄຸ້ມຄອງປະລິມານເງິນໃຫ້ຢູ່ໃນລະດັບທີ່ເໝາະສົມ ດ້ວຍນະໂຍບາຍເງິນຕາແບບປະສົມປະສານຕາມທິດທາງຮັດກຸມກວ່າເກົ່າ ເພື່ອຫຼຸດຜ່ອນແຮງກົດດັນຕໍ່ອັດຕາແລກປ່ຽນ ແລະ ອັດຕາເງິນເຟີ້; ສືບຕໍ່ຊີ້ນຳຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ; ເອົາໃຈໃສ່ຊີ້ນຳຊຸກຍູ້ການພັດທະນາລະບົບການຊຳລະໃຫ້ທັນສະໄໝ ແລະ ປອດໄພ ໂດຍໃຫ້ສຳເລັດການປັບປຸງກົດໝາຍວ່າດ້ວຍການຊຳລະ ແລະ ນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ; ຊຸກຍູ້ການຫັນເປັນທັນສະໄໝໃນການຊຳລະ ແລະ ການເກັບລາຍຮັບງົບປະມານແຫ່ງລັດ ຕາມແຜນການທີ່ກຳນົດໄວ້.

ສັງລວມແລ້ວ, ຜ່ານການນຳພາ-ຊີ້ນຳ ໃນໄລຍະເຄິ່ງສະໄໝຜ່ານມາ ຂອງອົງຄະນະພັກ ທຫລ ເຖິງວ່າສາມາດຍາດໄດ້ຜົນງານ, ຜົນສຳເລັດຢ່າງຕັ້ງໜ້າຫຼາຍດ້ານ ແຕ່ກໍຍັງມີສິ່ງທ້າທາຍທົດສອບຫຼາຍດ້ານ ທີ່ຄະນະພັກ ຄະນະນຳ ທຫລ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບຂອງຕົນຢ່າງຕັ້ງໜ້າ ໃນການສືບຕໍ່ປັບປຸງແກ້ໄຂ ໂດຍສະເພາະສະພາບແນວຄິດຂອງພະນັກງານ-ສະມາຊິກພັກ ໂດຍລວມມີຄວາມໜັກແໜ້ນ, ອຸ່ນອຽນທຸ່ນທ່ຽງ ແລະ ເຊື່ອໝັ້ນຕໍ່ການນຳພາຂອງການຈັດຕັ້ງທຸກຂັ້ນ,ເປັນເຈົ້າການຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງແນວທາງນະໂຍບາຍຂອງພັກ, ການປັບປຸງກໍ່ສ້າງພັກ ໄດ້ຮັບການປັບປຸງໃຫ້ສອດຄ່ອງກັບກົດລະບຽບພັກ, ໂຄງປະກອບບຸກຄະລາກອນໃນແຕ່ລະຕຳແໜ່ງງານ ໂດຍລວມໄດ້ຮັບການປັບປຸງຢ່າງຄົບຖ້ວນ ແລະ ກົງຈັກການຈັດຕັ້ງແຕ່ລະຂັ້ນໄດ້ຮັບການປັບປຸງໃຫ້ສອດຄ່ອງກັບພາລະບົດບາດໃໝ່ໃນແຕ່ລະໄລຍະ ເພື່ອໃຫ້ສາມາດເຄື່ອນໄຫວມີປະສິດທິຜົນກວ່າເກົ່າ. ໃນດ້ານວຽກງານວິຊາສະເພາະ ໂດຍລວມຍັງຮັກສາສະຖຽນລະພາບໄດ້ໂດຍພື້ນຖານ ລະບົບທະນາຄານໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ລະບົບການຊຳລະໄດ້ຮັບການພັດທະນາໃຫ້ທັນສະໄໝ ແລະ ກວ້າງຂວາງຂຶ້ນໃນລະດັບດີພໍສົມຄວນ...ຯ

ການກໍ່ສ້າງ, ປັບປຸງການຈັດຕັ້ງຮາກຖານພັກ ຂອງອົງຄະນະພັກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ໂດຍ: ປາໃນ ວຽງວິໄລ

ການກໍ່ສ້າງການຈັດຕັ້ງຮາກຖານພັກ ແມ່ນວຽກງານໜຶ່ງທີ່ສຳຄັນ ໃນການເຊີດຊູບົດບາດ ແລະ ຍົກສູງຄວາມສາມາດນຳພາຂອງພັກ ຢູ່ບັນດາຮາກຖານພັກໃຫ້ສູງຂຶ້ນ ເພື່ອເປັນການຮັບປະກັນໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍຂອງລັດໃຫ້ປະສົບຜົນສຳເລັດແຕ່ລະໄລຍະ. ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ເວົ້າວ່າ: ສືບຕໍ່ກໍ່ສ້າງການຈັດຕັ້ງຮາກຖານພັກ ແລະ ປັບປຸງແບບແຜນວິທີເຮັດວຽກການຈັດຕັ້ງຮາກຖານພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ເພື່ອແນໃສ່ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນແກນນຳໃນລະບົບການເມືອງ.

ເພື່ອຜັນຂະຫຍາຍເນື້ອໃນຈິດໃຈ ມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ລວງເລິກ, ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄັ້ງທີ VI ໄດ້ກຳນົດທິດທາງ, ແຜນການຕໍ່ໜ້າໄວ້ວ່າ: ສືບຕໍ່ສ້າງ ແລະ ປັບປຸງພັກໃຫ້ເຂັ້ມແຂງທາງດ້ານການຈັດຕັ້ງ, ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ ພາຍໃນພັກໃຫ້ໜັກແໜ້ນ, ເສີມຂະຫຍາຍປະຊາທິປະໄຕຢູ່ພາຍໃນພັກ ຕິດພັນກັບຄວາມຮັບຜິດຊອບ ແລະ ຄວາມເຂັ້ມງວດໃນການປະຕິບັດກົດລະບຽບພັກ, ເອົາໃຈໃສ່ດຳເນີນຊີວິດການເມືອງເປັນປົກກະຕິ, ຕີຖອຍໄດ້ແນວຄິດຈິ່ງຈຽມບໍ່ກ້າຫານຕຳນິຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ; ຕ້ານປະກົດການອາຍາສິດ, ແນວຄິດຊ້າຍດຽວ, ຜົນປະໂຫຍດກຸ່ມກ້ອນ; ຕັ້ງໜ້ານຳພາການປັບປຸງ ແລະ ກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳ ເຮັດໃຫ້ການຈັດຕັ້ງຮາກຖານພັກ ທົ່ວອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີຄວາມເຂັ້ມແຂງເທື່ອລະກ້າວ, ສຸມໃສ່ກໍ່ສ້າງການຈັດຕັ້ງຮາກຖານພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ຖືກຕ້ອງເຂັ້ມງວດ ແລະ ຮັບປະກັນຄຸນນະພາບ ເພື່ອບັນລຸຊິດໝາຍ ສະເລ່ຍໃຫ້ໄດ້ 85% ຂຶ້ນໄປຂອງຈຳນວນໜ່ວຍພັກທັງໝົດ.

ອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແມ່ນອົງການຈັດຕັ້ງພັກ ຂັ້ນສູນກາງທີ່ຢູ່ພາຍໃຕ້ການນຳພາ-ຊີ້ນຳໂດຍກົງ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ມີແບບແຜນນຳພາ, ວິທີເຮັດວຽກທີ່ມີລັກສະນະວິທະຍາສາດ ແລະ ໄດ້ຮັບການປັບປຸງແຕ່ລະໄລຍະ ເພື່ອສືບຕໍ່ຊີ້ນຳ-ນຳພາການຈັດຕັ້ງປະຕິບັດໜ້າທີ່ການເມືອງໃນຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.

ຄະນະພັກກະຊວງໄດ້ເອົາໃຈໃສ່ນຳພາ-ຊີ້ນຳ, ຊຸກຍູ້ຄະນະຮັບຜິດຊອບສ້າງໜ່ວຍພັກປອດໃສ, ເຂັ້ມ

ແຂງ, ໜັກແໜ້ນ ຂອງອົງຄະນະພັກກະຊວງເຄື່ອນໄຫວຕາມພາລະບົດບາດ,ໜ້າທີ່ຂອງຕົນຢ່າງໃກ້ຊິດ ແລະ ຄະນະຮັບຜິດຊອບສ້າງໜ່ວຍປອດໃສ, ເຂັ້ມແຂງ, ໜັກແໜ້ນ ກໍ່ໄດ້ສ້າງແຜນການເຄື່ອນໄຫວໂດຍໄດ້ແບ່ງຄວາມຮັບຜິດຊອບພາຍໃນຄະນະຮັບຜິດຊອບລະອຽດເພື່ອລົງເລິກຊຸກຍູ້, ຕິດຕາມ ແລະ ກວດກາປະເມີນຜົນແຜນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງບັນດາຮາກຖານພັກດ້ວຍຄວາມຮັບຜິດຊອບສູງ, ບວກກັບຄວາມຮັບຜິດຊອບຂອງບັນດາໜ່ວຍພັກໄດ້ເຮັດໃຫ້ຂະບວນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທົ່ວອົງຄະນະພັກກະຊວງໄລຍະ 01 ປີຜ່ານມາໄດ້ຮັບຜົນສຳເລັດ ຕາມຄາດໝາຍທີ່ວາງໄວ້ ເຊິ່ງສະແດງອອກຄືດັ່ງນີ້:

- ດ້ານການເມືອງ-ແນວຄິດ: ໄດ້ເອົາໃຈໃສ່ນຳພາ-ຊີ້ນຳບັນດາໜ່ວຍພັກ ໃນການເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເປັນປົກກະຕິ ແລະ ແຂງແຮງ ໂດຍສຸມໃສ່ຈັດຕັ້ງເຜີຍແຜ່, ເຊື່ອມຊຶມບັນດາແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ; ຈັດຕັ້ງການປາຖະກະຖາເລົ່າມູນເຊື້ອວັນປະຫວັດສາດທີ່ສຳຄັນຂອງພັກ-ຂອງຊາດ ໃຫ້ພະນັກງານ-ສະມາຊິກພັກ ທົ່ວອົງຄະນະພັກ ໄດ້ທັງໝົດ 9 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.195 ເທື່ອຄົນ, ຍິງ 555 ເທື່ອຄົນ. ພ້ອມນັ້ນຍັງໄດ້ແຈ້ງການນຳໃຫ້ບັນດາຮາກຖານພັກ ຈັດຕັ້ງເຊື່ອມຊຶມມະຕິກອງປະຊຸມແຕ່ລະໄລຍະ, ແຕ່ລະຄັ້ງຢ່າງເປັນປົກກະຕິ ແລະ ເອກະສານວັນສຳຄັນຕ່າງໆຈຳນວນໜຶ່ງ ເຊິ່ງໄດ້ເຮັດໃຫ້ພະນັກງານ-ສະມາຊິກພັກມີຄວາມຮັບຮູ້ເຂົ້າໃຈເປັນເອກະພາບ ເຊື່ອໝັ້ນຕໍ່ການນຳພາ ຂອງພັກ, ມີການຫັນປ່ຽນດີຂຶ້ນ, ເປັນເຈົ້າຝຶກຝົນຫຼໍ່ຫຼອມຕົນເອງ, ຮັກສາໄດ້ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈບຸກບືນປະຕິວັດ, ມີສະຕິລະວັງຕົວຕໍ່ສູ້ປົກປັກຮັກສາແນວທາງນະໂຍບາຍຂອງພັກ, ມີຄວາມສາມັກຄີເປັນເອກະພາບພາຍໃນການຈັດຕັ້ງ ພ້ອມກັນສຸມໃສ່ປະຕິບັດໜ້າທີ່ການເມືອງ, ໜ້າທີ່ວິຊາສະເພາະດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຢ່າງຕໍ່ເນື່ອງ.

- ດ້ານການຈັດຕັ້ງ: ໄດ້ເອົາໃຈໃສ່ນຳພາປັບປຸງການຈັດຕັ້ງພັກ ຢູ່ບັນດາຮາກຖານພັກ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ຕາມ 5 ຫຼັກການ, 3 ທິດນຳຂອງພັກ ເສີມຂະຫຍາຍໄດ້ລັກສະນະນຳໜ້າຂອງການຈັດຕັ້ງພັກ, ສະມາຊິກພັກ, ຍົກສູງມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວດຳລົງຊີວິດດ້ວຍຄວາມປອດໃສ ແລະ ເປັນເຈົ້າການຕ້ານປະກົດການຫຍໍ້ທໍ້ຕ່າງໆ. ບັນດາການຈັດຕັ້ງຮາກຖານໄດ້ຮັບການປັບປຸງ ແລະ ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດຂອງຕົນ, ເອົາໃຈໃສ່ຕິດຕາມ, ຊຸກຍູ້ບັນດາຮາກຖານພັກ ໃນການຂະຫຍາຍມະຫາຊົນຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນເຂົ້າພັກ ໂດຍປະຕິບັດຖືກຕ້ອງຕາມບາດກ້າວ, ຂັ້ນຕອນຂອງການຂະຫຍາຍທີ່ກຳນົດໄວ້ໃນກົດລະບຽບພັກຢ່າງເຂັ້ມງວດ, ຜ່ານການກໍ່ສ້າງ ແລະ ຂະຫຍາຍພັກໃນໄລຍະຜ່ານມາໄດ້ມີຜົນສຳເລັດຄື: ໄດ້ຮຽນເອກະສານສະໜັບສະໜູນໃຫ້ມະຫາຊົນກ້າວໜ້າ 23 ສະຫາຍ, ຍິງ 10 ສະຫາຍ;ຮຽນກົດລະບຽບພັກ 31 ສະຫາຍ, ຍິງ 16 ສະຫາຍ; ຮັບມະຫາຊົນກ້າວໜ້າເຂົ້າເປັນສຳຮອງ 28 ສະຫາຍ, ຍິງ 16 ສະຫາຍ,ເລື່ອນສະມາຊິກພັກສຳຮອງເຂົ້າເປັນສົມບູນ 7 ສະຫາຍ, ຍິງ 4 ສະຫາຍ ແລະ ຍົກຍ້າຍສະມາຊິກພັກ ໄປຮ່ວມຊີວິດພັກຢູ່ໜ່ວຍພັກໃໝ່ 53 ສະຫາຍ, ຍິງ 28 ສະຫາຍ, ຮັບເອົາສະມາຊິກພັກສົມບູນມາຈາກໜ່ວຍພັກອື່ນ 2 ສະຫາຍ; ຈັດຊຸດເຝິກອົບຮົມທິດສະດີການເມືອງ ແລະ ການປົກຄອງ

ໄລຍະສັ້ນ 45 ວັນ ຊຸດທີ 6 ປະຈຳປີ 2022 ແລະ ຈັດຝຶກອົບຮົມວຽກກໍ່ສ້າງພັກ-ພະນັກງານ ແລະ ວຽກງານປ້ອງກັນພັກ ປະຈຳປີ 2022 ໃຫ້ບັນດາຄະນະໜ່ວຍພັກທີ່ວອີງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ການປັບປຸງກົງຈັກການຈັດຕັ້ງພັກ ກໍໄດ້ມີການປັບປຸງຕາມທິດກະທັດຮັດ ຕາມນິຕິກຳຂອງຂັ້ນເທິງທີ່ໄດ້ກຳນົດໄວ້ ເປັນຕົ້ນໄດ້ມອບ-ໂອນການຈັດຕັ້ງຈຳນວນໜຶ່ງຄະນະພັກຮາກຖານອົງການກາແດງແຫ່ງຊາດລາວ ໄປຂຶ້ນກັບອົງຄະນະພັກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ໂຮມ 2 ໜ່ວຍພັກ (ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແລະ ໜ່ວຍພັກສູນບໍລິການຈັດຫາງານ) ມາເປັນໜ່ວຍພັກກົມການຈັດຫາງານ; ປັບປຸງໜ່ວຍພັກສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ ມາເປັນໜ່ວຍພັກສະຖາບັນພັດທະນາສີມືແຮງງານ; ປັ່ງຕົວແຕ່ງຕັ້ງເລຂາໜ່ວຍພັກຫ້ອງການອົງການກາແດງລາວ, ຮອງເລຂາໜ່ວຍພັກກົມການຈັດຫາງານ, ຮອງເລຂາໜ່ວຍພັກກົມສັງຄົມສົງເຄາະ, ຮອງເລຂາ ແລະ ກຳມະການໜ່ວຍພັກສະຖາບັນພັດທະນາສີມືແຮງງານ.

ປະຈຸບັນ, ອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີການຈັດຕັ້ງຮາກຖານພັກຂຶ້ນກັບທັງໝົດ 11 ຮາກຖານພັກ, ມີສະມາຊິກພັກທັງໝົດ 289 ສະຫາຍ, ຍິງ 127 ສະຫາຍ. ໃນນັ້ນ, ສະມາຊິກພັກສົມບູນ 261 ສະຫາຍ, ຍິງ 111 ສະຫາຍ, ສຳຮອງ 28 ສະຫາຍ, ຍິງ 16 ສະຫາຍ, ທຽບໃສ່ປີຜ່ານມາຫຼຸດລົງ 34 ສະຫາຍ.

- ດ້ານແບບແຜນນຳພາ ແລະ ວິທີເຮັດວຽກ: ໄດ້ປັບປຸງ ແລະ ຍົກສູງບົດບາດການນຳພາ ທີ່ວອີງຄະນະພັກກະຊວງ ໂດຍຍຶດໝັ້ນການນຳພາ-ຊີ້ນຳຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ໂດຍໄດ້ປັບປຸງຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບເປັນມະຕິຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ປັບປຸງຂໍ້ກຳນົດວ່າດ້ວຍທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ລະບອບແບບແຜນນຳພາ ແລະ ວິທີເຮັດວຽກຂອງຄະນະພັກກະຊວງ ແລະ ສ້າງແຜນການເຄື່ອນໄຫວວຽກຂອງຄະນະບໍລິຫານງານພັກກະຊວງ ປະຈຳປີ. ພ້ອມນີ້, ກໍໄດ້ສ້າງແຜນໃຫ້ບັນດາສະຫາຍຄະນະປະຈຳພັກກະຊວງພັດປ່ຽນເຂົ້າຮ່ວມດຳເນີນຊີວິດພັກນຳບັນດາໜ່ວຍພັກເພື່ອຮັບຟັງ ແລະ ສະເໜີແນະໃນການປັບປຸງເນື້ອໃນ ແລະ ຮູບການຮ່ວມຊີວິດພັກ ປະຈຳເດືອນ ໃຫ້ມີເນື້ອໃນເລິກເຊິ່ງ ແລະ ເປັນປົກກະຕິ; ສືບຕໍ່ປັບປຸງຂອດປະສານງານລະຫວ່າງຄະນະພັກຂັ້ນຕ່າງໆ ແລະ ການເຮັດບົດບາດນຳພາຂອງພັກກັບການຄຸ້ມຄອງຂອງລັດໃຫ້ມີຄວາມຊັດເຈນກວ່າເກົ່າ.

ຈາກສະພາບການດັ່ງກ່າວໄດ້ເຮັດໃຫ້ການຈັດຕັ້ງພັກ ມີຄວາມສະຫງົບຢູ່ພາຍໃນການຈັດຕັ້ງພັກ, ມີຄວາມສາມັກຄີ; ປະຕິບັດລະບອບປະຊຸມຂອງຄະນະພັກ, ໜ່ວຍພັກ ເພື່ອຄົ້ນຄວ້າ, ປຶກສາຫາລືຮັບຮອງເອົາມະຕິ, ເປັນເອກະພາບ, ເປັນລາຍລັກອັກສອນ, ສ້າງແຜນການເຄື່ອນໄຫວວຽກງານພັກ-ພະນັກງານ ວຽກງານບໍລິຫານລັດ, ມີການຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານສ່ອງແສງຢ່າງເປັນປົກກະຕິ.

- ວຽກງານກວດກາ ເອົາໃຈໃສ່ ແລະ ຖືສຳຄັນຕໍ່ວຽກກວດກາ ໂດຍຖືເອົາວຽກງານກວດກາແມ່ນໜຶ່ງໃນແບບແຜນການນຳພາຂອງຄະນະພັກກະຊວງ ແລະ ຂຶ້ນກັບການຊີ້ນຳ ແລະ ຮັບຜິດຊອບໂດຍກົງຂອງສະຫາຍຮອງເລຂາຄະນະພັກຕາມພາລະບົດບາດ ຕິດພັນກັບວຽກປ້ອງກັນພັກ, ປ້ອງກັນພະນັກງານ, ການສະກັດ

ກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ; ຕິດຕາມ, ຊຸກຍູ້ ແລະ ກວດກາບັນດາໜ່ວຍພັກ, ຄະນະພັກຮາກຖານ ແລະ ສະມາຊິກພັກ ໃນການຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ລະບຽບກົດໝາຍຕ່າງໆຂອງລັດ, ການປັບປຸງແບບແຜນວິທີນຳພາ, ແບບແຜນວິທີເຮັດວຽກ ແລະ ການຮ່ວມຊີວິດພັກ ປະຈຳເດືອນຂອງບັນດາໜ່ວຍພັກ ແລະ ການນຳພາຊີ້ນຳການຈັດຕັ້ງປະຕິບັດແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ປີ 2022; ຜ່ານການກວດກາ, ຕີລາຄາ ແລະ ປະເມີນການຈັດຕັ້ງປະຕິບັດແຜນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ຂອງບັນດາໜ່ວຍພັກ ໄດ້ຈຳນວນ 15 ໜ່ວຍພັກ, ສາມາດຮັບຮອງເປັນໜ່ວຍພັກແຂງຈຳນວນ 14 ໜ່ວຍ, ກວມເອົາ 93,33%, ໜ່ວຍພັກກາງຈຳນວນ 01 ໜ່ວຍ, ກວມເອົາ 6,66%; ຕີລາຄາ ແລະ ປະເມີນສະມາຊິກພັກ, ມີສະມາຊິກພັກແຂງທັງໝົດ 276 ສະຫາຍ, ຍິງ 123 ສະຫາຍ, ເທົ່າກັບ 93,24% ຂອງຈຳນວນສະມາຊິກພັກທັງໝົດ; ກາງ 20 ສະຫາຍ, ຍິງ 9 ສະຫາຍ, ເທົ່າກັບ 6,75% ຂອງຈຳນວນສະມາຊິກພັກທັງໝົດ, ບໍ່ມີປະເພດອ່ອນ ແລະ ເສຍທາດ

ຄຽງຄູ່ດ້ານຕັ້ງໜ້າ ແລະ ຜົນສຳເລັດການກໍ່ສ້າງການຈັດຕັ້ງຮັກຖານພັກ ແລະ ປັບປຸງແບບແຜນວິທີເຮັດວຽກ ມີບາງດ້ານຕ້ອງປັບປຸງແກ້ໄຂດັ່ງນີ້:

1). ພະນັກງານ-ສະມາຊິກພັກ ຈຳນວນໜຶ່ງມີແນວຄິດຄອນແຄນ, ເຊື່ອມຖອຍ, ບໍ່ມີຄວາມໜັກ ແໜ້ນທາງດ້ານການເມືອງ-ແນວຄິດ, ບໍ່ມີຄວາມຫ້າວຫັນຕໍ່ການປະຕິບັດໜ້າທີ່ການເມືອງ ເຮັດໃຫ້ມີພະນັກງານຈຳນວນບໍ່ໜ້ອຍສະເໜີລາອອກຈາກລັດຖະກອນ.

2). ການຈັດຕັ້ງຮາກຖານພັກເຖິງວ່າຈະມີການປັບປຸງດີຂຶ້ນກໍຕາມ, ແຕ່ກໍ່ມີບາງບັນຫາຕັ້ງຂຶ້ນທີ່ຍັງບໍ່ທັນໄດ້ຮັບການປັບປຸງ ເປັນຕົ້ນແມ່ນ ການປະຕິບັດບົດບາດ ເປັນແກນນຳຂອງການຈັດຕັ້ງພັກ ບໍ່ທັນສົມຄູ່ກັບຄວາມຮັບຜິດຊອບໜ້າທີ່ການເມືອງ; ແບບແຜນວິທີເຮັດວຽກຂອງໜ່ວຍພັກຈຳນວນໜຶ່ງບໍ່ທັນມີການຫັນປ່ຽນທີ່ຕັ້ງໜ້າ ຍັງມີລັກສະນະນຳພາແບບລວມໆ, ເວົ້າຫຼາຍ ເຮັດໜ້ອຍ, ບໍ່ມີຈຸດສຸມ, ບໍ່ໄປຕາມແຜນການທີ່ກຳນົດ, ບາງຄັ້ງມີຊີ້ນຳ, ແຕ່ພັດຂາດການຕິດຕາມເຮັດໃຫ້ບາງວຽກມີລັກສະນະແກ່ຍາວ ບໍ່ໄດ້ຮັບການແກ້ໄຂຢ່າງທັນການເທົ່າທີ່ຄວນ.

3). ວຽກງານຂະຫຍາຍພັກຍັງບໍ່ທັນຮັບປະກັນໄດ້ດ້ານຄຸນນະພາບ , ບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ເຊິ່ງສະແດງອອກການຊີ້ນຳວຽກງານຂະຫຍາຍພັກຂອງຄະນະໜ່ວຍພັກຈຳນວນໜຶ່ງ ລັກສະນະຊັກຊ້າ, ແກ່ຍາວ, ບໍ່ໄປຕາມກົດລະບຽບພັກທີ່ກຳນົດໄວ້ກົງກັນຂ້າມບາງໜ່ວຍພັກພັດມີລັກສະນະຮີບຮ້ອນຈົນເກີນໄປ ເຊິ່ງເຮັດໃຫ້ປະລິມານເພີ່ມ, ແຕ່ບໍ່ໄດ້ຄຸນນະພາບ.

4). ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຖິງວ່າຈະມີຄຳສັ່ງ, ຄຳແນະນຳ ກໍ່ຕາມ, ແຕ່ການຈັດຕັ້ງຜັນຂະຫຍາຍຂອງບາງໜ່ວຍພັກຍັງບໍ່ທັນເຮັດໄດ້ດີ ສະແດງອອກກຳນົດເວລາການປະເມີນໜ່ວຍພັກໃນເດືອນ 11 ຂອງແຕ່ລະປີ, ແຕ່ໃນການຈັດຕັ້ງປະຕິບັດຕົວຈິງບັນດາໜ່ວຍພັກລໍຖ້າແຕ່ການຊີ້ນຳຂອງຄະນະພັກກະຊວງ ຈຶ່ງຈັດຕັ້ງປະຕິບັດເຊິ່ງເຮັດໃຫ້ຊັກຊ້າແກ່ຍາວເວລາບໍ່ທັນຕາມກຳນົດເວລາທີ່ຂັ້ນເທິງວາງອອກ;

ເພື່ອເຮັດໃຫ້ການກໍ່ສ້າງການຈັດຕັ້ງຮາກຖານພັກ, ການປັບປຸງແບບແຜນນຳພາ ແລະ ວິທີເຮັດວຽກໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ, ທົ່ວເຖິງຮັບປະກັນໄດ້ດ້ານປະລິມານ ແລະ ຄຸນນະພາບ ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ,

ໜັກແໜ້ນ ຈະໄດ້ສຸມໃສ່ບາງຈຸດສຸມຄື:

ໜຶ່ງ, ເພີ່ມທະວີເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກເປັນປົກກະຕິ ແລະ ມີເນື້ອໃນທີ່ເລິກເຊິ່ງ ເພື່ອຍົກສູງໃຫ້ພະນັກງານ-ສະມາຊິກພັກມີຫຼັກໝັ້ນການເມືອງໜັກແໜ້ນ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມອົດທົນ, ຫ້າວຫັນ ແລະ ມີຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່ການເມືອງຂອງຕົນ; ກໍາໄດ້ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເພື່ອສາມາດເຕົ້າໂຮມຄວາມສາມັກຄີພາຍໃນໃຫ້ມີຄວາມໜັກແໜ້ນ, ສຸມສະຕິປັນຍາ, ຄວາມຮູ້-ຄວາມສາມາດ ເພື່ອເຮັດສໍາເລັດໜ້າທີ່ການເມືອງຢ່າງມີປະສິດທິຜົນ.

ສອງ, ການປັບປຸງແບບແຜນການນໍາພາ ແລະ ວິທີເຮັດວຽກຂອງຄະນະພັກແຕ່ລະຂັ້ນ ໂດຍຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ. ເພີ່ມທະວີຍົກສູງບົດບາດການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດຢູ່ຮາກຖານພັກແຕ່ລະຂັ້ນໃນການວາງແຜນຍຸດທະສາດ, ການເພີ່ມທະວີຄວາມຮັບຜິດຊອບ, ກ້າຄິດກ້າເຮັດ ແລະ ກ້າຮັບຜິດຊອບຕໍ່ໜ້າທີ່ໄດ້ຮັບການມອບໝາຍເປັນພື້ນຖານໃຫ້ການປະຕິບັດໜ້າທີ່ການເມືອງມີຜົນສໍາເລັດ.

ສາມ, ເພີ່ມທະວີ ແລະ ເອົາໃຈໃສ່ຊີ້ນໍາ-ນໍາພາວຽກງານຂະຫຍາຍພັກໃຫ້ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ປະຕິບັດຕາມກົດລະບຽບພັກ ສະໄໝທີ XI ວາງອອກຢ່າງເຂັ້ມງວດ, ໂດຍມີການເລືອກເຟັ້ນ ໃຫ້ໄດ້ຜູ້ດີເດັ່ນ, ຜູ້ທີ່ຫ້າວຫັນ, ມີລະບຽບວິໄນ, ມີຄວາມຈົງຮັກພັກດີຕໍ່ກັບລະບອບການເມືອງຢ່າງແທ້ຈິງ ເພື່ອຂະຫຍາຍເຂົ້າພັກ.

ສີ່, ຄະນະໜ່ວຍພັກຕ້ອງໄດ້ເພີ່ມທະວີການເອົາໃຈໃສ່ຕໍ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນໜ້າທີ່ການເມືອງທີ່ສໍາຄັນຂອງຕົນ ເພື່ອຍົກສູງບົດບາດເປັນແກນນໍາຂອງພັກຢູ່ແຕ່ລະຂັ້ນທັງມີການຂັບເຄື່ອນໃຫ້ໄປຕາມ ແຜນທີ່ວາງໄວ້ ແລະ ຕາມກໍານົດເວລາການປະເມີນ, ຕາມຄໍາສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງ ແລະ ໜັກແໜ້ນ, ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກ ເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018 ວ່າດ້ວຍການຈັດຕັ້ງປະຕິບັດຄໍາສັ່ງຂອງກົມການເມືອງສູນກາງພັກ ເລກທີ 01/ກມສພ, ລົງວັນທີ 30 ມັງກອນ 2018.

ເວົ້າລວມແລ້ວ, ການປັບປຸງ, ກໍ່ສ້າງການຈັດຕັ້ງຮາກຖານພັກແມ່ນວຽກງານສໍາຄັນ, ເປັນວຽກຍຸດທະສາດຂອງພັກ ທັງແມ່ນຄວາມຈໍາເປັນພາວະວິໄສ ເພື່ອຮັບປະກັນເຮັດໃຫ້ການນໍາພາຂອງພັກຕອບສະໜອງໄດ້ກັບການເລັ່ງທວງຂອງໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ ສະນັ້ນ, ຄະນະພັກທຸກຂັ້ນ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນເນື້ອໃນຄໍາສັ່ງກ່ຽວກັບການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຄໍາແນະນໍາຕ່າງໆໃຫ້ເລິກເຊິ່ງ, ຫັນເປັນແຜນງານໂຄງການ, ຄາດໝາຍສູ້ຊົນຂອງອົງຄະນະພັກຂັ້ນຕົນ ເວົ້າລວມ, ເວົ້າສະເພາະຢູ່ອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕ້ອງໄດ້ເອົາໃຈໃສ່ຕິດຕາມ, ກວດກາ ແລະ ຊຸກຍູ້ບັນດາໜ່ວຍພັກຂອງຕົນເພື່ອເສີມຂະຫຍາຍບົດບາດຄວາມສາມາດນໍາພາ ແລະ ຄວາມເປັນແບບຢ່າງນໍາໜ້າຂອງຄະນະພັກແຕ່ລະຂັ້ນ, ເຊີດຊູຄວາມຮັບຮັບຜິດຊອບໜ້າທີ່ການເມືອງ; ເປັນແບບຢ່າງນໍາໜ້າໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດ ກໍຄືມະຕິກອງປະຊຸມຜູ້ແທນອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄັ້ງທີ VI ຢ່າງມີຜົນສໍາເລັດເທື່ອລະກ້າວ...ຯ

ຄະນະພັກຫ້ອງວ່າການແຂວງຫົວພັນ ເອົາໃຈໃສ່ປັບປຸງການຈັດຕັ້ງຮາກຖານພັກ ຕິດພັນກັບການປະຕິບັດໜ້າທີ່ການເມືອງ

ໂດຍ: ຕຸ້ຍ ສຸລິເດດ

ເພື່ອສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ນໍາເອົາປະເທດຊາດ ກ້າວຂຶ້ນສູ່ຈຸດໝາຍແຫ່ງຄວາມຈະເລີນວັດທະນາດ້ວຍທ່ວງທ່າອັນໜັກແໜ້ນ ພັກຈໍາເປັນຕ້ອງໄດ້ຍົກສູງຄວາມສາມາດ ແລະ ເພີ່ມທະວີບົດບາດການນໍາພາຂອງພັກຕໍ່ທຸກຂົງເຂດວຽກງານ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ໄດ້ກໍານົດໄວ້ວ່າ: ສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນແກນນໍາໃນລະບົບການເມືອງ ແລະ ເພື່ອຮັບປະກັນເຮັດໃຫ້ເນື້ອໃນຈິດໃຈດັ່ງກ່າວ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງທົ່ວເຖິງ ແລະ ກວ້າງຂວາງ; ພັກປະຊາຊົນປະຕິວັດລາວ ກໍ່ຄືກົມການເມືອງສູນກາງພັກ ໄດ້ອອກຄໍາສັ່ງ ເລກທີ 01/ກມສພ ວ່າດ້ວຍການເພີ່ມທະວີກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍ້ອນເຫັນໄດ້ຄວາມສໍາຄັນວຽກງານດັ່ງກ່າວ ຄະນະບໍລິຫານງານພັກແຂວງຫົວພັນ ໄດ້ມອບໃຫ້ຄະນະຈັດຕັ້ງແຂວງຫົວພັນ ອອກນິຕິກໍາເພື່ອຈັດຕັ້ງຜັນຂະຫຍາຍໃຫ້ແທດຕົວຈິງກັບສະພາບຈຸດພິເສດຂອງທ້ອງຖິ່ນຕົນ ເຊິ່ງໃນນັ້ນຄະນະພັກຮາກຖານຫ້ອງວ່າການແຂວງຫົວພັນ ໄດ້ຖືເອົາການຈັດຕັ້ງບັນດານິຕິກໍາດັ່ງກ່າວ ໃນການປັບປຸງຕົນເອງຕິດພັນກັບການປະຕິບັດໜ້າທີ່ການເມືອງຂອງຕົນ.

ຫ້ອງວ່າການແຂວງຫົວພັນ ເປັນການຈັດຕັ້ງໃນໂຄງປະກອບກົງຈັກຂອງອົງຄະນະພັກ ແລະ ອົງການປົກຄອງແຂວງ, ມີຖານະທຽບເທົ່າກັບຄະນະຂອງພັກ, ພະແນກ ແລະ ອົງການລັດທຽບເທົ່າພະແນກຂອງອົງການປົກຄອງແຂວງ; ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະບໍລິຫານງານພັກ, ຄະນະປະຈໍາພັກແຂວງ, ເລຂາພັກແຂວງ-ຮອງເລຂາພັກແຂວງ, ອົງການປົກຄອງແຂວງ, ເຈົ້າແຂວງ-ຮອງເຈົ້າແຂວງໃນການອໍານວຍ, ຄວບຄຸມ, ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຄະນະບໍລິຫານງານພັກ ແລະ ອົງການປົກຄອງແຂວງ, ສ້າງແຜນການ, ໂຄງການດໍາເນີນງານ, ຄົ້ນຄວ້າສັງລວມ, ຊຸກຍູ້, ຄຸ້ມຄອງເອກະສານເປັນໃຈກາງການພົວພັນປະສານງານກັບອົງການຈັດຕັ້ງຂອງພັກ-ລັດຂັ້ນສູນກາງ, ບັນດາພະແນກການອ້ອມຂ້າງແຂວງ, ບັນດາເມືອງ, ອົງການຈັດຕັ້ງຕ່າງໆ; ເປັນຜູ້ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານຂອງການນໍາ

ແຂວງ ແລະ ນຳພາ-ຊີ້ນຳ, ຄຸ້ມຄອງ-ບໍລິຫານວຽກງານພາຍໃນຫ້ອງວ່າການແຂວງ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ: ທຸກການເຄື່ອນໄຫວເປັນເສນາທິການຂອງຫ້ອງວ່າການແມ່ນມີຜົນກະທົບໂດຍກົງຂອງຄຸນນະພາບ ແລະ ປະສິດທິຜົນຂອງການເຄື່ອນໄຫວໃນການນຳພາ-ຊີ້ນຳ, ການບໍລິຫານຄຸ້ມຄອງ ແລະ ການແກ້ໄຂວຽກງານຕ່າງໆຂອງຄະນະພັກ ແລະ ອົງການປົກຄອງທຸກຂັ້ນ. ສຸມໃສ່ຍົກສູງຄຸນພາບວຽກງານເສນາທິການ, ທັນເອົາວຽກງານເຂົ້າສູ່ລະບຽບ ແລະ ນຳໃຊ້ເຕັກນິກທັນສະໄໝເທື່ອລະກ້າວ.

ດັ່ງນັ້ນ, ການເປັນເສນາທິການໃຫ້ແກ່ການນຳໃນແຕ່ລະຂັ້ນ ປຽບເໝືອນເປັນມັນສະໝອງຂອງພັກ, ການເປັນເສນາທິການເຂັ້ມແຂງໃຫ້ຄະນະພັກ ແລະ ອົງການປົກຄອງທຸກຂັ້ນກໍ່ເຂັ້ມແຂງໃນການນຳພາ-ຊີ້ນຳ, ການບັນຊາຄຸ້ມຄອງທີ່ເປັນກຳລັງແຮງສູ້ຮົບ ແລະ ລັກສະນະນຳໜ້າຂອງການເປັນເສນາທິການໄດ້; ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ກຳນົດຢ່າງຈະແຈ້ງວ່າ: ເພື່ອຍົກສູງຄວາມສາມາດນຳພາ, ກຳລັງສູ້ຮົບ ແລະ ລັກສະນະນຳໜ້າຂອງພັກນັ້ນ ຕ້ອງໄດ້ເອົາໃຈໃສ່ປັບປຸງພາລະບົດບາດຂອງການຈັດຕັ້ງພັກ ຢູ່ບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນໃຫ້ສອດຄ່ອງກັບບົດບາດເປັນແກນນຳໃນລະບົບການເມືອງ, ພ້ອມນັ້ນ ຕ້ອງຍົກສູງຄຸນນະພາບຂອງອົງການ ແລະ ບຸກຄະລາກອນທີ່ເປັນເສນາທິການຂອງພັກ-ລັດ. ສະນັ້ນ, ການຍົກສູງຄຸນນະພາບຂອງການເປັນເສນາທິການຮັບໃຊ້ການນຳແມ່ນການສ້າງ, ການປັບປຸງ, ຍົກສູງຄຸນນະພາບຂອງການຈັດຕັ້ງພາລະບົດບາດ, ສິດ ແລະ ໜ້າທີ່ຕ່າງໆຂອງຫ້ອງວ່າການ; ທັງແມ່ນຂະບວນວິວັດແຫ່ງການປັບປຸງປ່ຽນແປງ, ດັດແປງ ແລະ ແກ້ໄຂສິ່ງຄົງຄ້າງ, ສິ່ງທີ່ບໍ່ທັນແທດເໝາະກັບສະພາບແວດລ້ອມ ແລະ ສະພາບອັດຕັນໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ຫ້ອງວ່າການແຂວງຫົວພັນ ປະກອບມີ 4 ຂະແໜງຄື: ຂະແໜງຄຸ້ມຄອງບໍລິຫານ, ພິທີການ ແລະ ການເງິນ, ຂະແໜງຄົ້ນຄວ້າສັງລວມ, ຂະແໜງກໍ່ສ້າງຮາກຖານການເມືອງ ແລະ ຂະແໜງຈັດຕັ້ງ-ກວດກາ, ປະຈຸບັນມີພະນັກງານ 42 ຄົນ, ຍິງ 16 ຄົນ ໃນນັ້ນມີຫົວໜ້າ 1 ຄົນ, ຮອງຫົວໜ້າ 5 ຄົນ, ຫົວໜ້າຂະແໜງ 4 ຄົນ ແລະ ຮອງຫົວໜ້າຂະແໜງ 9 ຄົນ; ລະດັບວິຊາສະເພາະປະລິນຍາໂທ 2 ຄົນ; ປະລິນຍາຕີ 28 ຄົນ, ຍິງ 15 ຄົນ; ຊັ້ນສູງ 10 ຄົນ; ຊັ້ນຕົ້ນ 2 ຄົນ; ມີສະມາຊິກພັກສົມບູນຈຳນວນ 74 ສະຫາຍ, ຍິງ 22 ສະຫາຍ, ລະດັບທິດສະດີການເມືອງຂັ້ນສູງ 6 ທ່ານ, ຂັ້ນກາງ 17 ທ່ານ, ຂັ້ນຕົ້ນ 3 ທ່ານ.

ໄລຍະຜ່ານມາຄະນະພັກ, ຄະນະນຳຫ້ອງວ່າການປົກຄອງແຂວງ ໄດ້ຖືເອົາການນຳພາວຽກງານການເມືອງ-ແນວຄິດເປັນກົກໄປພ້ອມກັບການນຳເອົາເອກະສານສຳຄັນຕ່າງໆມາຈັດຕັ້ງເຜີຍແຜ່ຮ່ຳຮຽນຢ່າງເປັນປົກກະຕິ ຖືເອົາການດຳເນີນຊີວິດການເມືອງພາຍໃນພັກເປັນການປົກສາຫາລື, ກວດກາການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພະນັກງານ-ສະມາຊິກພັກໃນແຕ່ລະເດືອນ ເພື່ອສຳຫຼວດກວດກາ, ຕີລາຄາແບ່ງປະເພດສະມາຊິກພັກ-ພະນັກງານ ເຮັດໃຫ້ທໍ່ຮາກຖານພັກສາມາດຍົກລະດັບຄວາມຮູ້, ຄວາມສາມາດໃນການບໍລິຫານວຽກງານສູງຂຶ້ນ ແລະ ກຳໄດ້ແນວທາງແຜນນະໂຍບາຍຂອງພັກ, ເຊີດຊູບົດບາດການນຳພາຂອງພັກ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ຍົກສູງນ້ຳໃຈຮັກຊາດ, ຮັກລະບອບໃໝ່, ມີຄວາມຫ້າວຫັນ, ເປັນເຈົ້າການຍົກສູງສະຕິເຄົາລົບລະບຽບກົດໝາຍໃຫ້ສູງຂຶ້ນ, ສະ

ຕິຄວາມຮັບຜິດຊອບ ແລະ ຕັ້ງໜ້າເຮັດໜ້າທີການເມືອງທີ່ຂັ້ນເທິງມອບໝາຍໃຫ້ສຳເລັດຜົນຢ່າງມີຄຸນນະພາບເທື່ອລະກ້າວ.

ວຽກງານປັບປຸງກົງຈັກການຈັດຕັ້ງ: ການຈັດຕັ້ງຮາກຖານພັກຫ້ອງວ່າການແຂວງໄດ້ຮັບການປັບປຸງ ຢ່າງຕໍ່ເນື່ອງໂດຍຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ເຊິ່ງສະແດງອອກຄື: ປັບປຸງຂະແໜງການພາຍໃນຫ້ອງວ່າການແຂວງຕາມທິດຂອງຂັ້ນເທິງ, ຈາກ 5 ຂະແໜງໂຮມເຂົ້າເປັນ 4 ຂະແໜງການ, ຢູ່ພາຍໃນຮາກຖານພັກ, ດ້ານກົງຈັກຂອງຮາກຖານພັກໄດ້ມີການປັບປຸງ, ໃນນັ້ນແຍກ ແລະ ສ້າງຕັ້ງໜ່ວຍພັກຫ້ອງວ່າການແຂວງອອກເປັນ 2 ໜ່ວຍຄື: ໜ່ວຍພັກຄົ້ນຄວ້າ-ສັງລວມ, ໜ່ວຍພັກບໍລິຫານ, ຮັບເອົາໜ່ວຍພັກອົງການກາແດງຈາກຮາກຖານພັກພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງຂຶ້ນກັບຮາກຖານພັກຫ້ອງວ່າການແຂວງ, ໂອນໜ່ວຍພັກຫ້ອງການ ປກຊ-ປກສ ໄປຂຶ້ນກັບອົງຄະນະພັກກອງບັນຊາການທະຫານແຂວງ ໂອນໜ່ວຍພັກອົງການພັດທະນາ ແລະ ບໍລິຫານຕົວເມືອງໄປຂຶ້ນກັບອົງຄະນະພັກເມືອງຊຳເໜືອ ປະຈຸບັນໄດ້ມີ 04 ໜ່ວຍພັກທີ່ຂຶ້ນກັບຮາກຖານພັກ, ນອກນີ້ບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານກໍ່ຍັງໄດ້ປັບປຸງ-ສັບຊ້ອນບາງຕຳແໜ່ງງານເຊັ່ນ: ຫົວໜ້າ, ຮອງຫົວໜ້າ, ຂະແໜງການ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ວຽກງານພະນັກງານ: ສະມາຊິກພັກ, ພະນັກງານໄດ້ມີໂອກາດໄປສຶກສາ ແລະ ຍົກລະດັບທິດສະດີການເມືອງ 13 ສະຫາຍ, ວິຊາສະເພາະ 2 ສະຫາຍ, ຝຶກອົບຮົມໃນດ້ານຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ 17 ຄັ້ງ ມີຜູ້ເຂົ້າຮ່ວມ 22 ສະຫາຍ ເຊິ່ງເຮັດໃຫ້ພະນັກງານ, ສະມາຊິກພັກມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດ, ສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ວຽກງານຄຸ້ມຄອງພະນັກງານ-ລັດຖະກອນກໍ່ໄດ້ຫັນເຂົ້າສູ່ລະບົບທັນສະໄໝເທື່ອລະກ້າວ, ດຳເນີນການປັບປຸງຕຳແໜ່ງງານຢ່າງເປັນລະບົບແທດເໝາະກັບໜ້າວຽກຕົວຈິງ, ຄົ້ນຄ້ວາ, ທຽບຂັ້ນ-ຂັ້ນເງິນເດືອນເປັນປົກກະຕິ, ທັນຕາມກຳນົດເວລາ.

ວຽກງານວິຊາສະເພາະ: ຂອງຫ້ອງວ່າການແຂວງຍາມໃດກໍໄດ້ເຊີດຊູພາລະບົດບາດເປັນໃຈກາງໃນການພົວພັນ ປະສານງານກັບຂະແໜງການ, ເປັນໃຈກາງປະສານງານລະຫວ່າງຂັ້ນເທິງກັບຂັ້ນລຸ່ມ, ລະຫວ່າງຂັ້ນລຸ່ມກັບຂັ້ນເທິງ, ປະຕິບັດລະບອບສ່ອງແສງລາຍງານປົກກະຕິ, ລະບອບການປະສານງານມີຄວາມວ່ອງໄວຂຶ້ນກວ່າເກົ່າ ສະແດງໃຫ້ເຫັນວ່າລະບອບການປະສານງານຂອງຫ້ອງວ່າການແຕ່ລະຂັ້ນແມ່ນໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ ລະຫວ່າງຫ້ອງວ່າການແຂວງກັບຂັ້ນເທິງ, ຕະຫຼອດຮອດພະແນກການ, ອົງການທຽບເທົ່າຂັ້ນແຂວງ, ບັນດາເມືອງ ແລະ ປະຊາຊົນບັນດາເຜົ່າ. ພ້ອມກັນນັ້ນ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ການນຳແຂວງເປັນຕົ້ນແມ່ນ ທາງດ້ານເນື້ອໃນນັບທັງຂົງເຂດວຽກພັກ ແລະ ວຽກລັດເຊັ່ນ: ການກະກຽມກອງປະຊຸມຕ່າງໆ ເປັນຕົ້ນກອງປະຊຸມຄະນະບໍລິຫານງານພັກແຂວງ ໄດ້ 5 ຄັ້ງ, ກອງປະຊຸມປົກຄອງໄດ້ 2 ຄັ້ງ, ກອງປະຊຸມຄະນະປະຈຳພັກແຂວງ ໄດ້ 5 ຄັ້ງ, ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ໄດ້ 4 ຄັ້ງ, ກອງປະຊຸມປະທານ-ຮອງປະທານ ຄະນະກຳມະທິການ ປກຊ-ປກສ ແຂວງໄດ້ 1 ຄັ້ງ ແລະ ກອງປະຊຸມອື່ນໆ, ການບັນທຶກ

ກອງປະຊຸມ, ການກະກຽມພິທີພົບປະທາງການຕ່າງໆ, ການຄົ້ນຄວ້າ, ກວດແກ້, ວິເຄາະ, ວິໄຈບັນຫາຕ່າງໆ ໃນກິດຈະກຳປະຈຳວັນ ເຮັດໃຫ້ການນຳຕັດສິນບັນຫາໄວຂຶ້ນ ແລະ ມີຄວາມຊັດເຈນ. ພ້ອມກັນນັ້ນ, ຍັງໄດ້ເປັນເຈົ້າການໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດນິຕິກຳຕ່າງໆຂອງພັກ-ລັດ, ທິດຊີ້ນຳຂອງກອງປະຊຸມຄະນະບໍລິຫານງານ, ກອງປະຊຸມປົກຄອງ, ກອງປະຊຸມຄະນະປະຈຳພັກແຂວງ, ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງຕະຫຼອດຮອດທິດຊີ້ນຳຂອງການນຳແຂວງຢ່າງເປັນປົກກະຕິ.

ແບບແຜນການນຳພາ: ໄດ້ເອົາໃຈໃສ່ປັບປຸງແບບແຜນນຳພາ, ວິທີເຮັດວຽກຂອງຕົນໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ມີວິທະຍາສາດ, ສົມທົບແໜ້ນລະຫວ່າງການເພີ່ມທະວີການນຳພາຂອງພັກກັບການເຊີດຊູຄວາມສັກສິດໃນການຄຸ້ມຄອງລັດ ແລະ ເສີມຂະຫຍາຍບົດບາດເປັນເຈົ້າຂອງອົງການຈັດຕັ້ງມະຫາຊົນ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະບຸກຄົນຮັບຜິດຊອບຢ່າງເຂັ້ມງວດ, ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ແລະ ໃນໝູ່ມະຫາຊົນຢ່າງກວ້າງຂວາງເຮັດໃຫ້ພາຍໃນພັກມີຄວາມສາມັກຄີເປັນເອກະພາບໄດ້ກາຍເປັນໃຈກາງໃນການເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ເປັນກຳລັງແຮງໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ປະຕິບັດລະບອບດຳເນີນຊີວິດການເມືອງພາຍໃນພັກຢ່າງເປັນປົກກະຕິ, ຍົກສູງນ້ຳໃຈຕຳໜິຕົນເອງ ແລະ ຕຳໜິກັນຢູ່ສະເໝີ, ການພົວພັນປະສານສົມທົບລະຫວ່າງຄະນະພັກ ແລະ ອົງການຈັດຕັ້ງມະຫາຊົນກໍໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

ຈາກຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ບັນຫາທີ່ຕັ້ງຂຶ້ນໃນການນຳພາຂອງຄະນະພັກ, ຄະນະນຳໃນການປັບປຸງການຈັດຕັ້ງຮາກຖານພັກຢູ່ຫ້ອງວ່າການແຂວງໃນໄລຍະຜ່ານມາຍັງມີບາງບັນຫາຈະຕ້ອງສືບຕໍ່ເພີ່ມທະວີຄື:

1). ການສຶກສາອົບຮົມການເມືອງ-ແນວຄິດ ແລະ ການຈັດຕັ້ງເຊື່ອມຊຶມບັນດາມະຕິ, ຄຳສັ່ງໃນບາງຄັ້ງບໍ່ທັນເລິກເຊິ່ງ ແລະ ແທດເຖິງທຸກເປົ້າໝາຍຢ່າງແທ້ຈິງ, ການນຳພາແກ້ໄຂສະພາບປາກົດການຫຍໍ້ທໍ້ໃນຫ້ອງວ່າການແຂວງບໍ່ທັນຂາດຕົວ; ວຽກງານການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນເຮັດເປັນຂະບວນການໃນທົ່ວທຸກຮາກຖານພັກ.

2). ສະມາຊິກພັກ-ພະນັກງານຈຳນວນໜຶ່ງ ຍັງຖືເບົາໃນການການສ້າງແຜນດຳເນີນງານ, ສ່ວນໃຫຍ່ແມ່ນອີງໃສ່ແຕ່ທິດຊີ້ນຳ ແລະ ຄຳສັ່ງຂອງຂັ້ນເທິງໃນການເຄື່ອນໄຫວ.

3). ການຕິດຕາມ, ກວດກາການຈັດຕັ້ງຜັນຂະຫຍາຍ ບັນດາມະຕິ, ຄຳສັ່ງ ແລະ ທິດຊີ້ນຳຂອງຂັ້ນເທິງຍັງບໍ່ທັນເຮັດໄດ້ເປັນປົກກະຕິ, ຕໍ່ເນື່ອງ, ປະສິດທິພາບບໍ່ທັນສູງ, ການລາຍງານສະພາບບໍ່ຖືກຕ້ອງກັບສະພາບຄວາມເປັນຈິງ, ການຮັກສາຄວາມລັບ ຍັງເຮັດບໍ່ທັນໄດ້ດີ ແລະ ການຮັບໃຊ້ການນຳບາງຄັ້ງຍັງຊັກຊ້າ.

ເພື່ອປັບປຸງການຈັດຕັ້ງຮາກຖານພັກຫ້ອງວ່າການໃຫ້ມີຄວາມເຂັ້ມແຂງ ແລະ ສືບຕໍ່ຮັກສາມູນເຊື້ອ ແລະ ເສີມຂະຫຍາຍຜົນສຳເລັດຂອງການເປັນເສນາທິການທີ່ດີໃຫ້ແກ່ຄະນະພັກ, ການນຳຂອງແຂວງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການ, ເປັນໃຈກາງປະສານງານ ເພື່ອຮັບໃຊ້ການນຳ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ວຽກງານວິຊາສະເພາະໃນໄລຍະໃໝ່ນັ້ນ

ຄວນສຸມໃສ່ບາງວຽກດັ່ງລຸ່ມນີ້:

ໜຶ່ງ, ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກໃຫ້ທົ່ວເຖິງ ແລະ ເລິກເຊິ່ງ, ສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານທຸກຄົນມີຄວາມຮູ້ກ່ຽວກັບທິດສະດີມາກ-ເລນິນ, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ຍົກສູງຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ-ພະນັກງານໃນທຸກຂົງເຂດວຽກງານ, ພ້ອມກັນນັ້ນ, ກໍ່ຕອບຕ້ານການໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີເພື່ອປົກປ້ອງລັດທິມາກ-ເລນິນ ແລະ ແນວທາງນະໂຍບາຍຂອງພັກ-ລັດ.

ສອງ, ຄະນະພັກ, ຄະນະນຳຫ້ອງວ່າການແຂວງຕ້ອງເປັນເຈົ້າການໃນການປັບປຸງການຈັດຕັ້ງຮາກຖານພັກ ໂດຍຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນປັດໄຈພື້ນຖານຕິດພັນກັບການຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໄປຄຽງຄູ່ການການຕິດຕາມ, ກວດກາ, ຕີລາຄາຄືນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພະນັກງານ-ສະມາຊິກພັກ ຊອກໃຫ້ເຫັນໄດ້ດ້ານຕັ້ງໜ້າ, ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງຂອງພະນັກງານ-ສະມາຊິກພັກ ເພື່ອເປັນເອກະພາບປຶກສາຫາລື, ຊອກຫາທາງໃນການປັບປຸງແກ້ໄຂໄປພ້ອມກັບການປະຕິບັດນະໂຍບາຍຍ້ອງຍໍຜູ້ທີ່ມີຜົນງານທີ່ພົ້ນເດັ່ນໃນການປະຕິບັດໜ້າທີ່ວຽກງານ.

ສາມ, ຄະນະພັກ, ຄະນະໜ່ວຍພັກ ຕ້ອງຍົກສູງແບບແຜນວິທີເຮັດວຽກແບບໃໝ່ ແມ່ນແນໃສ່ຮັກສາຫຼັກການລວມສູນປະຊາທິປະໄຕໃນການດຳເນີນຊີວິດພັກໃຫ້ເຂັ້ມງວດ, ເສີມຂະຫຍາຍປະຊາທິປະໄຕຢ່າງແທ້ຈິງ, ພ້ອມກັນນັ້ນກໍ່ຮັບປະກັນການນຳພາແບບລວມສູນ; ຕ້ອງກຳນົດເປັນລະບຽບການຕົວຈິງແຫ່ງການເຄື່ອນໄຫວເລີ່ມຈາກສະພາບຄວາມເປັນຈິງຂອງແຕ່ລະໜ່ວຍພັກ, ມີການກວດ, ກາຕີລາຄາ, ແບ່ງປະເພດຄຸນນະພາບຂອງຮາກຖານພັກໃຫ້ຖືກຕ້ອງ, ຊັດເຈນ, ຊອກເຫັນດ້ານຕັ້ງໜ້າ ແລະ ຂໍ້ຄົງຄ້າງຂອງແຕ່ລະຮາກຖານພັກ ເພື່ອເປັນບ່ອນອີງເຂົ້າໃນການຄົ້ນຄວ້າວາງແຜນປັບປຸງ ແລະ ແກ້ໄຂ, ສົມທົບແໜ້ນລະຫວ່າງການນຳພາ-ຊີ້ນຳຂອງຄະນະພັກຂັ້ນເທິງກັບການເສີມຂະຫຍາຍຄວາມຕື່ນຕົວເປັນເຈົ້າການຂອງຄະນະໜ່ວຍພັກ ແລະ ສະມາຊິກພັກ ເພື່ອປັບປຸງໜ່ວຍພັກຂອງຕົນໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນໃນທຸກດ້ານ.

ສັງລວມແລ້ວ, ການປັບປຸງການຈັດຕັ້ງຮາກຖານພັກຫ້ອງວ່າການແຂວງ ຕິດພັນກັບການຈັດຕັງປະຕິບັດໜ້າທີ່ການເມືອງແມ່ນຄວາມຈຳເປັນພາວະວິໄສທີ່ຄະນະພັກ, ການຈັດຕັ້ງພັກທຸກຂັ້ນຕ້ອງຍົກສູງຄວາມຮັບຜິດຊອບຂອງຕົນ ເຊິ່ງການເພີ່ມທະວີການນຳພາຂອງພັກ ເຂົ້າໃນການປັບປຸງຄຸນນະພາບຂອງຄະນະໜ່ວຍພັກ ແລະ ສະມາຊິກພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພາ, ການເຄື່ອນໄຫວ ໃຫ້ຖືກຕ້ອງຕາມຫຼັກການ, ທິດນຳໃນການກໍ່ສ້າງ ແລະ ປັບປຸງພັກທີ່ກຳນົດໄວ້ໃນກົດລະບຽບພັກທັງຮັບປະກັບການປະຕິບັດພາລະບົດບາດ, ໜ້າທີ່ໃນການເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະນຳ, ສ້າງໃຫ້ໄດ້ບຸກຄະລາກອນມີຄວາມຮູ້, ຄວາມສາມາດ, ມີປະສົບການ, ມີຈັນຍາບັນ-ຈັນຍາທຳ ແລະ ມີຄວາມຊ່ຽວຊານ ເພື່ອສ້າງສິ່ງທີ່ເອື້ອອຳນວຍຄວາມສະດວກໃນການເຄື່ອນໄຫວຂອງວຽກງານເສນາທິການໃຫ້ແກ່ການນຳຂອງພັກ ແລະ ລັດໃນການນຳພາຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບ ແລະ ກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ ເທື່ອລະກ້າວ..ຯ

ບາງຜົນງານການນຳພາຂອງອົງຄະນະພັກເມືອງ ໜອງບົກ ແຂວງຄຳມ່ວນ ໃນໄລຍະກາງສະໄໝ ທີ IX

ໂດຍ: ສ. ສິດໃສ

ເມືອງໜອງບົກ ແມ່ນເມືອງໜຶ່ງໃນບັນດາ 10 ຕົວເມືອງຂອງແຂວງຄຳມ່ວນ, ຕັ້ງຢູ່ທິດໃຕ້ຂອງແຂວງ ໄລຍະທາງ 35 ກິໂລແມັດທິດເໜືອຕິດກັບເມືອງທ່າແຂກ, ທິດໃຕ້ຕິດກັບເມືອງໄຊບູລີ ແຂວງສະຫວັນນະເຂດ, ທິດຕາເວັນອອກຕິດກັບເມືອງເຊບັ້ງໄຟ ແລະ ທິດຕາເວັນຕົກຕິດກັບເມືອງທາດພະນົມ (ປະເທດໄທ) ມີແມ່ນ້ຳຂອງເປັນຊາຍແດນ; ຕັ້ງຢູ່ໃນເຂດນິເວດດ້ານພູມສາດທີ່ອຸດົມສົມບູນ, ສະຫຼັບສັບຊ້ອນໄປດ້ວຍສິ່ງແວດລ້ອມທາງທຳມະຊາດ ແລະ ພູມອາກາດທີ່ເໝາະສົມດີ, ມີທັດສະນີຍະພາບສວຍງາມໂດດເດັ່ນ, ຕັ້ງຢູ່ໃນເຂດທົ່ງພຽງອັນກວ້າງໃຫຍ່ສຸດສາຍຕາມີແຫຼ່ງຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ເຊິ່ງເປັນອູ່ເຂົ້າອູ່ປາ, ມີບໍ່ແຮ່ທາດຕ່າງໆ, ມີສາຍນ້ຳເຊບັ້ງໄຟຍາວຢຽດໄຫຼຄົດໂຄ້ງອ້ອມກອດເນື້ອທີ່ທົ່ງພຽງໄຫຼຕົກໃສ່ແມ່ນ້ຳຂອງບໍລິເວນ; ເມືອງໜອງບົກ ໄດ້ຮັບນາມມະຍົດເປັນເມືອງວິລະຊົນປະຊາຊົນບັນດາເຜົ່າມີມູນເຊື້ອຮັກຊາດ, ມີຄວາມອົງອາດກ້າຫານຕໍ່ສູ້ບໍ່ຍອມຈຳນົນ ເພື່ອພາລະກິດປະຕິວັດຂອງພັກເຮົາ ດັ່ງຄຳຂວັນຂອງເມືອງ ທີ່ວ່າ: ເມືອງໜອງບົກ ຫັດຖະກຳດິນໜຽວ, ທົ່ງນາຂຽວ ເຂົ້າໜຽວອ່ອນ, ຟ້ອນລຳດີສາມັກຄີລວມໝູ່ຕໍ່ສູ້ມີໄຊ.

ເມືອງໜອງບົກ ມີ 55 ບ້ານ, ມີ 11.632 ຫຼັງຄາເຮືອນ, 11.626 ຄອບຄົວ, ຄວາມໜາແໜ້ນຂອງປະຊາກອນສະເລ່ຍປະມານ 157 ຄົນຕໍ່ກິໂລແມັດ^2, ມີພົນລະເມືອງ 55.114 ຄົນ, ຍິງ 27.615ຄົນ, ມີ 03 ຊົນເຜົ່າ (ເຜົ່າລາວ 74,57%, ເຜົ່າຜູ້ໄທ 22,3% ແລະ ເຜົ່າມະກອງ3,13%) ເນື້ອທີ່ຂອງເມືອງມີທັງໝົດ 31.300 ເຮັກຕາ, ໃນນັ້ນມີເນື້ອທີ່ການຜະລິດກະສິກຳ 16.701 ເຮັກຕາ, ເນື້ອທີ່ປ່າໂຄກ, ປ່າສັກສິດ 8.828 ເຮັກຕາ, ບຶງ-ໜອງຫານ 2.726 ເຮັກຕາ ແລະ ດິນປະເພດອື່ນໆ 3.045 ເຮັກຕາ. ປະຊາຊົນມີອາຊີບເຮັດນາປູກເຂົ້າເປັນຕົ້ນຕໍ, ສຳຮອງຫັດຖະກຳ ແລະ ບໍລິການຄ້າຂາຍ.

ໂດຍອີງໃສ່ສະພາບຈຸດພິເສດ ແລະ ທ່າແຮງບໍ່ມຊ້ອນດັ່ງກ່າວ ອົງຄະນະພັກເມືອງ ຄັ້ງທີ IX ທີ່ວາງອອກໃຫ້ ໄດ້ວາງທິດທາງຈຸດສຸມ ແລະ ຄາດໝາຍສູ້ຊົນໄວ້ວ່າ: ສ້າງເມືອງໃຫ້ເປັນເມືອງເຂັ້ມແຂງຮອບດ້ານ ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມສະຫງົບປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ; ນຳພາ-ຊີ້ນຳຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ພັດທະນາຢ່າງຕໍ່ເນື່ອງ, ສົ່ງເສີມການປູກຝັງ-ລ້ຽງສັດໃຫ້ກາຍເປັນສິນຄ້າ ເພື່ອຄ້ຳປະກັນສະບຽງອາຫານໃຫ້ໄດ້ຕາມແນວທາງທີ່ພັກ-ລັດມອບໝາຍໃຫ້, ໄປພ້ອມພັດທະນາຄຸນນະພາບ,

ອະນຸລັກຮັກສາວັດທະນາທຳອັນດີງາມຂອງເຜົ່າຕ່າງໆພາຍໃນເມືອງ, ສົ່ງເສີມການປະຕິບັດ ສິດສະເໝີພາບບົດບາດຍິງ-ຊາຍ, ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍໃຫ້ຫຼາຍຂຶ້ນ. ສຸມໃສ່ຊຸກຍູ້ການພັດທະນາເສດຖະກິດໃຫ້ມີການຂະຫຍາຍຕົວຕໍ່ເນື່ອງໃນລະດັບ 7,73%, ລາຍຮັບສະເລ່ຍຕໍ່ຄົນຕໍ່ປີໃຫ້ໄດ້ 17,75 ລ້ານກວ່າກີບ; ສຸມສ້າງຈຸດສຸມບ້ານໜອງຜຳ ແລະ ຈຸດສຸມບ້ານດ່ານປາກເຊໃຫ້ໄດ້ຮັບຮອງເປັນຕົວເມືອງນ້ອຍ.

ໂດຍພາຍພາຍໃຕ້ການຊີ້ນຳ-ນຳພາຂອງອົງຄະນະພັກເມືອງ ຜ່ານການຈັດຕັ້ງປະຕິບັດໃນໄລຍະເຄິ່ງສະໄໝຜ່ານ ໃນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນທີ່ວາງໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງຕົນ ຜ່ານການຈັດຕັ້ງປະຕິບັດສາມາດຕີລາຄາໄດ້ຜົນສຳເລັດດັ່ງນີ້:

1. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ໄດ້ສຸມໃສ່ຫັນເອົານາຍ ແລະພົນທະຫານ-ຕຳຫຼວດລົງກໍ່ສ້າງຮາກຖານການເມືອງ, ຈັດຕັ້ງໂຄສະນາເຜີຍແຜ່ແນວທາງປ້ອງກັນຊາດ ແລະ ເຮັດໃຫ້ວຽກງານດັ່ງກ່າວກາຍເປັນວຽກງານຂອງທົ່ວປວງຊົນຮອບດ້ານ, ຈັດຕັ້ງຝຶກແອບສົມລະປະຢຸດ-ຍຸດທະວິທີໃຫ້ກຳລັງປະຈຳການ, ກົມກອງ, ກຳລັງກອງຫຼອນໄດ້ 12 ຊຸດເທົ່າກັບ 83,3% ຂອງແຜນ 5 ປີ; ນຳພາສ້າງບ້ານປ້ອງກັນຊາດເຂັ້ມແຂງໄດ້ 2 ບ້ານ, ແກ້ໄຂບັນດາປະກົດການຫຍໍ້ທໍ້ໃນສັງຄົມຕາມລະບຽບກົດໝາຍຢ່າງເຂັ້ມງວດ, ສ້າງຄອບຄົວປ້ອງກັນຄວາມສະຫງົບໄດ້ 8.519 ຄອບຄົວລື່ນແຜນ 5 ປີ 2,6%, ບ້ານປ້ອງກັນຄວາມສະຫງົບດີໄດ້ 54 ບ້ານ ເທົ່າກັບ 98%, ບ້ານປອດຢາເສບຕິດ 36 ບ້ານ ເທົ່າກັບ 65,4%, ເຄື່ອນໄຫວໂຄສະນາເຜີຍແຜ່ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄດ້ 7 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 1.268 ຄົນ, ຍິງ 673 ຄົນ.

2. ວຽກງານກໍ່ສ້າງພັກ-ພະນັກງານ: ການຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປັບປຸງກົງຈັກການຈັດຕັ້ງໃນໄລຍະຜ່ານມາ. ຄະນະພັກແຕ່ລະຂັ້ນໄດ້ເປັນເຈົ້າການປັບປຸງແບບແຜນວິທີນຳພາ ແລະ ແບບແຜນວິທີເຮັດວຽກພ້ອມທັງແກ້ໄຂບັນດາປາກົດການຫຍໍ້ທໍ້ພາຍໃນພັກ, 3 ຄະນະພັກຮາກຖານ, ໃນນີ້ ມີໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 11 ໜ່ວຍ, ມີໜ່ວຍພັກເອກະລາດ 83 ໜ່ວຍ, ໜ່ວຍພັກນຳພາບ້ານ 55 ໜ່ວຍ; ມີຄະນະບໍລິຫານງານພັກເມືອງ 24 ສະຫາຍ, ຍິງ 3 ສະຫາຍ, ກຳມະການພັກເມືອງເປັນນາຍບ້ານ 2 ສະຫາຍ, ເລຂາໜ່ວຍພັກຄອບຕຳແໜ່ງນາຍບ້ານ 54 ບ້ານ, ກຳມະການໜ່ວຍພັກບ້ານເປັນນາຍບ້ານ 1 ບ້ານ.ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ 75 ໜ່ວຍພັກ ເທົ່າກັບ 79,78%, ມີສະມາຊິກພັກທັງໝົດ 1.805 ສະຫາຍ, ຍິງ 541 ສະຫາຍ, ມີສະມາຊິກພັກແຂງ 1.184 ສະຫາຍ ກວມເອົາ 65,5% ຂອງຈຳນວນສະມາຊິກພັກ.

ທົ່ວເມືອງມີພະນັກງານ-ລັດຖະກອນທັງໝົດ 861 ຄົນ, ຍິງ 517 ຄົນ (ບໍ່ນັບກຳລັງປະກອບອາວຸດ); ບຳລຸງ-ກໍ່ສ້າງສົ່ງໄປຍົກລະດັບວິຊາສະເພາະ ແລະ ທິດສະດີທັງພາຍໃນ ແລະ ຕ່າງປະເທດທັງໝົດ 8 ຄົນ, ຍິງ 1 ຄົນ (ຕ່າງປະເທດ 1 ຄົນ); ປັບປຸງກົງຈັກການຈັດຕັ້ງໃຫ້ສອດຄ່ອງກັບໜ້າວຽກຕົວຈິງ ໄດ້ສຸມໃສ່ການສ້າງ ແລະ ປະຕິບັດແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນເມືອງຄຸ້ມຄອງ ໄດ້ 55 ບ້ານ, 12 ຫ້ອງການ, 11 ໂຮງຮຽນ (ຍັງບໍ່ສຳເລັດ 11 ຫ້ອງການ); ແຕ່ງຕັ້ງຫົວໜ້າ

ຫ້ອງການ ແລະ ຮອງຫົວໜ້າຫ້ອງການ 24 ທ່ານ, ຍິງ 1 ທ່ານ; ຍົກຍ້າຍຫົວໜ້າຫ້ອງການ ແລະ ຮອງຫົວໜ້າຫ້ອງການ 9 ທ່ານ, ຍິງ 1 ທ່ານ; ຍົກຍ້າຍພະນັກງານວິຊາການ 2 ທ່ານ, ຍິງ 1 ທ່ານ.

ວຽກປັບປຸງກົງຈັກການຈັດຕັ້ງ ໄດ້ປະຕິບັດຕາມທິດຊີ້ນໍາຂອງຂັ້ນເທິງ ໂດຍສະເພາະແມ່ນຄໍາສັ່ງເລກທີ 01/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາ ມີເລຂາໜ່ວຍພັກຄວບຕໍາແໜ່ງນາຍບ້ານກວມ 98,18%, ພ້ອມນັ້ນກໍ່ໄດ້ປະຕິບັດອຸດໝູນຕາມຂໍ້ຕົກລົງ 79/ນຍ ຢ່າງທົ່ວເຖິງ, ຜ່ານການປັບປຸງວຽກງານດັ່ງກ່າວເຮັດໃຫ້ອົງການປົກຄອງບ້ານໄດ້ເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນໄດ້ຢ່າງມີປະສິດທິພາບ-ປະສິດທິຜົນສູງຂຶ້ນກວ່າເກົ່າ; ຄົ້ນຄວ້າປະຕິບັດນະໂຍບາຍຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນຂັ້ນເມືອງ 1.393 ຄົນ ແລະ ຂັ້ນແຂວງ 49 ຄົນ.

ກະຊວງ-ອົງການ ແລະ ທ້ອງຖິ່ນ, ຄໍາແນະນໍາ ເລກທີ 01/ນຍ, ລົງວັນທີ6 ທັນວາ 2021 ວ່າດ້ວຍການຜັນຂະຫຍາຍຄໍາສັ່ງ ເລກທີ 01/ຄລສພ, ລົງວັນທີ 29 ກັນຍາ 2021, ດໍາລັດວ່າດ້ວຍການກໍານົດຕໍາແໜ່ງງານສະບັບເລກທີ 734/ລບ, ລົງວັນທີ 3 ທັນວາ 2021 ໂດຍໄດ້ປັບປຸງກົງຈັກການຈັດຕັ້ງບໍລິຫານລັດຕາມທິດກະທັດຮັດ, ສົມເຫດສົມຜົນສໍາເລັດການມອບ-ໂອນຫ້ອງການ ແລະ ໜ່ວຍງານຈໍານວນໜຶ່ງຕາມທິດ 3 ສ້າງ, ກໍານົດຕໍາແໜ່ງງານຂອງບັນດາຫ້ອງການອ້ອມຂ້າງເມືອງໄດ້ສໍາເລັດໂດຍພື້ນຖານ; ໄດ້ປັບປຸງການຈັດຕັ້ງຢູ່ຂັ້ນບ້ານຕາມ 5 ໜ່ວຍງານໄດ້ 11 ບ້ານ, ປະຈຸບັນ

ວຽກງານເສດຖະກິດ-ການເງິນ: ຄະນະບໍລິຫານງານພັກເມືອງ ໄດ້ຖືເອົາການພັດທະນາເສດຖະກິດຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກທາງດ້ານການເງິນ ໂດຍລວມເສດຖະກິດມີທ່າຂະຫຍາຍຕົວຢູ່ໃນລະດັບ 6,4%, ລາຍຮັບລວມຍອດບັນລຸໄດ້ 2.261 ຕື້ກີບ, ສະເລ່ຍລາຍຮັບຕໍ່ຫົວຄົນບັນລຸ 1.101 ໂດລາ/ຄົນ/ປີທຽບໃສ່ແຜນ 5 ປີປະຕິບັດໄດ້ 62%. ການຈັດເກັບລາຍຮັບເຂົ້າງົບປະມານສາມາດປະຕິບັດໄດ້ 12,5 ຕື້ກີບທຽບໃສ່ແຜນ 5 ປີ ເທົ່າກັບ 51%, ອັນພົ້ນເດັ່ນ: ການຈັດເກັບລາຍຮັບເຂົ້າງົບປະມານ ໃນປີ 2022 ປະຕິ

ບັດໄດ້ລື່ນແຜນການເຊິ່ງສ່ວນໃຫຍ່ແມ່ນໄດ້ມາຈາກພາສີທີ່ດິນ ແລະ ສ່ວຍສາອາກອນ, ການຄຸ້ມຄອງລາຍຈ່າຍສາມາດປະຕິບັດໄດ້ 51,5 ຕື້ກີບ ທຽບໃສ່ແຜນ 5 ປີ ເທົ່າກັບ 42,9%.

ວຽກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ: ສຸມໃສ່ຈັດຕັ້ງຜັນຂະຫຍາຍດຳລັດ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ການພັດທະນາເປັນວຽກງານບູລິມະສິດໜຶ່ງ, ເມືອງໄດ້ກຳນົດເອົາ 2 ຈຸດສຸມທີ່ຈະສ້າງເປັນຕົວເມືອງນ້ອຍໃນຊົນນະບົດຄື: ຈຸດສຸມໜອງຜຳ ແລະດ່ານປາກເຊ; ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນເມືອງລົງເຜີຍແຜ່ເຊື່ອມຊຶມບັນດານິຕິກຳທີ່ກ່ຽວຂ້ອງພ້ອມທັງເກັບກຳຂໍ້ມູນ ແລະ ຕີລາຄາສະພາບຄວາມເປັນຈິງ ເພື່ອສ້າງເປັນແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ-ຮາກຖານ, ນຳພາຈັດຕັ້ງປະຕິບັດຕາມແຜນທີ່ກຳນົດໄວ້ ຈຶ່ງສາມາດປະເມີນໄດ້ຄອບຄົວທີ່ບັນລຸຄົບ 19 ຕົວຊີ້ບອກມີ 6.825 ຄອບຄົວ, ບັນລຸໄດ້ 18 ຕົວຊີ້ບອກມີ 2.310 ຄອບຄົວ, ບັນລຸໄດ້ 17 ຕົວຊີ້ບອກມີ 181 ຄອບຄົວ, ບັນລຸໄດ້ 16 ຕົວຊີ້ບອກມີ 34 ຄອບຄົວ ແລະ ບ້ານທີ່ບັນລຸຄົບ 88 ມາດຕະຖານມີ 22 ບ້ານ, ບ້ານທີ່ບັນລຸຕ່ຳກວ່າ 88 ມາດຖານມີ 33 ບ້ານ.

ວຽກງານການສຶກສາທິການ ແລະ ກິລາ: ຄະນະພັກ, ຄະນະນຳສຶກສາ ໄດ້ເອົາໃຈໃສ່ນຳພາຊີ້ນຳວຽກງານສຶກສາໃຫ້ມີຄຸນນະພາບສູງຂຶ້ນ, ແຕ່ລະໂຮງຮຽນມີຄູ-ອາຈານສອນພຽງພໍ, ການຄຸ້ມຄອງບໍລິຫານ, ການຮຽນການສອນຖືກຕ້ອງຕາມຫຼັກສູດທີ່ກະຊວງສຶກສາວາງອອກ, ປະຊາຊົນໃນເກນອາຍຸ 15-40 ປີ ໄດ້ຮັບການສຶກສາຢ່າງທົ່ວເຖິງການຈັດຕັ້ງປະຕິບັດຄາດໝາຍ 15 ຕົວຊີ້ວັດສາມາດບັນລຸໄດ້ 8 ຕົວຊີ້ວັດ, ຂະບວນການກິລາກາຍຍະກຳປະເພດຕ່າງໆກໍໄດ້ມີການເຄື່ອນໄຫວຢ່າງຕໍ່ເນື່ອງພິເສດກິລາບານເຕະຍິງລຸ້ນ 17 ປີສາມາດຍາດໄດ້ລາງວັນຊະນະເລີດຂອງແຂວງ ແລະ ຍາດໄດ້ຫຼຽນຄຳ 1 ຫຼຽນຈາກກິລາແຫ່ງຊາດຢູ່ແຂວງຊຽງຂວາງ.

ວຽກງານສາທາລະນະສຸກ: ພື້ນຖານໂຄງລ່າງດ້ານສາທາລະນະສຸກ ໄດ້ຮັບການປັບປຸງຢ່າງທົ່ວເຖິງທຸກກຸ່ມບ້ານພາຍໃນເມືອງ ເຮັດໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການຢ່າງກວ້າງຂວາງ, ໄປພ້ອມກັບການປັບປຸງກົງຈັກການຈັດຕັ້ງປັບປຸງແບບແຜນວິທີເຮັດວຽກ, ການຍົກລະດັບຄວາມຮູ້-ຄວາມສາມາດຂອງພະນັກງານແພດ-ໝໍ ເພື່ອຮັບປະກັນໃນການບໍລິການສາມາດບັນລຸໄດ້ 9 ຕົວຊີ້ບອກນອກນັ້ນຍັງໄດ້ເປັນເຈົ້າການນຳພາ-ຊີ້ນຳປ້ອງກັນໂຄວິດ-19 ສາມາດສັກວັກຊີນປ້ອງກັນພະຍາດໂຄວິດ-19 ຄື: ເຂັມ I ມີ 43.302 ຄົນ ເທົ່າກັບ 84%, ເຂັມ II ມີ 40.834 ຄົນ ເທົ່າກັບ 79,6%, ເຂັມກະຕຸ້ນ I ມີ 10.794 ຄົນເທົ່າ 21%, ເຂັມກະຕຸ້ນ II ມີ 1.509 ຄົນເທົ່າ 3%.

ຄຽງຄູ່ກັບຜົນງານທີ່ຍາດມາໄດ້ນັ້ນຜ່ານການຈັດຕັ້ງປະຕິບັດຕົວຈິງ ຍັງມີບາງຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງ, ແກ້ໄຂໃນຕໍ່ໜ້າເປັນຕົ້ນ: ການຈັດຕັ້ງເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຍັງບໍ່ທັນທົ່ວເຖິງ ເຮັດໃຫ້ປະຊາຊົນຈຳນວນໜຶ່ງບໍ່ທັນເຂົ້າໃຈເລິກເຊິ່ງເຖິງຖອງເທົ່າທີ່ຄວນ; ການນຳພາ-ຊີ້ນຳວຽກງານຂອງກຳລັງປກຊ-ປກສ ແຕ່ລະຂັ້ນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ການລັກລອບຄ້າຂາຍເຖື່ອນ, ສະຕິລະວັງຕົວຂອງປະຊາຊົນ

ຈຳນວນໜຶ່ງຕໍ່ກົນອຸບາຍທັນປ່ຽນໂດຍສັນຕິຂອງພວກສັດຕູຍັງບໍ່ສູງ.

ການພັດທະນາທາງດ້ານເສດຖະກິດ ເຖິງວ່າມີການຂະຫຍາຍຕົວ ແຕ່ການຫັນເອົາພະນັກງານລົງນຳພາເຮັດຕົວຈິງຍັງບໍ່ທັນແຂງແຮງ, ການຫັນເປັນອຸດສາຫະກຳປຸງແຕ່ງທີ່ທັນສະໄໝຍັງບໍ່ກວ້າງຂວາງ, ການເກັບຄ່າທຳນຽມ-ບໍລິຫານບາງຂົງເຂດຍັງບໍ່ທັນສອດຄ່ອງກັບລະບຽບກົດໝາຍ; ການຫັນລົງກໍ່ສ້າງຮາກຖານການເມືອງຂອງບັນດາຂະແໜງການບໍ່ທັນເປັນລະບົບຕໍ່ເນື່ອງ, ການສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ແລະ ການສ້າງບ້ານພັດທະນາຍັງບໍ່ໄດ້ຕາມແຜນການທີ່ວາງໄວ້ໄດ້ດຳເນີນມາທ່າມກາງບັນຍາກາດທີ່ ແລະ ທາງອ້ອມ ຈຶ່ງເຮັດໃຫ້ບາງດ້ານບໍ່ທັນບັນຕາມຄາດໝາຍທີ່ວາງໄວ້.

ເພື່ອສືບຕໍ່ຈັດຕັ້ງປະຕິບັດຄາດໝາຍສູ້ຊົນ ແລະ ທິດທາງແຜນການທີ່ກຳນົດໄວ້ ໃຫ້ປະກົດຜົນເປັນຈິງ ອີງຄະນະພັກເມືອງກໍຄືຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີຊີ້ນຳ-ນຳພາວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນເຈົ້າການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງເມືອງ ໂດຍສະເພາະແມ່ນຖືເອົາຈຸດອ່ອນ ແລະ ຂໍ້ຄົງຄ້າງໃນໄລຍະຜ່ານມາກຳນົດເປັນທິດທາງ, ແຜນການ, ແຜນງານລະອຽດເພື່ອສືບຕໍ່ປັບປຸງ, ແກ້ໄຂ ໃຫ້ບັນລຸຕາມຄາດໝາຍສູ້ຊົນທີ່ກຳນົດໄວ້ໃນທ້າຍສະໄໝດັ່ງນີ້:

ມີທັງສິ່ງອຳນວຍ ແລະ ທັງປະເຊີນໜ້າກັບຄວາມຫຍຸ້ງຍາກຫຼາຍພໍສົມຄວນ ອີກດ້ານໜຶ່ງໃນໄລຍະເຄິ່ງສະໄໝຜ່ານມາ ການຈັດຕັ້ງປະຕິບັດແມ່ນຢູ່ຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19, ພະຍາດຕາມລະດູການ, ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ບັນຫາປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມ ແລະ ອື່ນໆທີ່ມີຜົນກະທົບໃນທາງກົງ

ໜຶ່ງ, ສືບຕໍ່ປັບປຸງ, ກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ແບບແຜນການນຳພາຂອງພັກ ແລະ ນຳພາປະຕິບັດໜ້າທີ່ການເມືອງໄປພ້ອມໆກັບການຂະຫຍາຍພັກໃຫ້ນັບມື້ເພີ່ມຂຶ້ນ ແລະ ຮັບປະກັນດ້ານຄຸນນະພາບ, ຊຸກຍູ້, ຕິດຕາມ, ກວດກາ ແລະ ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນພາຍໃນການຈັດຕັ້ງ ແລະ ຖັນ

ແຖວສະມາຊິກພັກ ແລະ ສ້າງແຜນການ, ປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ຖືກຕ້ອງ.

ສອງ, ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານ, ກຳລັງປະກອບອາວຸດຕະຫຼອດຮອດປະຊາຊົນບັນດາເຜົ່າໃຫ້ເປັນປົກກະຕິ; ເອົາໃຈໃສ່ສ້າງ ແລະ ບຳລຸງຖັນແຖວພະນັກງານນຳພາ-ຄຸ້ມຄອງ, ຄະນະພັກ, ສະມາຊິກພັກ-ພະນັກງານ, ພະນັກງານຫຼັກແຫຼ່ງ ເພື່ອຍົກສູງຄວາມຮູ້, ບົດບາດໃນການນຳພາ ບົນພື້ນຖານກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ ແຜນພັດທະນະເສດຖະກິດ-ສັງຄົມ ຂອງເມືອງເຂົ້າໃນວຽກງານຕົວຈິງ ພ້ອມນັ້ນກໍ່ຫັນເອົາແນວທາງນະໂຍບາຍຂອງພັກໃຫ້ກາຍເປັນແຜນງານ-ໂຄງການເຄື່ອນໄຫວ ແລະ ນຳພາ-ຊີ້ນຳຈັດຕັ້ງປະຕິບັດໃຫ້ໄດ້ຮັບປະສິດທິຜົນ; ສຸມໃສ່ສັບຊ້ອນ-ຈັດວາງພະນັກງານ ຕາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເພື່ອຮັບປະກັນການສືບທອດປ່ຽນແທນ ໄປພ້ອມກັບການປະເມີນພະນັກງານ-ລັດຖະກອນປະຈຳປີໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ, ສູ້ຊົນຈັດສົ່ງພະນັກງານໄປກໍ່ສ້າງ-ບຳລຸງທາງດ້ານທິດສະດີ, ວິຊາສະເພາະທັງພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ;

ສາມ, ສືບຕໍ່ນຳພາ-ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທົ່ວປວງຊົນຮອບດ້ານໃຫ້ແຂງແຮງກວ່າເກົ່າ ຕິດພັນກັບການຫັນເອົາພະນັກງານ, ກຳລັງລົງນຳພາກໍ່ສ້າງຮາກຖານການເມືອງ, ປັບປຸງກຳລັງໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຮອບດ້ານ; ເອົາໃຈໃສ່ນຳພາ-ຊີ້ນຳຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ພັດທະນາຢ່າງຕໍ່ເນື່ອງ, ດ້ວຍການສົ່ງເສີມການປູກຝັງ-ລ້ຽງສັດ ໃຫ້ກາຍເປັນສິນຄ້າ ເພື່ອຄ້ຳປະກັນສະບຽງອາຫານໃຫ້ໄດ້ຕາມແນວທາງທີ່ພັກ-ລັດມອບໝາຍໃຫ້, ໄປພ້ອມພັດທະນາຄຸນນະພາບການສຶກສາ, ການບໍລິການດ້ານສາທາລະນະສຸກໃຫ້ດີຂຶ້ນກວ່າເກົ່າ, ສົ່ງເສີມ ແລະ ພັດທະນາສີມືແຮງງານໃຫ້ມີຄຸນນະພາບ, ອະນຸລັກຮັກສາວັດທະນະທຳອັນດີງາມຂອງເຜົ່າຕ່າງໆພາຍໃນເມືອງ, ສົ່ງເສີມການປະຕິບັດສິດສະເໝີພາບບົດບາດຍິງ-ຊາຍ, ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍໃຫ້ຫຼາຍຂຶ້ນ.

ສັງລວມແລ້ວ, ຜ່ານການນຳພາ-ຊີ້ນຳຂອງອົງຄະນະພັກເມືອງໜອງບົກ ໃນໄລຍະກາງສະໄໝຜ່ານມາ ເຖິງວ່າຈະມີຜົນສຳເລັດໃນຫຼາຍດ້ານກໍຕາມ ແຕ່ລະຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ກໍຍັງມີບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ສະນັ້ນ, ເພື່ອເຮັດໃຫ້ຄາດໝາຍສູ້ຊົນທີ່ມະຕິກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກເມືອງໜອງບົກ ຄັ້ງທີ IX ບັນລຸຕາມຄາດໝາຍທີ່ກຳນົດໄວ້, ຄະນະບໍລິຫານງານພັກເມືອງ ກໍຄືຄະນະພັກແຕ່ລະຂັ້ນ, ສະມາຊິກພັກ-ພະນັກງານແຕ່ລະສະຫາຍ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ແລະ ຍົກສູງຄວາມສາມາດນຳພາຂອງພັກ ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມບັນດາເນື້ອໃນຄາດໝາຍສູ້ຊົນຂອງມະຕິກອງປະຊຸມໃຫຍ່ອົງຄະນະພັກເມືອງວາງອອກ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີໝາກຜົນ ເຮັດໃຫ້ການພັດທະນາເສດຖະກິດຂອງເມືອງ ມີການຂະຫຍາຍຕົວດີຂຶ້ນ, ສັງຄົມມີຄວາມສະຫງົບ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາດີຂຶ້ນ, ຄຸນນະພາບຊີວິດຂອງປະຊາຊົນນັບມື້ນັບດີຂຶ້ນ ແລະ ຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາເທື່ອລະກ້າວ...⁄

ຍົກສູງບົດບາດສະພາແຫ່ງຊາດ ໃນການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ ເພື່ອສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃນໄລຍະໃໝ່

ໂດຍ: ສົມຈິດ ດວງສະຫວັນ

ນັບແຕ່ການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ໂດຍສະເພາະການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມກົນໄກເສດຖະກິດຕະຫຼາດ ເຊິ່ງປະກອບດ້ວຍເສດຖະກິດຫຼາຍພາກສ່ວນ ພາຍໃຕ້ການຄຸ້ມຄອງຂອງລັດນັ້ນ ມີຄວາມຈຳເປັນຢ່າງພາວະວິໄສຕ້ອງມີລະບຽບກົດໝາຍເພື່ອເປັນເຄື່ອງມືດັດປັບສາຍພົວພັນສັງຄົມ ຫຼື ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບຽບກົດໝາຍ ເພື່ອຮັບປະກັນຜົນປະໂຫຍດຂອງລັດ, ຮັບປະກັນສິດເສລີພາບ, ອິດສະຫຼະພາບຂອງພົນລະເມືອງ, ຄວາມສະເໝີພາບ, ຄວາມຍຸຕິທຳ ແລະ ຄວາມສີວິໄລໃນສັງຄົມ. ສະນັ້ນ, ກົດໝາຍ ຈຶ່ງເປັນເຄື່ອງມືອັນສຳຄັນຂອງລັດ ເພື່ອຄຸ້ມຄອງສັງຄົມ.

ຫຼາຍປະເທດໃນໂລກທີ່ປະຕິບັດລະບອບການປົກຄອງດ້ວຍກົດໝາຍ, ຍາມໃດກໍຖືສຳຄັນ ແລະ ເອົາໃຈໃສ່ຕໍ່ການສ້າງ ແລະ ປັບປຸງກົດໝາຍ ກໍຄື ການພິຈາລະນາ, ຮັບຮອງເອົາກົດໝາຍ ເຊິ່ງເປັນສິ່ງສຳຄັນທີ່ຫຼາຍປະເທດເອົາໃຈໃສ່ນັ້ນ ແມ່ນການສ້າງຖັນແຖວພະນັກງານວິຊາການ ທີ່ມີລະດັບຄວາມຮູ້ຄວາມສາມາດສະເພາະດ້ານ ແລະ ຫັນເປັນວິຊາຊີບ ຕິດພັນກັບການປະກອບສະມາຊິກລັດຖະສະພາ ທີ່ເປັນນັກກົດໝາຍໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນການພິຈາລະນາ, ຮັບຮອງເອົາກົດໝາຍໃຫ້ມີຄຸນນະພາບ. ພ້ອມກັນນັ້ນ, ລັດຖະບານຫຼາຍປະເທດ ກໍຖືເອົາກົດໝາຍເປັນມາດຖານວັດແທກລວມ (ກະຕິກາ) ສຳລັບການວັດແທກການເຄື່ອນໄຫວ ແລະ ການປະພຶດຂອງບຸກຄົນ ແລະ ການຈັດຕັ້ງໃນສັງຄົມ ແນໃສ່ເພີ່ມທະວີຄວາມສັກສິດຂອງກົດໝາຍຕໍ່ຊີວິດ-ສັງຄົມ.

ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນທີ່ເປັນຄວາມຮັບຜິດຊອບຂອງທຸກພາກສ່ວນທີ່ຈະຕ້ອງໄດ້ຍຶດໝັ້ນຕາມທັດສະນະແນວທາງການປ່ຽນແປງໃໝ່ຂອງພັກປະຊາຊົນປະຕິວັດລາວ, ການສ້າງລັດແຫ່ງ ສປປ ລາວ ໃຫ້ກາຍເປັນການປົກຄອງລັດດ້ວຍລັດຖະທຳມະນູນ ແລະ ກົດໝາຍເທື່ອລະກ້າວ ເພື່ອຮັບປະກັນການເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດ, ຂອງປະຊາຊົນລາວບັນດາເຜົ່າ, ສິດທິຂອງພົນລະເມືອງ, ຜົນປະໂຫຍດຂອງເດັກ,ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຊົນເຜົ່າ; ເພີ່ມທະວີໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍເພື່ອນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມ.

ການສ້າງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນເນື້ອແທ້ກໍແມ່ນ ການສ້າງລັດທີ່ປົກຄອງດ້ວຍກົດໝາຍນັ້ນເອງ, ໃນປະຈຸບັນ ພັກ-ລັດ ໄດ້ມີຄວາມພະຍາຍາມສຸມໃສ່ສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດຕ່າງໆ ໃຫ້ເປັນລະບົບຄົບຊຸດ

ເທື່ອລະກ້າວນັ້ນ ຍັງແມ່ນສິ່ງທ້າທາຍສຳລັບສະພາແຫ່ງຊາດ ທີ່ຈະຕ້ອງໄດ້ເພີ່ມທະວີຍົກສູງບົດບາດຂອງຕົນ ໃນຖານະເປັນອົງການນິຕິບັນຍັດ ທີ່ມີບົດບາດໃນການຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາກົດໝາຍ ເພື່ອຕອບສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໃຫ້ມີຄວາມເຂັ້ມແຂງ, ມີສະຖຽນລະພາບ ແລະ ມີຄວາມອາດສາມາດແຂ່ງຂັນກັບຕ່າງປະເທດ, ເຊື່ອມໂຍງກັບເສດຖະກິດ ຂອງພາກພື້ນ ແລະ ສາກົນ ແລະ ທັນກັບສະພາບການຂອງໂລກ.

ພັກປະຊາຊົນປະຕິວັດລາວ ຍຶດໝັ້ນທັດສະນະພື້ນຖານຂອງຕົນ ກ່ຽວກັບການສ້າງລັດທີ່ປົກຄອງດ້ວຍກົດໝາຍຢູ່ປະເທດເຮົາ ເຊິ່ງສະແດງອອກຢ່າງຊັດເຈນ ໃນກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ວ່າ: ເພື່ອເຮັດໃຫ້ການຄຸ້ມຄອງຂອງລັດສອດຄ່ອງກັບກົນໄກເສດຖະກິດຕະຫຼາດ ແລະ ເຊື່ອມໂຍງສາກົນ, ພັກເຮົາມີແຜນນະໂຍບາຍດຳເນີນການສ້າງລັດທີ່ປົກ ຄອງດ້ວຍກົດໝາຍເປັນກ້າວໆ, ສອດຄ່ອງກັບສະພາບການຕົວຈິງຂອງປະເທດເຮົາ. ພັກເຮົາຍາມໃດກໍ່ຖືສຳຄັນການສ້າງລັດທີ່ປົກຄອງດ້ວຍກົດໝາຍເປັນບັນຫາສຳຄັນ ໂດຍສະເພາະແມ່ນການກໍ່ສ້າງ, ປັບປຸງລັດໃຫ້ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

ຕາມລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015 ປະກອບດ້ວຍບັນດາອົງການອຳນາດລັດ ຄື: ອົງການນິຕິບັນຍັດ, ອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ຊຶ່ງອຳນາດລັດນີ້ເປັນສ່ວນປະກອບຂອງລະບົບການເມືອງ ໂດຍມີພັກປະຊາຊົນ ປະຕິວັດລາວ ເປັນແກນນຳ. ບັນດາອົງການອຳນາດແຫ່ງລັດ ລ້ວນແຕ່ເປັນອົງການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ ດ້ວຍການຫັນລະອຽດເປັນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເຮັດໃຫ້ການປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ ບັນລຸຕາມຈຸດໝາຍ ແລະ ອຸດົມການຂອງພັກທີ່ວາງໄວ້.

ສະພາແຫ່ງຊາດ ໃນຖານະເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດ ຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດ ເຊິ່ງເປັນອົງການທີ່ສຳຄັນຕົ້ນຕໍໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໂດຍສະເພາະການສ້າງ, ປັບປຸງ, ພິຈາລະນາ, ຮັບຮອງເອົາກົດໝາຍ ໃນກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ. ນັບແຕ່ສະພາປະຊາຊົນສູງສຸດ ຊຸດທີ I ໄດ້ຮັບການ ສ້າງຕັ້ງຂຶ້ນໂດຍກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໃນວັນທີ 2 ທັນວາ 1975 ຫາສະພາແຫ່ງຊາດ ຊຸດທີ IX, ຕະຫຼອດໄລຍະ 48 ປີ ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ແລະ ປະທານປະເທດອອກລັດຖະດຳລັດ ປະກາດໃຊ້ກົດໝາຍໄດ້ຫຼາຍກວ່າ 160 ສະບັບ. ໃນນີ້ແບ່ງອອກເປັນ 5 ຂົງເຂດຄື: ຂົງເຂດການປົກຄອງ ແລະ ຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດການຕ່າງປະເທດ. ນອກຈາກນັ້ນ, ຍັງຮັບຮອງເອົາປະມວນກົດໝາຍອາຍາ ແລະ ປະມວນກົດໝາຍແພ່ງ.ພ້ອມດຽວກັນນັ້ນ, ຄະນະປະຈຳສະພາແຫ່ງຊາດ ກໍຍັງໄດ້ຕົກລົງໃຫ້ສັດຕະຍາບັນແກ່ສັນຍາ ແລະ ສົນທິສັນຍາສາກົນ ລວມທັງໝົດຫຼາຍກວ່າ 150 ສະບັບ ເຊິ່ງພົວພັນກັບຂົງເຂດການເມືອງ-ຄວາມໝັ້ນຄົງ, ເສດຖະກິດ-ການຄ້າ, ການລົງທຶນ, ວັດທະນາທຳ-ສັງຄົມ ແລະ ຂົງເຂດອື່ນໆ. ໃນນີ້ສະພາແຫ່ງຊາດ ຊຸດທີ IX ປະກອບມີ 9 ກຳມາທິການຄື: ກຳມາທິການກົດໝາຍ, ກຳມາທິ

ການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກໍາມາທິການແຜນການ, ການເງິນ ແລະ ການກວດສອບ, ກໍາມາທິການບັນດາເຜົ່າ, ກໍາມາທິການການຕ່າງປະເທດ, ກໍາມາທິການວັດທະນະທໍາ-ສັງຄົມ, ກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກໍາມາທິການຍຸຕິທໍາ, ກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ພ້ອມນີ້ກໍມີ ຄະນະເລຂາທິການສະພາແຫ່ງຊາດ ເປັນກົງຈັກຊ່ວຍວຽກ ເຊິ່ງມີສະມາຊິກສະພາແຫ່ງຊາດ ທັງໝົດ 164 ທ່ານ, ຍິງ 36 ທ່ານ ກວມເອົາ 21.95%, ມີສະມາຊິກສະພາແຫ່ງຊາດ ປະຈໍາຢູ່ສູນກາງ ຈໍານວນ 63 ທ່ານ , ຍິງ 11 ທ່ານ, ສະມາຊິກສະພາແຫ່ງຊາດປະຈໍາຢູ່ທ້ອງຖິ່ນ ຈໍານວນ 101 ທ່ານ, ຍິງ 25 ທ່ານ, ສະມາຊິກສະພາແຫ່ງຊາດ ທີ່ສັງກັດຢູ່ລັດວິສາຫະກິດ ຈໍານວນ 2 ທ່ານ ແລະ ສະມາຊິກສະພາແຫ່ງຊາດ ທີ່ສັງກັດຢູ່ວິສາຫະກິດ ພາກເອກະຊົນ ຈໍານວນ 6 ທ່ານ, ຍິງ 1 ທ່ານ.

ຄຽງຄູ່ກັບການພິຈາລະນາ, ຮັບຮອງເອົາກົດໝາຍສະພາແຫ່ງຊາດ ກໍໄດ້ເປັນເຈົ້າການປະສານສົມທົບກັບບັນດາອົງການລັດ ແລະ ພາກສ່ວນກ່ຽວຂ້ອງ ໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກໍາຕ່າງໆ ໃຫ້ພະນັກງານ, ທະຫານ, ຕໍາຫຼວດ, ປະຊາຊົນ ແລະ ຊັ້ນຄົນຕ່າງໆໃນທົ່ວສັງຄົມ ດ້ວຍຫຼາຍຮູບຫຼາຍແບບ ຕິດພັນກັບການລົງພົບປະ ປະຊາຊົນຢູ່ທ້ອງຖິ່ນ ໄດ້ຢ່າງກວ້າງຂວາງພໍສົມຄວນ, ອັນໄດ້ສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ນັບມື້ສູງຂຶ້ນ. ພ້ອມດຽວກັນນີ້, ການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ບາງຂົງເຂດ ຍັງເລັ່ງທວງໃຫ້ມີການຕິດຕາມກວດກາ ແລະ ປັບປຸງໃຫ້ດີຂຶ້ນ, ແນໃສ່ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຜົນສັກສິດ ແລະ ເຂັ້ມງວດ. ສະນັ້ນ, ຈຶ່ງມີການລິເລີ່ມດໍາເນີນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດເສດຖະກິດ 03 ສະບັບ ແລະ ຂົງເຂດຍຸຕິທໍາ 04 ສະບັບ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ເພື່ອນໍາໄປປັບປຸງແກ້ໄຂໃນຕໍ່ໜ້າ, ພ້ອມທັງຕິດຕາມກວດກາ ແລະ ຊຸກຍູ້ບັນດາກະຊວງ, ອົງການ ໃນການຜັນຂະຫຍາຍບາງມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍໃນຂົງເຂດຕົນ ໃຫ້ສໍາເລັດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງ; ການຕີຄວາມໝາຍ ແລະ ອະທິບາຍກົດໝາຍຂອງສະພາແຫ່ງຊາດ ເພື່ອໃຫ້ຄວາມກະຈ່າງແຈ້ງ, ປິດຊ່ອງວ່າງຂອງກົດໝາຍ ແລະ ສ້າງຄວາມເຂົ້າໃຈໃຫ້ກັບພາກສ່ວນຕ່າງໆທີ່ມີສິດສະເໜີໃຫ້ຕີຄວາມໝາຍ ແລະ ອະທິບາຍກົດໝາຍ ກໍເຫັນວ່າສາມາດເຮັດໄດ້ດີພໍສົມຄວນ ເຊິ່ງໄດ້ອອກເປັນນິຕິກໍາໃຕ້ກົດໝາຍຂອງສະພາແຫ່ງຊາດ ຫຼາຍສະບັບ ເປັນຕົ້ນ ມະຕິ ແລະ ຄໍາແນະນໍາການຈັດຕັ້ງປະຕິບັດ ຂອງຄະນະປະຈໍາສະພາແຫ່ງຊາດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

ຄຽງຄູ່ກັບຜົນງານ ແລະ ດ້ານຕັ້ງໜ້າທີ່ກ່າວມານັ້ນ ຍັງມີບາງບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຈະຕ້ອງປັບປຸງແກ້ໄຂ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ ໃນໄລຍະຜ່ານມາ ຍັງມີລັກສະນະຮີບດ່ວນ, ຟ້າວຟັ່ງ, ເລັ່ງນໍາປະລິມານ ແຕ່ຄຸນນະພາບຂອງເນື້ອໃນກົດໝາຍຍັງບໍ່ທັນລະອຽດຮັດກຸມເທົ່າທີ່ຄວນ; ຄວາມຮູ້ຄວາມສາມາດ, ລະດັບວິທະຍາສາດດ້ານກົດໝາຍຂອງບຸກຄະລາກອນທີ່ເປັນເສນາທິການ ຍັງມີຂອບເຂດຈໍາກັດ, ບວກກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທໍາ-ສັງຄົມຂອງແຕ່ລະທ້ອງຖິ່ນພາຍໃນປະເທດ ກໍຄື ລະຫວ່າງປະເທດທີ່ມີຄວາມແຕກໂຕນກັນ ເປັນສາເຫດໜຶ່ງເຮັດໃຫ້ກົດໝາຍບາງຂະແໜງການທີ່ສ້າງຂຶ້ນນັ້ນບໍ່ມີຄຸນນະພາບເທົ່າທີ່ຄວນ ເຊິ່ງໄດ້ກາຍເປັນຄວາມຈໍາເປັນຕ້ອງຊຸ້ນຂ້ຽວດັດແກ້ປັບປຸງຄືນໃໝ່; ການໂຄສະນາ ເຜີຍແຜ່ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະ

ທຳມະນູນ ຍັງບໍ່ທັນຕໍ່ເນື່ອງ, ກວ້າງຂວາງ ແລະ ທົ່ວເຖິງ
ທຸກເປົ້າໝາຍ, ຮູບການວິທີການຍັງບໍ່ທັນຫຼາກຫຼາຍ;
ຄວາມເປັນເຈົ້າໃນການປະຕິບັດພາລະບົດຂອງສະມາ
ຊິກສະພາແຫ່ງຊາດ ຈຳນວນໜຶ່ງຍັງບໍ່ທັນສູງ ຊຶ່ງສະ
ແດງອອກໃນການນຳກົດໝາຍ, ເນື້ອໃນຜົນສຳເລັດ
ກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ ລົງເຜີຍແຜ່
ໃຫ້ປະຊາຊົນຢູ່ເຂດເລືອກຕັ້ງຂອງຕົນ ໄດ້ຢ່າງທົ່ວເຖິງ
ໂດຍສະເພາະປະຊາຊົນຢູ່ຫ່າງໄກຊອກຫຼີກ, ການປະກອບ
ຄຳຄິດຄຳເຫັນຕໍ່ຮ່າງກົດໝາຍ ບາງຂະແໜງການ ໃນກອງ
ປະຊຸມສະພາແຫ່ງຊາດ ຍັງບໍ່ທັນລົງເລິກຕໍ່ເນື້ອໃນໄດ້
ຊັດເຈນ ແລະ ເປັນຈຸດສຸມ ເຫຼົ່ານີ້ເປັນຕົ້ນ.

ສະນັ້ນ, ເພື່ອເປັນການຍົກສູງສະພາແຫ່ງຊາດ
ໃນການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ ໂດຍ
ສະເພາະການສ້າງ, ປັບປຸງ, ພິຈາລະນາ, ຮັບຮອງເອົາ
ກົດໝາຍ ໃນຕໍ່ໜ້າ ເພື່ອສ້າງລັດທີ່ປົກຄອງດ້ວຍກົດ
ໝາຍນັ້ນ ຄວນຍົກສູງ ແລະ ເພີ່ມທະວີບາງບັນຫາ ດັ່ງນີ້:

ໜຶ່ງ: ເພີ່ມທະວີການປະຕິບັດບົດບາດສະພາ
ແຫ່ງຊາດ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ
ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນ
ອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນ
ຍັດ ທີ່ປະຕິບັດພາລະບົດບາດ ຮັບຮອງເອົາລັດຖະທຳ
ມະນູນ ແລະ ກົດໝາຍ ໃຫ້ມີປະສິທິພາບ ປະສິດທິຜົນສູງ
ສຸດກໍ່ຄື ຄວາມມຸ້ງມາດປາດຖະໜາຂອງປະຊາຊົນລາວ
ບັນດາເຜົ່າ ເພື່ອສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃຫ້
ເປັນຮູບປະທຳຢ່າງແທ້ຈິງ.

ສອງ: ຍົກສູງບົດບາດຂອງສະມາຊິກສະພາແຫ່ງ
ຊາດ ໃນການໂຄສະນາເຜີຍແຜ່, ປຸກລະດົມ ປະຊາຊົນ
ລາວບັນດາເຜົ່າແລະຊັ້ນຄົນ ໃຫ້ເຊື່ອມຊຶມແລະເຂົ້າຮ່ວມ
ໃນການປະຕິບັດແນວທາງນະໂຍບາຍ, ລັດຖະທຳມະ
ນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ,
ຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດ
ຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ເຂົ້າ
ຮ່ວມໃນການຄຸ້ມຄອງລັດ ຄຸ້ມຄອງເສດຖະກິດ-ສັງ
ຄົມ, ໃຫ້ຮູ້ ແລະ ເຂົ້າໃຈພາລະບົດບາດ, ສິດ ແລະ ໜ້າ
ທີ່ຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງ
ຊາດ; ໃກ້ຊິດຕິດແທດ, ພົບປະ, ຕ້ອນຮັບປະຊາຊົນ, ເກັບ
ກຳ ແລະ ນຳເອົາຄຳຄິດຄຳເຫັນ ແລະ ຄຳສະເໜີຂອງປະ
ຊາຊົນ ເພື່ອສະເໜີຕໍ່ສະພາແຫ່ງຊາດ ແລະ ພາກສ່ວນ
ອື່ນ ທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ທັງຕິດຕາມຜົນການ
ແກ້ໄຂ ຂອງພາກສ່ວນທີ່ກ່ຽວຂ້ອງ ແນໃສ່ສ້າງຄວາມ
ຍຸຕິທຳໃນສັງຄົມ.

ສາມ: ເພີ່ມທະວີຄວາມຮັບຜິດຊອບຂອງສະ
ພາແຫ່ງຊາດ ໃນການຄັດເລືອກຜູ້ລົງສະໝັກສະມາ
ຊິກສະພາແຫ່ງຊາດ ທີ່ແມ່ນນັກກົດໝາຍ ປະກອບເຂົ້າ
ໃນສະພາແຫ່ງຊາດ ແຕ່ລະຊຸດໃຫ້ຫຼາຍຂຶ້ນ ເພື່ອຮັບ
ປະກັນໃນການຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາກົດ
ໝາຍ ໃນກອງປະຊຸມສະພາແຫ່ງຊາດໃຫ້ໄດ້ທັງປະ
ລິມານ ແລະ ຄຸນນະພາບ ເພື່ອເປັນເຄື່ອງມືໃນການຄຸ້ມ
ຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ
ເທື່ອລະກ້າວ.

ສີ່: ຍົກສູງບົດບາດຂອງສະພາແຫ່ງຊາດ ໃນການ
ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະ
ນູນ, ກົດໝາຍ, ການອອກນິຕິກຳໃຕ້ກົດໝາຍ ແລະ ໂຄ
ສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງ
ອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະ
ການປະຊາຊົນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານ
ດັ່ງກ່າວ ສອດຄ່ອງກັບລະບຽບກົດໝາຍ ຢ່າງມີປະສິດ
ທິພາບ ແນໃສ່ສິ່ງເສີມດ້ານຕັ້ງ, ຈຳກັດ ແລະ ແກ້ໄຂປາກົດ
ການລະເມີດກົດໝາຍ ໃຫ້ເຂັ້ມງວດ.

ຫ້າ: ເພີ່ມທະວີ ບຳລຸງ ສ້າງຖັນແຖວພະນັກງານ
ສືບທອດ, ຍົກລະດັບຄວາມຮູ້ ຄວາມສາມາດທາງດ້ານ
ກົດໝາຍ ໃຫ້ສະມາຊິກສະພາແຫ່ງຊາດ ແລະ ພະນັກ
ງານ-ລັດຖະກອນຂອງສະພາແຫ່ງຊາດ ພ້ອມທັງຖອນ
ຖອດ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານສ້າງ

ແລະ ປັບປຸງກົດໝາຍ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ເປັນລະບົບຕໍ່ເນື່ອງ;

ຫົກ: ຍົກສູງຄວາມເປັນເຈົ້າການຂອງກໍາມາທິການກົດໝາຍ ໃນການປະສານສົມທົບກັບກໍາມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ກະຊວງ, ອົງການ ແລະ ພາກສ່ວນທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ເພື່ອເຂົ້າຮ່ວມແຕ່ຫົວທີໃນການຄົ້ນຄວ້າບັນດາເນື້ອໃນຕ່າງໆຂອງຮ່າງກົດໝາຍ ທີ່ຈະສ້າງ ແລະ ປັບປຸງໃຫ້ກວ້າງຂວາງ, ຮອບດ້ານ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍແຕ່ລະສະບັບ ມີຄວາມຄົບຖ້ວນ, ຮັດກຸມ ສາມາດນໍາເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ ແຕ່ລະເທື່ອໄດ້ຢ່າງມີຄຸນນະພາບ.

ເຈັດ: ນໍາໃຊ້ລະບົບກົນໄກທີ່ເປັນທ່າແຮງຂອງສະພາແຫ່ງຊາດ ໂດຍສະເພາະສື່ສິ່ງພິມ ແລະ ພາຫະນະສື່ມວນຊົນຕ່າງໆ ເພື່ອໂຄສະນາເຜີຍແຜ່ ກົດໝາຍ ເພື່ອສ້າງສະຕິເຄົາລົບ, ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍໃຫ້ກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ.

ສັງລວມແລ້ວ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການໃນການສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ ທັງສອດຄ່ອງກັບຈຸດໝາຍລວມຂອງບັນດາປະຊາຊາດໂລກເວົ້າລວມ, ເວົ້າສະເພາະການຍົກສູງບົດບາດຂອງສະພາແຫ່ງຊາດ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍນັ້ນ ແມ່ນໝາກຜົນລວມຍອດ ຂອງຄວາມມຸ່ງມາດປາດຖະໜາຂອງປະຊາຊົນລາວບັນດາເຜົ່າ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນໍາ. ສະນັ້ນ, ຕ້ອງໄດ້ເອົາໃຈໃສ່ຫັນແນວທາງນະໂຍບາຍຂອງພັກອອກມາເປັນກົດໝາຍ ໃຫ້ເປັນລະບົບຄົບຊຸດ ໂດຍຜ່ານຂະບວນວິວັດແຫ່ງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະໃຫ້ເໝາະສົມ. ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຂອງ ສປປ ລາວ ໃຫ້ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ, ຕິດພັນກັບການຍົກສູງບົດບາດຂອງສະພາແຫ່ງຊາດ ກໍຄືສະມາຊິກສະພາແຫ່ງຊາດ ທີ່ເປັນຕົວແທນຂອງປະຊາຊົນ ເນື້ອແທ້ກໍແມ່ນການຍົກສູງສິດປະຊາທິປະໄຕຂອງປະຊາຊົນ ໂດຍຜ່ານຕົວແທນຂອງຕົນ.

ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງຍົກສູງຄວາມຮູ້ຄວາມສາມາດ ພ້ອມທັງເພີ່ມຈໍານວນສະມາຊິກສະພາແຫ່ງຊາດ ໃນແຕ່ລະເຂດເລືອກຕັ້ງທົ່ວປະເທດໃຫ້ຫຼາຍກວ່າເກົ່າ ແນໃສ່ຮັບປະກັນການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ ເພື່ອຕອບສະໜອງການບໍລິການ, ຮັບໃຊ້ປະຊາຊົນ ສົມຄູ່ກັບການເປັນຕົວແທນປະຊາຊົນ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ. ສະຫຼຸບແລ້ວການປົກຄອງລັດດ້ວຍກົດໝາຍເທົ່ານັ້ນ ຈຶ່ງຈະຮັບປະກັນໃຫ້ລັດໄດ້ເຄື່ອນໄຫວ ແລະ ປະຕິບັດສິດອໍານາດຂອງຕົນ ໄດ້ຢ່າງຖືກຕ້ອງຕາມຫຼັກການ ການປົກຄອງ ໃນລະບອບປະຊາທິປະໄຕ ປະຊາຊົນ ທີ່ຖືກົດໝາຍເປັນສິ່ງສັກສິດສູງສຸດ ເພື່ອຄໍ້າປະກັນຄວາມຖືກຕ້ອງ, ຄວາມຍຸຕິທໍາໃນສັງຄົມ ແລະ ຮັບປະກັນສິດເສລີພາບຂອງປະຊາຊົນລາວບັນດາເຜົ່າ. ແນ່ນອນການຍົກສູງບົດບາດຂອງສະພາແຫ່ງຊາດໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍນັ້ນ ຈຶ່ງແມ່ນສິ່ງຈໍາເປັນຢ່າງພາວະວິໄສ ໃນຖານະທີ່ເປັນອົງການອົງການນິຕິບັນຍັດ ທີ່ເຮັດໜ້າທີ່ໃນການພິຈາລະນາ, ຮັບຮອງເອົາກົດໝາຍ ເພື່ອເປັນເຄື່ອງມືທີ່ສໍາຄັນໃຫ້ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ດ້ວຍກົດໝາຍ ໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ, ພາວະວິໄສ ແລະ ສັດຈະທໍາ...ຯ

ຍົກສູງຄຸນນະພາບການກໍ່ສ້າງ ແລະ ບຳລຸງ ພະນັກງານ-ສະມາຊິກພັກ ຢູ່ແຂວງຊຽງຂວາງ

ໂດຍ: ຄຳໝັ້ນ ພອນວິໄລຄຳ

ພະນັກງານ, ສະມາຊິກພັກແມ່ນກຳລັງການເມືອງຫຼັກໃນພາລະກິດປະຕິວັດ ຂອງພັກເຮົາ, ເປັນຜູ້ຕັດສິນຜົນໄດ້ຜົນເສຍ ຂອງການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ຂອງພັກ, ຂອງລັດ, ຕ້ອງໄດ້ຮັບການນຳພາ, ສຶກສາອົບຮົມບົ່ມເພາະຈາກພັກ, ຝຶກຝົນຫຼໍ່ຫຼອມໃຫ້ເປັນຜູ້ຈົງຮັກພັກດີ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດດ້ວຍຄວາມບໍລິສຸດໃຈ, ຜ່ອງໃສ, ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີວຽກງານ, ການເຄື່ອນໄຫວປະຕິບັດໜ້າທີ່ ຂອງພະນັກງານທຸກຄົນ ຕ້ອງຕັ້ງຢູ່ບົນຈິດໃຈຮັບໃຊ້ປະຊາຊົນ ແລະ ປະເທດຊາດ, ແກ້ໄຂທັດສະນະ, ແນວຄິດຂີ້ຄ້ານມັກງ່າຍ, ບໍ່ຢາກຄົ້ນຄວ້າຮໍ່າຮຽນ; ຕ້ານ, ສະກັດກັ້ນ ແລະ ກຳຈັດປັດເປົ່າພະຍາດອາດຍາສິດ, ເອກະຊົນ, ແນວຄິດຄຳພີ, ກົນຈັກ... ໃນຖັນແຖວພະນັກງານ, ສະມາຊິກພັກ. ພັກເຮົາຍາມໃດກໍຖືເອົາວຽກງານກໍ່ສ້າງ ແລະ ບຳລຸງຍົກລະດັບໃຫ້ແກ່ຖັນແຖວພະນັກງານ, ສະມາຊິກພັກເປັນວຽກງານສຳຄັນຈຸດສຸມ, ປ່ຽນແປງໃໝ່ເນື້ອໃນ ແລະ ວິທີການປະຕິບັດຕົວຈິງກ່ຽວກັບວຽກງານພະນັກງານ ໂດຍເລີ່ມຈາກການຂຶ້ນແຜນກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານ, ສະມາຊິກພັກ, ຕິດຕາມ-ກວດກາຕີລາຄາ ແລະ ການປະຕິບັດນະໂຍບາຍຕໍ່ພະນັກງານ, ສະມາຊິກພັກ, ຫັນວຽກງານພະນັກງານເຂົ້າສູ່ນິຕິກຳລະບອບລະບຽບການໂດຍມີບາດກ້າວ ແລະ ມີຂັ້ນຕອນທີ່ເປັນລະບົບອັນຈະແຈ້ງ, ໂປ່ງໃສ ແນໃສ່ບຳລຸງສ້າງພະນັກງານ, ສະມາຊິພັກ ໃຫ້ໄດ້ທາງດ້ານປະລິມານ ແລະ ຄຸນນະພາບ, ຕອບສະໜອງກັບຄວາມຕ້ອງການອັນຈຳເປັນສຳລັບການເຊີດຊູຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບຂອງພັກເຮົາ ສະນັ້ນ, ການກໍ່ສ້າງ-ບຳລຸງພະນັກງານ, ສະມາຊິກພັກ ຈຶ່ງເປັນວຽກງານສຳຄັນທີ່ສຸດ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: ຢາກປະຕິບັດແນວທາງນະໂຍບາຍຂອງພັກໄດ້ ຕ້ອງມີກຳລັງພະນັກງານ, ສະມາຊິກພັກທີ່ເຂັ້ມແຂງເພາະວ່າພະນັກງານເປັນທຶນຮອນອັນປະເສີດທີ່ສຸດ ຂອງພັກ, ເປັນຜູ້ນຳພາປະຊາຊົນ, ເປັນຜູ້ຮັບໃຊ້ປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບມະຫາຊົນ, ຫຼັງຈາກພັກໄດ້ມີແນວທາງນະໂຍບາຍອັນຖືກຕ້ອງແລ້ວ, ທຸກວຽກງານປະຕິວັດຂອງພັກຈະດີຫຼືຮ້າຍ, ຈະມີໄຊຫຼືປະລາໄຊກໍ່ລ້ວນແຕ່ແມ່ນພະນັກງານຂອງພັກເປັນຜູ້ຕັດສິນ. ສະນັ້ນ, ການກໍ່ສ້າງ-ບຳລຸງພະນັກງານ, ສະມາຊິພັກ ຈຶ່ງເປັນວຽກງານສຳຄັນທີ່ສຸດ.

ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ກຳນົດທິດທາງໃນວຽກງານພະນັກງານໄວ້ວ່າ: ຕ້ອງສົມທົບລະຫວ່າງການບຳລຸງສ້າງຍົກລະດັບຄວາມຮູ້, ຄວາມສາມາດກັບການຊຸກຍູ້ ແລະ ປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດ ຂອງສະ

ມາຊິກພັກ-ພະນັກງານ ທີ່ນອນໃນແຜນກຳນົດ, ບັນລຸຕາມມາດຕະຖານ ແລະ ເງື່ອນໄຂ ໃຫ້ແກ່ຂະບວນການເລືອກເຟັ້ນ ແລະ ຈັດວາງເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ ແລະ ຖ້າໄດ້ຮັບການສັບຊ້ອນຈັດວາງເຂົ້າສູ່ຕຳແໜ່ງງານນຳພາ-ຄຸ້ມຄອງແລ້ວ ກໍສາມາດເສີມຂະຫຍາຍຄວາມຮູ້, ຄວາມສາມາດ ໃນການປະຕິບັດໜ້າທີ່. ທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດແຜນກຳນົດພະນັກງານ ຕ້ອງສອດຄ່ອງກັບຫຼັກການພື້ນຖານຂອງພັກ, ຮັບປະກັນລັກສະນະພາວະວິໄສ, ເປີດເຜີຍ ເພື່ອກະຕຸ້ນການແຂ່ງຂັນພັດທະນາຕົນເອງຂອງຖັນແຖວສະມາຊິກພັກ-ພະນັກງານ ແລະ ທັງໝົດຕ້ອງຢູ່ໃນຄວາມຮັບຜິດຊອບໂດຍກົງ ແລະ ເດັດຂາດ ຂອງຄະນະພັກແຕ່ລະຂັ້ນ.

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວ ອົງຄະນະພັກແຂວງຊຽງຂວາງ ກໍໄດ້ກຳນົດທິດທາງໃນວຽກງານພະນັກງານ ໃນມະຕິກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກແຂວງ ຄັ້ງທີ VIII ຂອງຕົນໄວ້ວ່າ: ເພີ່ມທະວີການຊີ້ນຳ-ນຳພາວຽກງານພະນັກງານໃຫ້ຖືກຕ້ອງສອດຄ່ອງກັບມະຕິ ແລະ ທິດນຳຂອງພັກ ຕ້ອງຮີບຮ້ອນ ສ້າງແຜນກຳນົດພະນັກງານຄືນໃໝ່, ສ້າງພະນັກງານຮຸ່ນໜຸ່ມ ເພື່ອສືບທອດປ່ຽນແທນພາລະກິດຂອງພັກ ໂດຍສະເພາະພະນັກງານນຳພາ-ຄຸ້ມຄອງໃຫ້ມີຄວາມຮູ້, ຄວາມສາມາດສົມຄູ່ກັບໜ້າທີ່ການເມືອງ, ສ້າງພະນັກງານໃຫ້ເປັນລະບົບຄົບຊຸດ ແລະ ສົມສ່ວນ, ໃນຕໍ່ໜ້ານີ້ຕ້ອງສຸມໃສ່ກໍ່ສ້າງພະນັກງານເພດຍິງ ແລະ ຊົນເຜົ່າໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງໜ້າທີ່ວຽກງານແຕ່ລະໄລຍະ, ເພີ່ມທະວີການນຳພາຂອງຄະນະພັກທຸກຂັ້ນ ຕໍ່ການບຳລຸງສ້າງພະນັກງານທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຕົວຈິງ ຂອງໜ້າທີ່ການເມືອງໃນໄລຍະໃໝ່, ເອົາໃຈໃສ່ຄຸ້ມຄອງພະນັກງານໃຫ້ຖືກຕ້ອງ, ແກ້ໄຂປະກົດການຫຍໍ້ທໍ້ຂອງພະນັກງານໃຫ້ໄດ້ຢ່າງຂາດຕົວ, ຕໍ່ຜູ້ທີ່ມີຜົນງານຕ້ອງໄດ້ຮັບການຍ້ອງຍໍສົມລະເສີນ ແລະ ປະຕິບັດນະໂຍບາຍຢ່າງເໝາະສົມ; ສຳລັບຜູ້ທີ່ລະເມີດລະບຽບກົດໝາຍກໍຕ້ອງປະຕິບັດວິໄນຢ່າງເຂັ້ມງວດ ແລະ ທັນການ.

ຕໍ່ກັບທິດທາງແຜນການທີ່ໄດ້ກຳນົດໄວ້ ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງຕົນຢ່າງເປັນເຈົ້າການ ໂດຍຖືເອົາວຽກງານການກໍ່ສ້າງ ແລະ ບຳລຸງພະນັກງານເປັນວຽກງານສຳຄັນ ແລະ ປັດໄຈຕັດສິນໃນການກໍ່ສ້າງ ແລະ ປັບປຸງການຈັດຕັ້ງແຕ່ລະຂັ້ນ ເພື່ອປະກອບເຂົ້າໃນກົງຈັກການຈັດຕັ້ງ ຮັບປະກັນໄດ້ປະລິມານ ແລະ ຄຸນນະພາບ ໂດຍເລີ່ມຈາກຈັດຕັ້ງ, ຜັນຂະຫຍາຍບັນດາມະຕິ, ຄຳສັ່ງຂອງພັກ ແລະ ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ກ່ຽວກັບວຽກພະນັກງານ ເຂົ້າສູ່ຊີວິດສັງຄົມຕົວຈິງຂອງພະນັກງານຢ່າງມີແຜນການ ແລະ ຈຸດສຸມ ເປັນຕົ້ນວ່າ: ການຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 031/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ ແລະ ມະຕິ ຂອງກົມການເມືອງສູນກາງພັກ ສະບັບ ເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ເລກທີ 073/ກມສພ, ລົງວັນທີ 14 ພຶດສະພາ 2019 ມະຕິ ວ່າດ້ວຍການສ້າງແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 04/ຄບສພ, ລົງວັນທີ 30 ກັນຍາ

2021 ວ່າດ້ວຍການເພີ່ມທະວີການນໍາພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ແລະ ກົດໝາຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 15 ທັນວາ 2015 ເພື່ອໃຫ້ຄະນະພັກແຕ່ລະຂັ້ນສາມາດກໍາໄດ້ ແລະ ນໍາໄປຈັດຕັ້ງປະຕິບັດໃຫ້ສອດຄ່ອງ ໂດຍສະເພາະແມ່ນພະນັກງານນໍາພາ-ຄຸ້ມຄອງ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ແລະ ຖືເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ. ໂດຍສະເພາະແມ່ນຄະນະຈັດຕັ້ງແຂວງ, ຄະນະຈັດຕັ້ງເມືອງໄດ້ສົມທົບພາກສ່ວນທີ່ກ່ຽວຂ້ອງສ້າງແຜນ ແລະ ປະເມີນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ ຂັ້ນຕົນຄຸ້ມຄອງສໍາເລັດໄປພ້ອມກັບຄະນະພັກແຕ່ລະຂັ້ນໄດ້ມີການຄັດເລືອກເອົາພະນັກງານທີ່ມີຄວາມບຸກບືນ, ຫ້າວຫັນ, ມີຄວາມຮັບຜິດຊອບ, ມີຄຸນສົມບັດສິນທໍາປະຕິວັດ, ເປັນພະນັກງານທີ່ຢູ່ໃນແຜນກໍານົດ ແລະ ຢູ່ໃນແຜນການກໍ່ສ້າງໄປຮຽນທິດສະດີ ແລະ ວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເປັນພະນັກງານສືບທອດປ່ຽນແທນໃນຕໍ່ໜ້າໄດ້ທັງໝົດ 853 ສະຫາຍ, ຍິງ 192 ສະຫາຍຄື: ພາຍໃນປະເທດຍົກລະດັບດ້ານວິຊາສະເພາະ: ຊັ້ນປະລິນຍາໂທ 11 ສະຫາຍ, ຍິງ 1 ສະຫາຍ, ປະລິນຍາຕີ 4 ສະຫາຍ, ຍິງ 1 ສະຫາຍ, ຊັ້ນຕົ້ນ 52 ສະຫາຍ, ຍິງ 21 ສະຫາຍ; ດ້ານທິດສະດີ: ຂັ້ນສູງ 4 ສະຫາຍ, ຍິງ 0 ສະຫາຍ, ຂັ້ນຕົ້ນ 264 ສະຫາຍ, ຍິງ 59 ສະຫາຍ, ບໍາລຸງໄລຍະສັ້ນ 485 ສະຫາຍ, ຍິງ103 ສະຫາຍ. ຕ່າງປະເທດ 33 ສະຫາຍ, ຍິງ 7 ສະຫາຍ ໃນນັ້ນ, ດ້ານວິຊາສະເພາະ: ຊັ້ນປະລິນຍາເອກ 1 ຄົນ, ຊັ້ນປະລິນຍາໂທ 6 ຄົນ, ຍິງ 2 ຄົນ,ປະລິນຍາຕີ 3 ຄົນ, ຍິງ 1 ຄົນ, ຮຽນພາສາຫວຽດນາມໄລຍະ 10 ເດືອນ 21 ຄົນ, ຍິງ 3 ຄົນ, ຝຶກອົບຮົມຫົວຂໍ້ສະເພາະ 2 ສະຫາຍ, ຍິງ 1 ສະຫາຍ.

ປະຈຸບັນ ພະນັກງານ-ລັດຖະກອນທົ່ວແຂວງ ມີ 8.229 ຄົນ, ຍິງ 3.833 ຄົນ, ໃນນີ້ພະນັກງານຂັ້ນແຂວງ 1.942 ຄົນ, ຍິງ 868 ຄົນ, ພະນັກງານຂັ້ນເມືອງ 6.287 ຄົນ, ຍິງ 2.965 ຄົນ; ລະດັບວິຊາສະເພາະຂອງພະນັກງານ-ລັດຖະກອນ: ປະລິນຍາເອກ 4 ຄົນ, ປະລິນຍາໂທ 297 ຄົນ, ຍິງ 64 ຄົນ, ປະລິນຍາຕີ 2.835 ຄົນ, ຍິງ 1.046 ຄົນ, ຊັ້ນສູງ 3.710 ຄົນ, ຍິງ 1.899 ຄົນ, ຊັ້ນກາງ 1.419 ຄົນ, ຍິງ 835 ຄົນ, ຊັ້ນຕົ້ນ 100 ຄົນ, ຍິງ 44 ຄົນ, ບໍ່ມີວິຊາສະເພາະ 3 ຄົນ; ລະດັບທິດສະດີ: ຂັ້ນສູງ 214 ສະຫາຍ, ຍິງ 27 ສະຫາຍ, ຂັ້ນກາງ 324 ສະຫາຍ, ຍິງ 71 ສະຫາຍ, ຂັ້ນຕົ້ນ 71 ສະຫາຍ, ຍິງ 26 ສະຫາຍ, ບໍາລຸງ 26 ສະຫາຍ, ຍິງ 8 ສະຫາຍ.

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມາຂ້າງເທິງນັ້ນ ຖ້າທຽບໃສ່ຄວາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນປະຈຸບັນເຫັນວ່າ ຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນເງື່ອນໄຂໃໝ່ ຍັງມີບາງບັນຫາທີ່ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ສະແດງອອກດັ່ງນີ້:

ໜຶ່ງ, ການສ້າງແຜນບໍາລຸງ-ກໍ່ສ້າງພະນັກງານຂອງບັນດາພະແນກການ, ອົງການ ແລະ ເມືອງຈໍານວນໜຶ່ງຍັງບໍ່ທັນລະອຽດ, ຍັງບໍ່ທັນເຫັນໄດ້ພະນັກງານທີ່ດີເດັ່ນ, ມີຄວາມຫ້າວຫັນ ເພື່ອໄປຮຽນລະດັບຄວາມຮູ້ຕ່າງໆ ຢູ່ທັງພາຍໃນ ແລະ ຕ່າງປະເທດ.

ສອງ, ການແບ່ງຕົວເລກຂອງຄະນະຈັດຕັ້ງແຂວງໃຫ້ແຕ່ລະພະແນກການ, ແຕ່ລະເມືອງ ແລະ ຮາກຖານຍັງຈໍາກັດ ໂດຍສະເພາະແມ່ນບັນດາເມືອງມີຕົວເລກແບ່ງປັນໜ້ອຍຖືວ່າຍັງບໍ່ທັນສົມດູນເຫື່ອເຮັດໃຫ້ການຂຶ້ນແຜນການກໍ່ສ້າງພະນັກງານ, ສະມາຊິກພັກພົບກັບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນບັນຫາຄວາມຮູ້, ຄວາມສາມາດ ແລະ ທາງດ້ານທິດສະດີການເມືອງ ແລະ ການປົກຄອງ.

ສາມ, ພະນັກງານ, ສະມາຊິກພັກ ຈຳນວນໜຶ່ງທີ່ສົ່ງໄປກໍ່ສ້າງເມື່ອກັບມາປະຕິບັດໜ້າທີ່ວຽກງານຕົວຈິງຍັງບໍ່ທັນໄດ້ ເປັນຕົ້ນແມ່ນລະດັບຄວາມຮູ້, ຄວາມສາມາດຕໍ່ແນວທາງປ່ຽນແປງໃໝ່ຂອງພັກຍັງບໍ່ທັນເລິກເຊິ່ງ, ຄຸນທາດການເມືອງຍັງບໍ່ທັນໜັກແໜ້ນ, ສະຕິຕື່ນຕົວທາງດ້ານການເມືອງຍັງບໍ່ທັນສູງ.

ສີ່, ການຫັນເອົາພະນັກງານລົງເຮັດວຽກຕົວຈິງຢູ່ຮາກຖານບ້ານຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ ໂດຍສະເພາະແມ່ນການເອົາພະນັກງານຂັ້ນແຂວງລົງກໍ່ສ້າງຮາກຖານການເມືອງຢູ່ບ້ານ, ກຸ່ມບ້ານຂອງບັນດາເມືອງ.

ເພື່ອເຮັດໃຫ້ການກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກຢູ່ແຂວງຊຽງຂວາງ ຫັນໄປສູ່ຄຸນນະພາບສາມາດຕອບສະໜອງໄດ້ກັບສະພາບເງື່ອນໄຂຕົວຈິງຂອງໜ້າທີ່ການເມືອງໃນຕໍ່ໜ້າ ຕາມທັດສະນະຂອງຜູ້ຂຽນຂໍມີບາງຄຳເຫັນບາງດ້ານດັ່ງນີ້:

1). ການສ້າງແຜນກຳນົດກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກຢູ່ແຂວງຊຽງຂວາງ ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ຕ້ອງມີຄວາມຮັບຜິດຊອບ, ເຮັດເປັນປົກກະຕິ ແລະ ດຳເນີນການກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກ ຕາມແຜນກຳນົດນັ້ນຢ່າງສະເໝີຕົ້ນສະເໝີປາຍ, ການຂຶ້ນແຜນກຳນົດສ້າງພະນັກງານສະມາຊິກພັກ ຕ້ອງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບຂອງພະນັກງານ, ສະມາຊິກພັກແຕ່ລະປະເພດ, ແຕ່ລະຂັ້ນ ບົນພື້ນຖານນັ້ນຄວາມຖືກຕ້ອງ, ຊັດເຈນ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ເພາະ ການຂຶ້ນແຜນກຳນົດກໍ່ສ້າງແມ່ນອີງໃສ່ສະພາບຄວາມເປັນຈິງ ແລະ ໜ້າທີ່ການເມືອງ ຂອງແຂວງຊຽງຂວາງ, ຕ້ອງມີແຜນດັດສົມ ຄວາມດຸ່ນດ່ຽງອັດຕາສ່ວນພະນັກງານ, ສະມາຊິກພັກທັງ 3 ຮຸ່ນຄື: ພະນັກງານ-ສະມາຊິກພັກອາວຸໂສ, ພະນັກງານ-ສະມາຊິກພັກປ່ຽນແທນ ແລະ ພະນັກງານ-ສະມາຊິກພັກສືບທອດ.

2). ຄະນະພັກ, ຄະນະນຳຂັ້ນແຂວງ ແລະ ເມືອງ ໂດຍສະເພາະແມ່ນຄະນະຈັດຕັ້ງແຂວງ ຄວນເອົາໃຈໃສ່ໃນການກວດກາ, ຕີລາຄາການຂຶ້ນແຜນກຳນົດພະນັກງານ-ສະມາຊິກພັກ ຂອງບັນດາພະແນກການ, ຂະແໜງການ ແລະ ເມືອງຢ່າງເປັນລະບົບເພື່ອກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກ ເປັນຕົ້ນແມ່ນກວດກາສະພາບຄວາມເປັນຈິງ ແລະ ຄວາມຕ້ອງການໃນການແບ່ງປັນຕົວເລກກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກດັ່ງກ່າວໃຫ້ແທດເໝາະ ແລະ ຖືກຕ້ອງສອດຄ່ອງ ກັບໜ້າທີ່ການເມືອງໃນໄລຍະປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການຂອງພັກສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ເປັນລະບົບຄົບຊຸດ ແລະ ຮອບດ້ານ, ຖືກຕ້ອງຕາມມາດຕະຖານຂອງພະນັກງານ, ສະມາຊິກພັກແຕ່ລະປະເພດ; ຖືເອົາວຽກງານນີ້ເປັນວຽກປົກກະຕິ ແລະ ຕໍ່ເນື່ອງ, ສຸມໃສ່ພະນັກງານ, ສະມາຊິກພັກ ເພື່ອປະກອບໃຫ້ເມືອງ ແລະ ຮາກຖານຕາມທິດ 3 ສ້າງ ພິເສດຕ້ອງກໍ່ສ້າງພະນັກງານ, ສະມາຊິກພັກກັບທີ່, ພະນັກງານຊົນເຜົ່າ ແລະ ເພດ ເພື່ອຮັບປະກັນໃຫ້ເມືອງ ແລະ ຮາກຖານມີກຳລັງໃນການສ້າງຄວາມເຂັ້ມແຂງໃນໜ້າທີ່ວຽກງານ.

3). ຄະນະພັກແຕ່ລະຂັ້ນ ຄວນເອົາໃຈໃສ່ກຳແໜ້ນພະນັກງານ, ສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທາງດ້ານຄຸນນະພາບ ເປັນຕົ້ນແມ່ນດ້ານຄວາມຮູ້, ຄວາມສາມາດ, ດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ທັດສະນະຂອງພັກ ຊອກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ເພື່ອເສີມຂະຫຍາຍ ແລະ ປັບປຸງແກ້ໄຂ, ສ້າງໃຫ້ເຂົາເຈົ້າ ກາຍເປັນພະນັກ

ຕໍ່ຈາກໜ້າ 42

ອົງຄະນະພັກແຂວງໄຊສົມບູນ ຖືເອົາການຍົກສູງ ຄຸນທາດການເມືອງ ໃຫ້ພະນັກງານ-ສະມາຊິກພັກ ເປັນບັນຫາສຳຄັນ ແລະ ຮີບດ່ວນ

ໂດຍ: ປູ່ງລໍ່ ຫວາເຊັ້ງ

ການປະຕິວັດຂອງພວກເຮົາຍິ່ງຮຽກຮ້ອງໃຫ້ພະນັກງານສະມາຊິກພັກເວົ້າລວມ, ເວົ້າສະເພາະ ພະນັກງານນຳພາ ແລະ ພະນັກງານຄຸ້ມຄອງຕ້ອງມີຄຸນທາດການເມືອງ ທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີນ້ຳໃຈຮັບໃຊ້ຊາດຮັບໃຊ້ປະຊາຊົນ ດ້ວຍຄວາມບໍລິສຸດໃຈ, ມີແບບແຜນດຳລົງຊີວິດ, ມີຫົວຄິດປະດິດສ້າງ, ມີຄວາມກະຕືລືລົ້ນ ແລະ ມີຄວາມຈົງຮັກພັກດີຕໍ່ພັກລັດກໍ່ຄືຕໍ່ປະເທດຊາດ ຄຸນທາດການເມືອງເນື້ອແທ້ແມ່ນ ໝາຍເຖິງທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະຫຼັກໝັ້ນມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນ ຕໍ່ອຸດົມການຂອງສັງຄົມນິຍົມ ຂອງພະນັກງານ-ສະມາຊິກພັກແຕ່ລະຄົນ ນອກຈາກນັ້ນຍັງສ່ອງແສງເຖິງຄວາມສາມາດໃນການຈັດຕັ້ງປະຕິບັດແນວທາງຂອງພັກ ລະບຽບກົດໝາຍຂອງລັດອີກດ້ວຍ. ດັ່ງນັ້ນ, ຄຸນທາດການເມືອງ, ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດ ຈຶ່ງມີສາຍກ່ຽວພັນເຊິ່ງກັນ ແລະ ກັນ ແບບກາຍອິນຊີ ແລະ ມີຜົນສະທ້ອນຕໍ່ກັນ ຈຶ່ງກາຍເປັນຄຸນນະພາບຂອງພະນັກງານນຳພັກ-ຄຸ້ມຄອງ ປະທານໂຮ່ຈິມິນໄດ້ຂຽນໄວ້ວ່າ: ພະນັກງານ ແມ່ນກົກຂອງທຸກວຽກງານ ແລະ ວຽກງານຈະປະສົບຜົນສຳເລັດ ຫຼື ປະລາໄຊ ກໍແມ່ນມາຈາກພະນັກງານດີ ຫຼື ອ່ອນ. ປະທານ ໄກສອນ ພົມວິຫານ ກໍໄດ້ຢັ້ງຢືນວ່າ: ພະນັກງານເປັນຜູ້ຕັດສິນຜົນໄດ້-ຜົນເສຍ ຂອງແນວທາງ. ພະນັກງານ ແມ່ນບຸກຄົນທີ່ເຕີບໃຫຍ່ມາຈາກຂະບວນການຂອງມະຫາຊົນ; ແມ່ນຜູ້ທີ່ດຸໝັ່ນຫ້າວຫັນອອກແຮງງານ ດ້ວຍຕີນມື-ມັນສະໝອງ, ບໍ່ກົດຂີ່ຂູດຮີດແຮງງານ ຂອງຜູ້ອື່ນ, ເປັນແບບຢ່າງທຸກການເຄື່ອນໄຫວຂອງພັກ, ມີອຸດົມການໜັກແໜ້ນ, ມີຈຸດປະສົງອັນແນ່ນອນ, ມີຫຼັກການຈັດຕັ້ງທີ່ເປັນເອກະລັກ, ມີລະບຽບວິໄນ, ມີຄວາມສາມັກຄີເປັນເອກະພາບ ໃນດ້ານການເມືອງ-ແນວຄິດ ກໍ່ຄືການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ. ສະມາຊິກພັກປະຊາຊົນປະຕິວັດລາວ ແມ່ນນັກຮົບປະຕິວັດໃນກອງນຳໜ້າຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ, ແມ່ນບຸກຄົນທີ່ຊື່ສັດບໍລິສຸດ, ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ມີນ້ຳໃຈຮັກຊາດ, ຍອມເສຍສະຫຼະທຸກສິ່ງທຸກຢ່າງເພື່ອຊາດ, ມີການພົວພັນສະໜິດແໜ້ນກັບມະຫາ

ຊົນ, ມີແບບແຜນການດຳລົງຊີວິດທີ່ປອດໃສຂາວສະອາດ, ເປັນແບບຢ່າງໃນການຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ຄຸນທາດການເມືອງ ແມ່ນຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ ທັດສະນະຫຼັກໝັ້ນຊົນຊັ້ນ ມິດ-ສັດຕູ; ແມ່ນອົງປະກອບໜຶ່ງທີສຳຄັນຢູ່ໃນຄຸນະພາບຂອງພະນັກງານ, ສະມາຊິກພັກ, ເປັນມາດຖານທີຢູ່ແຖວໜ້າຂອງທຸກຂົງເຂດວຽກງານ ເປັນປັດໄຈທີ່ພະນັກງານ, ສະມາຊິກພັກແຕ່ລະຄົນ, ແຕ່ລະສະຫາຍ ຂາດບໍ່ໄດ້ທີ່ສະແດງອອກໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ. ຄຸນທາດການເມືອງຂອງພະນັກງານ, ສະມາຊິກພັກໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການຢ່າງພາວະວິໄສ, ທັງເປັນບັນຫາພື້ນຖານ ແລະ ຮີບດ່ວນທີ່ສຸດ ຂອງລະບອບການເມືອງໃນປະຈຸບັນ. ທຸກພາລະກິດຂອງພັກເຮົາເວລາໃດກໍ່ໄດ້ເນັ້ນໜັກເຖິງການກໍ່ສ້າງຖັນແຖວພະນັກງານ, ສະມາຊິກພັກ ໃຫ້ມີຄຸນທາດການເມືອງອັນໜັກແໜ້ນ, ມີຄວາມຮູ້ຄວາມສາມາດຈັດຕັ້ງປະຕິບັດແນວທາງ-ນະໂຍບາຍຂອງພັກ-ລັດ ໃຫ້ປະກົດຜົນເປັນຈິງ. ການປະຕິວັດຂະຫຍາຍຕົວເທົ່າໃດ ຍິ່ງເລັ່ງທວງໃຫ້ພະນັກງານ, ສະມາຊິກພັກ ມີຄຸນທາດການເມືອງປະຕິວັດໃຫ້ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ ແລະ ຄວາມສາມາດສູງຂຶ້ນ.

ການຍົກສູງຄຸນທາດການເມືອງໃຫ້ພະນັກງານ, ສະມາຊິກພັກ ແມ່ນປັດໄຈໜຶ່ງທີ່ເປັນກຳລັງແຮງໃນພາລະກິດປະຕິວັດ ແລະ ການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ. ການກໍ່ສ້າງຖັນແຖວພະນັກງານ, ສະມາຊິກພັກ ແມ່ນປັດໄຈສຳຄັນທີ່ສຸດຂອງໜ້າທີ່ວຽກງານທີພັກ ແລະ ລັດຖະບານວາງອອກ ເພາະວ່າພະນັກງານ ແມ່ນກ້ອນຫີນຮອນອັນສຳຄັນຂອງພັກ, ພະນັກງານເປັນຂໍ້ຕໍ່ລະຫວ່າງພັກ ແລະ ປະຊາຊົນ ເປັນຜູ້ຮັບໃຊ້ປະຊາຊົນ, ນຳພາປະຊາຊົນຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ. ບໍ່ວ່າໄລຍະໃດ, ເວລາ ພັກເຮົາຖືສະເໝີວ່າ ຖ້າບໍ່ມີທິດສະດີປະຕິວັດ ອາດຈະບໍ່ມີຂະບວນການປະຕິວັດ ໃນເມື່ອພັກມີແນວທາງອັນຖືກຕ້ອງແລ້ວ ບໍ່ວ່າທຸກໆວຽກງານຂອງພັກ ຈະສຳເລັດ ຫຼື ບໍ່ສຳເລັດ; ຈະດີ ຫຼື ຊົ່ວ ແມ່ນຂຶ້ນກັບພະນັກງານຂອງພັກ ເປັນຜູ້ຕັດສິນ ໂດຍກົງ. ປະທານ ໄກສອນ ພົມວິຫານ ໄດ້ມີທັດສະນະວ່າ: "ຢາກໃຫ້ສຳເລັດທຸກໜ້າທີ່ວຽກງານ ບັນຫາສຳຄັນ ແລະ ຈຳເປັນທີ່ສຸດ ແມ່ນພັກຕ້ອງໄດ້ກໍ່ສ້າງ ແລະ ບຳລຸງ ຖັນແຖວພະນັກງານ, ສະມາຊິກພັກ ທາງດ້ານຄຸນນະພາບໃຫ້ພຽບພໍ ຢຶດໝັ້ນລັດທິມາກ-ເລນິນ; ມີທັງຄຸນສົມບັດສິນທຳປະຕິວັດ, ມີຄວາມສາມາດ, ຈິດໃຈເດັດດ່ຽວຕໍ່ການປະຕິວັດ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ມີສະຕິຕໍ່ການຈັດຕັ້ງ ແລະ ຄວາມຮັບຜິດຊອບສູງຕໍ່ໜ້າທີວຽກງານຂອງການປະຕິວັດ ທີ່ພັກ ແລະ ລັດ ໄດ້ມອບໝາຍໃຫ້ ບັນລຸຕາມລະດັບຄາດໝາຍ".

ທົ່ວແຂວງໄຊສົມບູນ ມີສະມາຊິກພັກທັງໝົດ 49.120 ສະຫາຍ, ຍິງ 11.14 ສະຫາຍ, ມີພະນັກງານ-ລັດຖະກອນ 3.497 ທ່ານ, ຍິງ 1.147 ທ່ານ; ການບຳລຸງກໍ່ສ້າງພະນັກງານພື້ນຖານ ແມ່ນປະຕິບັດຕາມແຜນກຳນົດພະນັກງານ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຫຼື ຕາມຕຳແໜ່ງງານທີ່ຕ້ອງການ,

ການກໍ່ສ້າງ ແລະ ບຳລຸງພະນັກງານດັ່ງກ່າວ ແມ່ນໄດ້ກໍ່ສ້າງຕາມເງື່ອນໄຂຕົວຈິງ ເປັນຕົ້ນແມ່ນພະນັກງານສືບທອດປ່ຽນແທນ, ຜູ້ທີ່ມີລະດັບຄວາມຮັບຮູ້ດ້ານວິຊາສະເພາະ ແລະ ດ້ານທິດສະດີການເມືອງ ທົ່ວແຂວງໄຊສົມບູນ ປີ 2022 ມີພະນັກງານທີ່ໄດ້ຮັບການຍົກລະດັບວິຊາສະເພາະທາງພາຍໃນ ແລະ ຕ່າງປະເທດ ລວມມີ 156 ສະຫາຍ, ຍິງ 26 ສະຫາຍ, ປະລິນຍາເອກ 01 ຄົນ; ປະລິນຍາໂທ 37 ຄົນ, ຍິງ 05 ຄົນ; ປະລິນຍາຕີ 40 ຄົນ, ຍິງ 08 ຄົນ; ຊັ້ນສູງ 16 ຄົນ, ຍິງ 04 ຄົນ ແລະ ຊັ້ນກາງ 62 ຄົນ, ຍິງ 09 ຄົນ ນອກຈາກການກໍ່ສ້າງພະນັກງານ, ສະມາຊິກພັກທາງດ້ານວິຊາສະເພາະແລ້ວ ຍັງໄດ້ກໍ່ສ້າງທາງດ້ານທິດສະດີການເມືອງ ແລະ ການປົກຄອງຈຳນວນໜຶ່ງຄື: ກໍ່ສ້າງທິດສະດີຊັ້ນສູງ ມີ 08 ຄົນ, ຍິງ 02 ຄົນ; ຊັ້ນກາງ ມີ 12 ຄົນ, ຍິງ 04 ຄົນ ແລະ ບຳລຸງທິດສະດີໄລຍະສັ້ນ 45 ວັນ 60 ຄົນ, ຍິງ 12 ຄົນ.

ຄະນະພັກ, ຄະນະນຳແຂວງໄຊສົມບູນ ຍາມໃດກໍ່ໄດ້ເອົາໃຈໃສ່ຕໍ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ ເປັນວຽກງານຕົ້ນຕໍ ໃນການນຳພາຂອງພັກ ເປັນຕົ້ນແມ່ນໄດ້ນຳເອົາແນວທາງນະໂຍບາຍຂອງພັກ; ມະຕິ, ຄຳສັ່ງຂອງພັກ ແລະ ລັດຖະບານ ມາຈັດຕັ້ງເຊື່ອມຊຶມໃຫ້ພະນັກງານ, ສະມາຊິກພັກພາຍໃນແຂວງຮັບຊາບ ເຮັດໃຫ້ພະນັກງານ, ສະມາຊິກພັກແຕ່ລະທ່ານແຕ່ລະສະຫາຍ ມີຄວາມຮັບຮູ້ ແລະ ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຢ່າງເລິກເຊິ່ງ, ເປັນກຳລັງແຮງຕົ້ນຕໍໃນພາລະກິດການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຍຶດໝັ້ນອຸດົມການຂອງພັກ, ມີສະຕິສູງຕໍ່ກົນອຸບາຍການຫັນປ່ຽນຂອງພວກທີ່ກຳລັງປໍລະປັກ ແລະ ກຸ່ມຄົນທີ່ບໍ່ຫວັງດີ ນອກຈາກການຈັດຕັ້ງເຊື່ອມຊຶມຢູ່ຂັ້ນແຂວງແລ້ວ ຍັງໄດ້ມອບໝາຍໃຫ້ຄະນະພັກຂັ້ນຮາກຖານບ້ານຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ຢູ່ຂັ້ນຮາກຖານບ້ານ ມີຄວາມເຂົ້າໃຈໃຫ້ທົ່ວເຖິງ ໂດຍການເປີດບັ້ນດຳເນີນຊີວິດການເມືອງຂອງໜ່ວຍພັກ; ຈັດຕັ້ງປາຖະກະຖາ, ເຫຼົ້າມູນເຊີ້ນວັນສຳຄັນຕ່າງໆຂອງພັກ-ຂອງຊາດ, ໂຄສະນາເຜີຍແຜ່ທາງໂທລະໂຄ່ງ ເຮັດໃຫ້ຮາກຖານບ້ານ ມີຄວາມເຂົ້າໃຈເລິກເຊິ່ງ; ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ, ມີຈິດໃຈບຸກບືນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ມີຜົນສຳເລັດ, ມີການພັດທະນາຊີວິດການເປັນຢູ່ດີຂຶ້ນເລື້ອຍໆ.

ຄຽງຄູ່ກັບຜົນສຳເລັດ ຖ້າຈະທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ-ລັດ ໃນລະຍະໃໝ່ຂອງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເວົ້າລວມ, ເວົ້າສະເພາະຢູ່ແຂວງໄຊສົມບູນ ພະນັກງານ, ສະມາຊິກພັກທີ່ມີຄຸນທາດການເມືອງ ຍັງແມ່ນຄວາມຮຽກຮ້ອງຕ້ອງການຢ່າງພາວະວິໄສ ການສຶກສາອົບຮົມການເມືອງ-ແນວຄິດ, ການບຳລຸງ-ກໍ່ສ້າງພະນັກງານ, ສະມາຊິກພັກ ຕ້ອງໄດ້ຖືສຳຄັນ ເປັນບັນຫາກົກແຖວໜ້າ ໃນທຸກຂົງເຂດວຽກງານຂອງພັກ ແລະ ລັດຖະບານຍັງມີຂໍ້ຈຳກັດ ແລະ ຄົງຄ້າງເປັນພື້ນຖານ ເຊິ່ງຈຳເປັນຕ້ອງໄດ້ເອົາໃຈໃສ່ສືບຕໍ່ປັບປຸງ ແລະ ແກ້ໄຂບາງຈຸດດັ່ງລຸ່ມນີ້:

ໜຶ່ງ: ພະນັກງານ, ສະມາຊິກພັກຈຳນວນໜຶ່ງຍັງຈຳກັດດ້ານຄວາມຮູ້ ແລະ ປະສົບການ ເປັນຕົ້ນແມ່ນ

ດ້ານການເມືອງ-ແນວຄິດ ບັນຫາພື້ນຖານກໍ່ແມ່ນມາຈາກການຂອກຮູ້, ຂອກຮຽນ, ການຝຶກຝົນຫຼໍ່ຫຼອມຕົວເອງ, ມີແນວຄິດເສື່ອມຖອຍ, ປະລະອຸດົມການປະຕິວັດ, ເລືອກວຽກ-ເລື່ອກງານ ທີ່ມີຜົນປະໂຫຍດສູງ, ຄວາມເປັນເຈົ້າການຕໍ່ໜ້າທີ່ວຽກງານ ຂອງພັກ-ລັດ ບໍ່ມີຄວາມຮັບຜິດຊອບ ຈຶ່ງເຮັດໃຫ້ແນວທາງ, ທິດທາງ, ຄາດໝາຍສູ້ຊົນຂອງພັກ-ລັດ ກໍ່ຄືຂອງແຂວງ ບໍ່ສາມາດໄດ້ຮັບການປະຕິບັດ ໃຫ້ໄດ້ຕາມເປົ້າໝາຍທີ່ໄດ້ກຳນົດໄວ້.

ສອງ: ພາກສ່ວນຮັບຜິດຊອບວຽກງານສຶກສາອົບຮົມ, ບຳລຸງ-ກໍ່ສ້າງພະນັກງານ, ສະມາຊິກພັກ ຂອງແຂວງ ຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ, ເປັນຕົ້ນແມ່ນການໂຄສະນາເຜີຍແຜ່, ການຈັດຕັ້ງປາຖະກະຖາຍັງມີລັກສະນະຈຳກັດເຮັດງ່າຍ, ການສຶກສາອົບຮົມການເມືອງແນວຄິດ ໃຫ້ພະນັກງານ, ສະມາຊິກ ມີລັກສະນະລວມໄດ້ແຕ່ປະລິມານ ດ້ານຄຸນນະພາບບໍ່ສູງ, ການສຶກສາອົບຮົມບາງຄັ້ງ ແມ່ນຍັງບໍ່ທັນກຳແໜ້ນຫຼັກມູນ ແລະ ທິດສະດີຂອງມາກ-ເລນິນ ແລະ ແນວທາງຂອງພັກພັກ ຈຶ່ງເຮັດໃຫ້ການໝູນໃຊ້ທິດສະດີມາກ-ເລນິນຂາດຫົວຄິດປະດິດສ້າງ, ການກະຕຸກຊຸກຍູ້ ອຳນວຍຄວາມສະດວກຕໍ່ອົງການດັ່ງກ່າວຍັງຈຳກັດ, ການຄົ້ນຄວ້າ, ວິໄຈບັນຫາການກໍ່ສ້າງພະນັກງານ, ສະມາຊິກພັກຍັງມີລັກສະນະຈຸ້ມເຈື້ອເຊື້ອສາຍ, ຄົນເຈົ້າ ຄົນຂ້ອຍ, ການກໍ່ສ້າງ ເພື່ອເປັນພະນັກງານສືບທອດປ່ຽນແທນຈຶ່ງບໍ່ຖືກເປົ້າໝາຍ.

ສາມ: ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຍັງເຮັດແບບລວມໆ; ບໍ່ຖືສຳຄັນ ເຮັດໄດ້ກໍ່ເຮັດ ເຮັດບໍ່ໄດ້ກໍ່ຢ່າ ເຖິງຈະເຮັດກໍ່ບໍ່ໄດ້ຄຸນນະພາບ ການສຶກສາອົບຮົມມີລັກສະນະຊັກຊ້າ ແກ່ຍາວ, ບໍ່ທັນກັບເວລາ ຍິ່ງໄປກວ່ານັ້ນຍັງຖິ້ມຄວາມຮັບຜິດຊອບໃຫ້ບັນດາອົງການ ທີ່ບໍ່ທີເປັນເສນາທິການຂອງພັກ-ລັດ ເຮັດໃຫ້ພະນັກງານສະມາຊິກພັກ ຈຳນວນໜຶ່ງ ຂາດຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ອຸດົມການຂອງພັກຫຼຸດໜ້ອຍເທື່ອລະກ້າວ.

ສີ່: ການຈັດວາງ, ສັບຊ້ອນພະນັກງານໃສ່ຕຳແໜ່ງານຕ່າງໆ ຂອງບາງຂະແໜງການ-ອົງການ ຍັງບໍ່ທັນສອດຄ່ອງເໝາະສົມກັບລະດັບຄວາມຮູ້ ຄວາມສາມາດຕົວຈິງ, ຍັງມີລັກສະນະຈຸ້ມເຈື້ອເຊື້ອສາຍຄົນເຈົ້າຄົນຂ້ອຍ ພັກພວກ ແລະ ຍັງມີການແລກປ່ຽນຊື້ຈ້າງໄປນຳກັນ.

ເພື່ອເຮັດໃຫ້ການຍົກສູງຄຸນທາດການເມືອງໃຫ້ພະນັກງານ-ສະມາຊິກພັກ ຢູ່ແຂວງໄຊສົມບູນມີປະສິດທິຜົນ ແລະ ປະສິດທິພາບ ໃຫ້ສູງຂຶ້ນ ຕ້ອງເອົາໃຈໃສ່ທິດທາງດັ່ງລຸ່ມນີ້:

1. ຄະນະນຳ, ອົງການປົກຄອງຂອງແຂວງໄຊສົມບູນ ຕ້ອງເພີ່ມທະວີຢ່າງໃກ້ຊິດໃນການຊີ້ນຳ-ນຳພາບັນດາອົງການທີ່ເປັນເສນາທິການ ທາງດ້ານການເມືອງ-ແນວຄິດ ເຊັ່ນ: ຄະນະຈັດຕັ້ງແຂວງ ຄະນະໂຄສະນາອົບຮົມຂັ້ນແຂວງ, ຂັ້ນເມືອງ ແລະ ໂຮງຮຽນການເມືອງ ແລະ ການປົກຄອງແຂວງ ຕ້ອງໄດ້ຍົກສູງປະສິດທິພາບໃນການກໍ່ສ້າງພັກ, ພະນັກງານ, ເອົາໃຈໃສ່ກໍ່ສ້າງ ແລະ ບຳລຸງໃຫ້ຖັນແຖວພະນັກງານ, ສະມາຊິກພັກ ເພື່ອແນໃສ່ກຳແໜ້ນລັດທິມາກ-ເລນິນ, ກຳແໜ້ນແນວ

ທາງການເມືອງຂອງພັກໃນແຕ່ລະໄລຍະ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ສ້າງທຸກເງື່ອນໄຂ ໃຫ້ເຂົາເຈົ້າຮັບຮູ້ ແລະ ເຂົ້າໃຈວິທີການນຳພາຄຸ້ມຄອງທີ່ມີວິທະຍາສາດ, ຮູ້ຄົ້ນຄວ້າພິຈາລະນາ ແກ້ໄຂບາງບັນຫາໃຫ້ຖືກຕ້ອງສັດຈະວິພາກທັນກັບເວລາ.

2. ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ມາດຕະຖານຂອງພະນັກງານ, ສະມາຊິກພັກ ເປັນພິເສດ ເປັນຕົ້ນແມ່ນມາດຕະຖານດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້ຄວາມສາມາດ ເພື່ອໃຫ້ພະນັກງານ, ສະມາຊິກພັກ ແຕ່ລະສະຫາຍມີສະຕິເຄົາລົບ, ການຝຶກຝົນຫຼໍ່ຫຼອມໃນການຍົກສູງຄວາມຮັບຜິດຊອບຂອງຕົນໃຫ້ດີຂຶ້ນເທື່ອລະກ້າວ.

3. ຕ້ອງເພີ່ມທະວີໃນການຄົ້ນຄວ້າທິດສະດີການເມືອງ ແລະ ການປົກຄອງ; ຮູ້ສົມທຽບໃສ່ພຶດຕິກຳຕົວຈິງ ໂດຍມີການເລືອກເຟັ້ນບັນຫາທີ່ມີຄຸນນະພາບ ແລະ ເປັນບົດຮຽນ ແກ່ການສຶກສາອົບຮົມ ເປັນຕົ້ນແມ່ນ ລັດທິມາກ-ເລນິນ ຕ້ອງມີການຄົ້ນຄວ້າໃຫ້ເລິກເຊິ່ງເຖິງຖອງ ກຳແໜ້ນທຸກບັນຫາແນວທາງນະໂຍບາຍຂອງລັດ ໂດຍມີການໝູນໃຊ້ໃຫ້ສອດຄ່ອງກັບສະພາບ ແລະ ຈຸດພິເສດ.

4. ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ເອົາໃຈໃສ່ ໃນການກວດກາຄືນ ໃນການຂຶ້ນແຜນການກຳນົດພະນັກງານນຳພາ-ຄຸ້ມຄອງໃຫ້ລະອຽດກວ່າເກົ່າ ກ່ຽວກັບການຈັດວາງ, ສັບຊ້ອນບັນຈຸຕຳແໜ່ງງານ ຂອງພະນັກງານ, ສະມາຊິກພັກ ໂດຍຈຳເປັນຕ້ອງໄດ້ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ; ເອົາໃຈໃສ່ຢ່າງຕັ້ງໜ້າ ແລະ ຈຳເປັນຢ່າງພາວະວິໄສການກໍ່ສ້າງຖັນແຖວພະນັກງານ, ສະມາຊິກພັກ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້-ຄວາມສາມາດທີ່ແນ່ນອນ, ກຳແໜ້ນສະພາບ ແລະ ຈູດພິເສດລວມຂອງພັກໃນໄລຍະໃໝ່, ຕີຖອຍທັດສະນະພັກພວກ, ຈຸ້ມເຈື້ອເຊື້ອສາຍ, ຄົນເຈົ້າຄົນຂ້ອຍ ການກໍ່ສ້າງ ແລະ ຄຸ້ມຄອງພະນັກງານ, ສະມາຊິກພັກຕ້ອງຮັບປະກັນ ລັກສະນະປະຊາທິປະໄຕ, ສົມເຫັດສົມຜົນ, ແບບວິທະຍາສາດ ເດັດດ່ຽວແກ້ໄຂທັດສະນະແນວຄິດທ້ອງຖິ່ນ, ອັດຕະວິໄສ, ຄົງເດີມ, ປະຕິບັດລະບອບປະຊາທິປະໄຕ ໃນການຕີລາຄາ, ເລືອກເຟັ້ນການນຳໃຊ້ພະນັກງານ ພ້ອມກັນນັ້ນຕ້ອງຍົກເອົາຜົນສຳເລັດຂອງໜ້າທີ່ວຽກງານຕົວຈິງ ແລະ ຄວາມໄວ້ວາງໃຈ, ຄວາມເປັນແບບຢ່າງນຳໜ້າຂອງມະຫາຊົນ, ປະຕິບັດຢ່າງເຂັ້ມງວດໃນການນຳພາໂດຍກົງວຽກງານຄຸ້ມຄອງ ແລະ ປ້ອງກັນພັກ-ພະນັກງານ ໃຫ້ມີຄວາມປ່ອດໃສຕາມລະບຽບການຂອງພັກ ແລະ ລັດ.

ສັງລວມແລ້ວ ການຍົກສູງຄຸນທາດການເມືອງໃຫ້ພະນັກງານ, ສະມາຊິກພັກ ຢູ່ແຂວງໄຊສົມບູນແມ່ນວຽກໜຶ່ງທີ່ສຳຄັນ, ຈຳເປັນຢ່າງພາວະວິໄສ ທີ່ຄະນະພັກ, ອົງການປົກຄອງແຂວງ ແລະ ພາກສ່ວນຕ້ອງໄດ້ເອົາໃຈໃສ່ ເປັນບູລິມະສິດ ແລະ ເຮັດຢ່າງຕໍ່ເນື່ອງ ໂດຍຕ້ອງໄດ້ປະຕິບັດຕາມຫຼັກການ, ລະບຽບການ, ວິທີການຮອບດ້ານ, ເດັດຂາດ ແລະ ເປັນວຽກງານທີ່ປະປ່ອຍບໍ່ໄດ້ ໃນວຽກງານບຳລຸງ-ກໍ່ສ້າງພັກ, ພະນັກງານ ນັ້ນກໍ່ເພື່ອແນໃສ່ເຮັດໃຫ້ປະຊາຊົນແຂວງໄຊສົມບູນ ມີການພັດທະນາ, ມີຄວາມເປັນລະບຽບຮຽບຮ້ອຍ, ສັງຄົມມີຄວາມຍຸຕິທຳ ແລະ ສີວິໄລ...ຯ

ເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານສື່ມວນຊົນ ຢູ່ແຂວງຊຽງຂວາງ

ໂດຍ: ບຸນມີ ທິບມີໄຊ

ປະຈຸບັນ ພັກ ແລະ ລັດເຮົາ ໃຫ້ຄວາມສຳຄັນຕໍ່ການພັດທະນາວຽກງານສື່ມວນຊົນ, ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນລາວ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຂຶ້ນເປັນກ້າວໆ ເຊິ່ງໄດ້ເຮັດໃຫ້ວຽກງານສື່ມວນຊົນຕິດພັນສອດຫ້ອຍໄປໃນທຸກຂົງເຂດວຽກງານ ຂອງພັກ-ລັດ ແລະ ສັງຄົມ ເປັນຕົ້ນສື່ມວນຊົນແຂວງຊຽງຂວາງ ໄດ້ເຮັດໜ້າທີ່ໃນການນຳເອົາແນວທາງຂອງພັກ, ນະໂຍບາຍລະບຽບກົດໝາຍຂອງລັດ, ນຳເອົາຂໍ້ມູນ-ຂ່າວສານ ແລະ ເຫດການຕ່າງໆໃນສັງຄົມ ເພື່ອໂຄສະນາເຜີຍແຜ່ ແລະ ນຳສະເໜີໃຫ້ມະຫາຊົນ, ປະຊາຊົນຫຼືສັງຄົມຮັບຮູ້, ເຂົ້າໃຈແລະພ້ອມກັນນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ. ໂດຍເຫັນໄດ້ຄວາມຈຳເປັນ ແລະ ຄວາມສຳຄັນຂອງວຽກງານສື່ມວນຊົນ.

ການເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານສື່ມວນຊົນ ມີບົດບາດໃນການສະໜອງຂໍ້ມູນ-ຂ່າວສານ ທີ່ຖືກຕ້ອງ-ຊັດເຈນ-ພາວະວິໄສຕາມແນວທາງຂອງພັກ ນະໂຍບາຍລະບຽບກົດໝາຍຂອງລັດ; ວຽກງານສື່ມວນຊົນ ເປັນວຽກງານແນວຄິດຢູ່ແຖວໜ້າໃນທຸກຂົງເຂດວຽກງານ, ເພາະສື່ມວນຊົນເປັນຕົວແທນຂອງພັກ, ເປັນກະບອກສຽງທີ່ແຫຼມຄົມ ເຮັດໜ້າທີ່ເພື່ອຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນບັນດາເຜົ່າ, ເປັນຂົວຕໍ່ລະຫວ່າງ ພັກກັບປະຊາຊົນ, ເປັນຜູ້ສ້າງຄວາມຮັບຮູ້ ແລະ ສະໜອງຂໍ້ມູນ, ຂ່າວສານ ແລະ ເຫດການທີ່ເກີດຂຶ້ນ ມາເຜີຍແຜ່ໃຫ້ທົ່ວສັງຄົມ ໄດ້ຮັບຮູ້, ເຂົ້າໃຈຕໍ່ສະພາບການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ເພື່ອເຮັດໃຫ້ແນວທາງຂອງພັກ ນະໂຍບາຍລະບຽບກົດໝາຍຂອງລັດ ທີ່ວາງອອກໃນແຕ່ລະໄລຍະ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ. ປະທານ ໄກສອນ ພົມວິຫານ ໄດ້ເນັ້ນວ່າ: ຜະລິດຕະພັນສື່ມວນຊົນ ແມ່ນເຄື່ອງມືຂອງວຽກງານແນວຄິດ, ເມື່ອວຽກງານແນວຄິດໄດ້ຈັດວາງຢູ່ແຖວໜ້າ ແລະ ເປັນວຽກທີ່ສຳຄັນອັນດັບໜຶ່ງທີ່ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານການຈັດຕັ້ງ ຂອງການປະຕິວັດແລ້ວ ສື່ມວນຊົນກໍ່ຍ່ອມມີທີ່ຕັ້ງ, ບົດບາດຢູ່ແຖວໜ້າ ແລະ ສຳຄັນທີ່ສຸດ ຂອງການປະຕິວັດ ໃນແຕ່ລະໄລຍະ[1]

ວຽກງານສື່ມວນຊົນ ມີຄວາມສຳຄັນຕໍ່ການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ ແລະ ນະໂຍບາຍຂອງລັດ ໃນການໂຄສະນາເຜີຍແຜ່, ຍົກສູງນ້ຳໃຈຮັກຊາດອັນດູດດື່ມ ໃຫ້ແກ່ພົນລະເມືອງລາວທຸກຄົນ, ຍົກສູງຈິດໃຈເອກະລາດແຫ່ງຊາດ ຕິດພັນກັບຄວາມສາມັກຄີປອງດອງ ໃນວົງຄະນະຍາດແຫ່ງຊາດລາວ, ຍົກສູງຫຼັກໝັ້ນມິດ-ສັດຕູຢ່າງຈະແຈ້ງ, ມີສະຕິລະວັງຕົວສູງ, ເດັດດ່ຽວເປັນເຈົ້າການທັບມ້າງເລ່ລ່ຽມ

ແລະກົນອຸບາຍ ຫັນປ່ຽນໂດຍສັນຕິ ຂອງສັດຕູ ແລະ ອິດທິກຳລັງປໍລະປັກ ທີ່ແນໃສ່ມ້າງເພທຳລາຍພັກ ແລະ ລະບອບປະຊາທິປະໄຕປະຊາຊົນ, ປຸກລະດົມຂົນຂວາຍ ຂະບວນການແຂ່ງຂັນຮັກຊາດ, ເຮັດສຳເລັດໜ້າທີ່ ການເມືອງລື່ນຄາດໝາຍ ທີ່ຄະນະພັກ-ຄະນະນຳແຕ່ ລະຂັ້ນວາງອອກ.

ພາຍໃຕ້ການຊີ້ນຳຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄະນະພັກ, ອົງການ ປົກຄອງຂອງແຂວງຊຽງຂວາງ ກໍ່ຄືພະແນກຖະແຫຼງ ຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຊຽງຂວາງ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງຂອງຕົນດ້ວຍ ຄວາມຮັບຜິດຊອບສູງ ໄດ້ຮັບບົດບາດສຳຄັນ ໃນວຽກ ງານການເມືອງ-ແນວຄິດ ປະກອບສ່ວນໂຄສະນາເຜີຍ ແຜ່ແນວທາງຂອງພັກ ນະໂຍບາຍລະບຽບກົດໝາຍ ຂອງລັດ, ສ່ອງແສງເຖິງຄວາມມຸ່ງມາດປາດຖະໜາ ແລະ ຂະບວນການເຄື່ອນໄຫວຂອງປະຊາຊົນ ເພື່ອປຸກລະ ດົມໃຫ້ທຸກຊັ້ນຄົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຕ່ລະໄລຍະ, ຍົກ ລະດັບຄວາມຮູ້, ຄວາມສາມາດດ້ານຕ່າງໆ ໃຫ້ແກ່ປະ ຊາຊົນ ສ່ອງແສງວຽກດີຄົນເດັ່ນ, ປະ ກອບສ່ວນຕອບ ຕ້ານການໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງຄົນ ບໍ່ດີຕໍ່ລະບອບໃໝ່ ແລະ ຕໍ່ແນວທາງ, ນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ໄດ້ເປັນຢ່າງດີ ເຊິ່ງໄດ້ເຮັດໃຫ້ ແຂວງຊຽງຂວາງມີສະຖຽນລະພາບທາງດ້ານການ ເມືອງ, ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບ ຮ້ອຍທາງສັງຄົມ, ເສດຖະກິດມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ ເຊິ່ງໃນນີ້ການເຄື່ອນໄຫວວຽກງານສື່ມວນ ຊົນ ແຂວງຊຽງຂວາງ ໃນໄລຍະຜ່ານມາແມ່ນໄດ້ມີຜົນ ສຳເລັດໃນຕົວຈິງດັ່ງນີ້:

ວຽກງານຖະແຫຼງຂ່າວ-ສື່ມວນຊົນ: ໃນໄລຍະ ໜຶ່ງປີຜ່ານມາ ໄດ້ເອົາໃຈໃສ່ຄຸ້ມຄອງພື້ນຖານໂຄງລ່າງ ຂອງວຽກງານສື່ມວນຊົນ ຢ່າງເປັນປົກກະຕິ ເປັນຕົ້ນ: ການບຳລຸງຮັກສາອຸປະກອນຮັບໃຊ້ສະຖານີວິທະຍຸ-ໂທລະພາບ, ຕິດຕັ້ງໂທລະໂຄ່ງໄດ້ຈຳນວນ 12 ຊຸດ, ປະຈຸບັນທົ່ວແຂວງມີໂທລະໂຄ່ງທັງໝົດ 263 ບ້ານ ກວມ 55,13% ຂອງຈຳນວນບ້ານທັງໝົດໃນທົ່ວ ແຂວງ, ອອກໃບອະນຸຍາດຖ່າຍທຳໄດ້ 3 ຫົວໜ່ວຍ, ຕໍ່ໃບອານຸຍາດດຳເນີນທຸລະກິດຜະລິດຕະພັນສື່ມວນ ຊົນໄດ້ 2 ຫົວໜ່ວຍ, ໄດ້ຮັບອຸປະກອນສັນຍານດາວ ທຽມຈາກບໍລິສັດດາວທຽມລາວເອເຊຍ-ປາຊີຟິກ ຈຳກັດ ຈຳນວນ 1 ຊຸດ ແລະ ສຳເລັດການຈັດຝຶກອົບຮົມ ນັກຂ່າວໃຫ້ບັນດາເມືອງ ແລະ ພະແນກການອ້ອມ ຂ້າງແຂວງໄດ້ 1 ຄັ້ງ ມີຜູ້ເຂົ້າຝຶກອົບຮົມທັງໝົດ 31 ທ່ານ, ຍິງ 15 ທ່ານ, ລົງຕິດຕາມນັກສື່ມວນຊົນທີ່ມາ ເຄື່ອນໄຫວຢູ່ພາຍໃນແຂວງໄດ້ 4 ຄັ້ງ, ໃນນັ້ນນັກສື່ ມວນຊົນພາຍໃນ 1 ຄັ້ງ, ຕ່າງປະເທດ 3 ຄັ້ງ ແລະ ໄດ້ເອົາ ໃຈໃສ່ຄຸ້ມຄອງການເຄື່ອນໄຫວຂອງບໍລິສັດໂທລະ ພາບດີຈີຕອນຢູ່ພາຍໃນແຂວງໃຫ້ດຳເນີນຖືກຕ້ອງ ຕາມລະບຽບການ.

ວຽກງານວິທະຍຸ-ໂທລະພາບ: ລົງເຄື່ອນໄຫວ ເກັບກຳຂ່າວໄດ້ 2778 ຂ່າວ, ລື່ນຄາດໝາຍ 178 ຂ່າວ, ອ່ານຂ່າວອອກອາກາດທາງວິທະຍຸ-ໂທລະພາບໄດ້ 2778 ຂ່າວ, ສະເໜີບົດໄດ້ 412 ບົດ, ຈັດລາຍການຕ່າງໆ ທາງວິທະຍຸ-ໂທລະພາບໄດ້ 3765 ລາຍການ, ສົ່ງຂ່າວ ໃຫ້ວິທະຍຸ-ໂທລະພາບແຫ່ງຊາດໄດ້ 1432 ຂ່າວ, ລື່ນ ຄາດໝາຍ 882 ຂ່າວ, ໃນນີ້ພາສາມົ້ງ 154 ຂ່າວ, ພາສາ ກຶມມຸ 166 ຂ່າວ, ຈັດລາຍການພັດທະນາຊຽງຂວາງ ແດນງາມ ອອກອາກາດທາງໂທລະພາບແຫ່ງຊາດລາວ ໄດ້ 50 ຄັ້ງ, ຈັດລາຍການທ່ຽວແດນເມືອງຊຽງອອກ ອາກາດໄດ້ 4 ຄັ້ງ, ຮັບຂ່າວຈາກບັນດາເມືອງໄດ້ 473 ຂ່າວ, ພະແນກການໄດ້ 536 ຂ່າວ, ລົງຂ່າວທາງເຟສ ບຸກໄດ້ 1.039 ຂ່າວ ມີຜູ້ຕິດຕາມເພຈວິທະຍຸໂທລະພາບ ແຂວງຊຽງຂວາງ: 163.976 ຄົນ, ຜູ້ກົດໄລ້: 61.991 ເທື່ອຄົນ, ມີຜູ້ເຂົ້າເບິ່ງຂ່າວ: 6.250.201 ເທື່ອຄົນ;

ໃນນີ້ໄດ້ສຸມໃສ່ເກັບກຳຂ່າວນຳຄະນະສະເພາະກິດ ກ່ຽວກັບການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ19 ຢູ່ພາຍໃນແຂວງ ແລະ ການຖະແຫຼງຂ່າວປະຈຳວັນຂອງຄະນະສະເພາະກິດມາອອກອາກາດທາງວິທະຍຸ ແລະ ສື່ອອນລາຍຂອງແຂວງໃຫ້ທັນເວລາ, ສຸມໃສ່ລົງເຄື່ອນໄຫວເກັບກຳຂ່າວ ການສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2022, ການກະກຽມຄວາມພ້ອມເປັນເຈົ້າພາບທີ່ດີງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ທີ່ແຂວງຊຽງຂວາງໄດ້ຮັບກຽດເປັນເຈົ້າພາບ ຕິດພັນກັບພິທີສະເຫຼີມສະຫຼອງໄຫຫີນເປັນມໍລະດົກໂລກ ແລະ ພິທີສົມໂພດພະເຈົ້າອົງຫຼວງປະທານພອນ ທີ່ວັດໄຫຫີນມີໄຊຍະລາມ, ເຄື່ອນໄຫວສຳພາດແຕ່ລະພາກສ່ວນໃນການຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດ ມາອອກອາກາດຜ່ານສື່ ໃຫ້ສັງຄົມຮັບຮູ້ສຳເລັດຕາມລະດັບຄາດໝາຍ.

ວຽກງານໜັງສືພິມຊຽງຂວາງມີໄຊ: ໄດ້ຈັດພິມໜັງສືພິມຕາມສັນຍາຈຳນວນ 19.200 ສະບັບ ສາມາດຈັດຈຳໜ່າຍ ແລະ ແຈກຢາຍຢູ່ພາຍໃນແຂວງ ແລະ ບັນດາເມືອງຕ່າງໆ ຂອງແຂວງໄດ້ 11.203 ສະບັບ, ຄ້າງບໍ່ໄດ້ຈຳໜ່າຍ 7.997 ສະບັບ, ຂຽນຂ່າວອອກໜ້າໜັງສືພິມໄດ້ 1.152 ຂ່າວ, ຂຽນບົດໄດ້ 75 ບົດ, ສາລະໜ້າຮູ້ໄດ້ 144 ບົດ, ສົ່ງຂ່າວໃຫ້ໜັງສືພິມປະເທດລາວ ແລະ ເສດຖະກິດ-ສັງຄົມໄດ້ 189 ຂ່າວ, ມີຜູ້ຕິດຕາມເພຈຊຽງຂວາງມີໄຊ 1.108.650 ເທື່ອຄົນ.

ເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານສື່ມວນຊົນ ຢູ່ແຂວງຊຽງຂວາງ ໃນໄລຍະຜ່ານມາ ໂດຍລວມແລ້ວ ເຖິງຈະມີຜົນສຳເລັດໃນຫຼາຍດ້ານກໍ່ຕາມ, ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ຄວາມຮຽກຮ້ອງຕ້ອງການຂອງຜູ້ຊົມ-ຜູ້ຟັງ, ຜູ້ອ່ານ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມກ້າວໜ້າທັນສະໄໝຂອງເຕັກໂນໂລຢີຂໍ້ມູນຂ່າວສານແລ້ວ, ວຽກງານສື່ມວນຊົນ ຢູ່ແຂວງຊຽງຂວາງ ຍັງມີຫຼາຍດ້ານຈຳກັດ ແລະ ຄົງຄ້າງທີ່ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ-ລັດ ແລະ ສັງຄົມເທົ່າທີ່ຄວນ ເຊິ່ງຈຳເປັນຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ, ປ່ຽນແປງດ້ານຈິນຕະນາການ ແລະ ກົນໄກດັ່ງຕໍ່ໄປນີ້:

1). ຄະນະພັກ, ອົງການປົກຄອງຂັ້ນຕ່າງໆຂອງແຂວງ ໂດຍສະເພາະ ແມ່ນຂະແໜງການທີ່ກ່ຽວຂ້ອງຍັງບໍ່ທັນເອົາໃຈໃສ່ໃນການຄົ້ນຄວ້າເຊື່ອມຊຶມບັນດາແນວທາງຂອງພັກ, ນະໂຍບາຍຂອງລັດ ຕໍ່ວຽກງານສື່ມວນຊົນ ໃນໄລຍະໃໝ່;

2). ຄວາມຮູ້, ຄວາມສາມາດຂອງບຸກຄະລະກອນທີ່ເຮັດວຽກງານສື່ມວນຊົນ ກໍ່ຄືຂະແໜງການທີ່ກ່ຽວຂ້ອງບໍ່ທັນສູງ (ຈຳກັດທາງດ້ານປະລິມານ ແລະ ຄຸນນະພາບ) ການກໍ່ສ້າງພະນັກງານວິຊາການ ສື່ມວນຊົນຍັງມີຈຳນວນຈຳກັດ, ການກວດແກ້ເນື້ອໃນ, ການອອກຂ່າວ, ບາງຄັ້ງຍັງຊັກຊ້າບໍ່ທັນກັບສະພາບການທີ່ເກີດຂຶ້ນ.

3). ເນື້ອໃນຂອງຂ່າວວິທະຍຸ-ໂທລະພາບ, ໜັງສືພິມ ຍັງບໍ່ທັນແຫຼມຄົມ ແລະ ຊັດເຈນ; ບໍ່ສ່ອງແສງຊີວິດຕົວຈິງໄດ້ຢ່າງກວ້າງຂວາງ ແລະ ທັນກັບເຫດການ; ການຊອກປັດໄຈໃໝ່ ໃນການໂຄສະນາວຽກດີຄົນເດັ່ນບັນດາບົດຮຽນທີ່ດີເກີດຂຶ້ນໃນຂະບວນວຽກງານຕົວຈິງຂອງມະຫາຊົນຍັງເຮັດໄດ້ໜ້ອຍ ແລະ ບໍ່ຕໍ່ເນື່ອງ.

4). ການສະໜອງງົບປະມານ, ພາຫະນະ, ອຸປະກອນ ແລະ ເຄື່ອງມືເຂົ້າໃນການເຄື່ອນໄຫວວຽກງານນີ້ບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກງານຕົວຈິງ.

ເພື່ອຮັບປະກັນເຮັດໃຫ້ວຽກງານຖະແຫຼງຂ່າວ-ສື່ມວນຊົນ ໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ ທັງລວງເລິກ ແລະ ລວງກວ້າງ, ສ້າງຄວາມເຂັ້ມແຂງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ສ້າງບຸກຄະລາກອນ ທີ່

ໄດ້ມາດຕະຖານສື່ມວນຊົນລາວ ສົມຄູ່ກັບຍຸກສະໄໝ ວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງຊຽງຂວາງ ຈະໄດ້ສືບຕໍ່ປັບປຸງແກ້ໄຂບັນຫາຄົງຄ້າງ; ສະນັ້ນໃນນາມຜູ້ຂຽນຂໍມີທັດສະນະແລກປ່ຽນ ເພື່ອສືບຕໍ່ແກ້ໄຂບາງເນື້ອໃນດັ່ງນີ້:

ໜຶ່ງ. ຄະນະພັກຂັ້ນຕ່າງໆຄວນເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈໍາ, ປະຕິບັດລະບອບດໍາເນີນຊີວິດການເມືອງສໍາຫຼວດກວດກາຢ່າງເປັນປົກກະຕິ ພ້ອມທັງຕີລາຄາພະນັກງານໃຫ້ຖືກຕ້ອງ ເພື່ອສ້າງໃຫ້ເຂົາເຈົ້າມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດ ແລະ ມີຄວາມຕື່ນຕົວສູງ, ມີຄວາມຮັບຜິດຊອບໃນວິຊາສະເພາະຂອງຕົນ ດໍາເນີນການກວດກາ ແກ້ໄຂບັນຫາໃຫ້ເດັ່ງຄັດຖືກຕ້ອງກັບລະບຽບກົດໝາຍຕາມແຕ່ລະຂັ້ນຕອນ ເວົ້າລວມ, ເວົ້າສະເພາະພະນັກງານຂະແໜງສື່ມວນຊົນ; ພ້ອມກັນນັ້ນ ຄະນະພັກ, ຄະນະນໍາກໍ່ຕ້ອງເຊີດຊູຄວາມເປັນເຈົ້າການໄກ້ຊິດຕິດແທດກັບວິຊາການທີເຮັດວຽກງານຂ່າວ, ຂຸດຄົ້ນທ່າແຮງບົ່ມຊ້ອນ, ນໍາເອົາຄວາມຄິດຄວາມເຫັນ, ຄວາມຫຍຸ້ງຍາກມາພິຈາລະນາ, ຄວນສະແດງຄວາມເປັນຫ່ວງເປັນໄຍ, ແກ້ຄວາມສົນໃຈຂອງມະຫາຊົນ ຫຼື ສະໜອງຂໍ້ມູນຕ່າງໆ ທັງນີ້ກໍ່ເພື່ອຮັບປະກັນຄວາມຖືກຕ້ອງ, ຊັດເຈນ ໃນການຖະແຫຼງຂ່າວມີຊີວິດຊີວາ.

ສອງ. ເພີ່ມທະວີການກໍ່ສ້າງ-ບໍາລຸງພະນັກງານສື່ມວນຊົນ ໃຫ້ມີຄວາມສາມາດ ເພື່ອເປັນກໍາລັງຫຼັກແຫຼ່ງ, ເປັນກະບອກສຽງຂອງພັກ ທັງເຮັດໜ້າທີ່ເຜີຍແຜ່, ທັງເຮັດໜ້າທີ່ຕໍ່ສູ້, ທັງເຮັດໜ້າທີ່ສຶກສາອົບຮົມປະຊາຊົນບັນດາເຜົ່າ ແນໃສ່ປົກປ້ອງແນວທາງ, ຊີ້ແຈງຄວາມຖືກຕ້ອງ ສ້າງໃຫ້ພັກກໍາອໍານາດມີຄວາມໝັ້ນຄົງ, ຍືນຍົງ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນໃນການບໍາລຸງ-ກໍ່ສ້າງພະນັກງານໃນຕໍ່ໜ້າ. ຄຽງຄູ່ກັນນັ້ນຕ້ອງເລັ່ງໃສ່ສ້າງພະນັກງານ-ລັດຖະກອນໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທໍາໃນອາຊີບ, ມີຈິດໃຈຮັບໃຊ້ປະຊາຊົນຢ່າງບໍລິສຸດໃຈ, ສ້າງຜູ້ສືບທອດປ່ຽນແທນໃນຕໍາແໜ່ງງານຕ່າງໆຮັບປະກັນພະນັກງານເພດ, ຊົນເຜົ່າ, ຕາມໂຄງປະກອບ 3 ຮຸ່ນ ແລະ ໄປຕາມທິດທັນເປັນໜຸ່ມໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາການ ຮັບປະກັນຄຸນນະພາບ;

ສາມ. ເພື່ອຮັບປະກັນຕໍ່ໜ້າທີ່ການເມືອງຂອງພັກໃນການພັດທະນາ ແລະ ຄຸ້ມຄອງສື່ມວນຊົນໃຫ້ເປັນລະບົບທັນສະໄໝ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ, ມີຄຸນນະພາບ, ມີຄວາມຫຼາກຫຼາຍ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ ວຽກງານສື່ມວນຊົນແຂວງຊຽງຂວາງ ຕ້ອງໄດ້ເອົາໃຈໃສ່ເອົາພັດທະນາຄວາມຮູ້, ສະຕິປັນຍາໃຫ້ແກ່ນັກຂ່າວ, ສ້າງພື້ນຖານວັດຖຸເຕັກນິກໃຫ້ມີຄວາມທັນສະໄໝ ເພື່ອໃຫ້ວຽກງານສື່ມວນຊົນ ສືບຕໍ່ເຮັດການຖະແຫຼງຂ່າວມີເນື້ອໃນແຫຼມຄົມ, ຫຼາຍຮູບຫຼາຍສີ, ວ່ອງໄວທັນການ ແລະ ນໍາພາທາງສຽງສັງຄົມໄປຖືກທິດ ການຂຽນຂ່າວຕ້ອງຖືກຕ້ອງກັບຄວາມເປັນຈິງຂອງເຫດການ, ຮັບປະກັນລັກສະນະຕົວຈິງ, ລັກສະນະສຶກສາອົບຮົມ, ລັກສະນະແນະນໍາ ແລະ ລັກສະນະຕໍ່ສູ້ ທີ່ສ່ອງແສງເຖິງທັດສະນະຂອງພັກແຜນນະໂຍບາຍຂອງລັດ ແລະ ສ່ອງແສງໃຫ້ເຫັນຜົນງານການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງບັນດາຮາກຖານການຜະລິດ ເພື່ອສ້າງສະຕິໃນການປົກປັກຮັກສາປະເທດຊາດ.

ສີ່. ໃນເງື່ອນໄຂທີ່ພວກເຮົາຫັນໄປສູ່ກົນໄກໃໝ່ນີ້ ຮຽກຮ້ອງໃຫ້ພວກເຮົາມີນະໂຍບາຍ, ມີວິທີການທີ່ສອດຄ່ອງ ແລະ ຕ້ອງໄດ້ສຸມທຸກຄວາມພະຍາຍາມ, ບຸກບືນເພື່ອຍາດແຍ່ງເອົາເງື່ອນໄຂ ທີ່ເອື້ອອໍານວຍ ແນໃສ່ສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການເຄື່ອນໄຫວ

ວຽກງານສື່ມວນຊົນ; ສະນັ້ນ, ຕ້ອງປະຕິບັດນະໂຍບາຍທີ່ຖືກຕ້ອງແທດເໝາະກັບໜ້າທີ່ວຽກງານແຕ່ລະໄລຍະ ເພື່ອຊຸກຍູ້ສົ່ງເສີມສະຕິປັນຍາ ຂອງພະນັກງານວິຊາການ ຫຼື ເພື່ອນຮ່ວມງານຈາກພາຍນອກ ທີ່ໄດ້ທຸ່ມເທເຫື່ອແຮງ ແລະ ມັນສະໝອງ, ປະກອບສ່ວນເຮັດໃຫ້ຜະລິດຕະພັນວຽກງານຂ່າວວິທະຍຸ-ໂທລະພາບ ອຸດົມສົມບູນດ້ານເນື້ອຫາສາລະຕ່າງໆ, ຕອບສະໜອງນະໂຍບາຍ, ງົບປະມານ, ພາຫະນະ, ອຸປະກອນທີ່ນຳມາໃຊ້ ຕ້ອງມີຄວາມທັນສະໄໝ ຖືກກັບລະບົບຂອງແຕ່ງຊາດ ແລະ ສາກົນ ເຊັ່ນ: ກ້ອງຖ່າຍພາບ, ເຄື່ອງອັດສຽງ, ເຄື່ອງຕັດຕໍ່ພາບ-ຕັດຕໍ່ສຽງ ຕ້ອງແມ່ນລະບົບດີຈີຕອນ.

ສັງລວມແລ້ວ: ວຽກງານສື່ມວນຊົນ ແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນສຳລັບສັງຄົມ ເຮັດໜ້າທີ່ເຜີຍແຜ່ ແລະ ປົກປ້ອງແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ. ວຽກງານສື່ມວນຊົນແມ່ນເຄື່ອນໄຫວໄປຕາມແນວທາງຂອງພັກ, ໃຫ້ສອດຄ່ອງກັບສະພາວະຄວາມເປັນຈິງ ເພື່ອເປັນກຳລັງແຮງສັງລວມຂອງການປະຕິວັດໃນໄລຍະປະຈຸບັນ ແລະ ອະນາຄົດ; ການເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານສື່ມວນຊົນຢູ່ແຂວງຊຽງຂວາງ ແມ່ນແນໃສ່ເຮັດໃຫ້ວຽກງານຂ່າວທາງດ້ານວິທະຍຸ-ໂທລະພາບ, ໜັງສືພິມ ໄດ້ດຳລົງບົດບາດ ແລະ ເຄື່ອນໄຫວເຮັດໜ້າທີ່ຂອງຕົນຢ່າງມີປະສິດທິພາບ-ປະສິດທິຜົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໂຄສະນາຖະແຫຼງຂ່າວ ເປັນກະບອກສຽງ ແລະ ເປັນເຄື່ອງມືອັນແຫຼມຄົມຂອງພັກ-ລັດ ໃນສະເພາະໜ້າ ແລະ ຍາວນານ...ຯ

ຍົກສູງຄຸນນະພາບການກໍ່ສ້າງ ແລະ ...

ຕໍ່ຈາກໜ້າ 32

ງານ, ສະມາຊິກພັກທີ່ດີ, ມີຄຸນນະພາບ ແລະ ມີສະຕິສູງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການປະຕິບັດຕົວຈິງ.

ສັງລວມແລ້ວ, ຢາກຍົກສູງຄຸນນະພາບການກໍ່ສ້າງ ແລະ ບຳລຸງພະນັກງານ, ສະມາຊິກພັກ ໃຫ້ໄດ້ທາງດ້ານຄຸນນະພາບ ແລະ ປະລິມານ ເພື່ອຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງຂອງພັກນັ້ນ, ຄະນະພັກແຕ່ລະຂັ້ນ, ອົງການເສນາທິການທີ່ເຮັດວຽກງານພະນັກງານ ຕ້ອງກຳແໜ້ນທັດສະນະຊີ້ນຳຂອງພັກ, ກຳແໜ້ນທິດທາງ, ແນວທາງນະໂຍບາຍຂອງພັກທີ່ວາງໄວ້ ໂດຍສະເພາະແນວທາງກ່ຽວກັບວຽກງານພະນັກງານ ເພື່ອນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍໃຫ້ຖືກຈຸດຖືກເປົ້າໝາຍ ແລະ ເງື່ອນໄຂສະພາບແວດລ້ອມຂອງແຂວງ, ພ້ອມກັນນັ້ນ, ກໍຕ້ອງເອົາໃຈໃສ່ກຳແໜ້ນຕິດຕາມ, ກວດກາ ແລະ ກຳແໜ້ນຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແນວຄິດ-ທັດສະນະ, ຜົນສຳເລັດ, ດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ຂອງພະນັກງານ ເພື່ອເສີມຂະຫຍາຍດ້ານດີ ແລະ ປັບປຸງແກ້ໄຂດ້ານຫຍໍ້ທໍ້ ເພື່ອເປັນພື້ນຖານໃນການຄົ້ນຄວ້າ, ເລືອກເຟັ້ນ ເພື່ອເຮັດໃຫ້ການກໍ່ສ້າງ-ບຳລຸງພະນັກງານ, ສະມາຊິກພັກຮັບປະກັນໄດ້ດ້ານຄຸນນະພາບ...ຯ

ບາງບົດຮຽນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ເມືອງສິງ ແຂວງຫຼວງນ້ຳທາ

ໂດຍ: ບົວໄລ ສຸທຳມາ

ພັກ-ລັດເຮົາ ຍາມໃດກໍ່ໄດ້ຖືສຳຄັນ ແລະ ເອົາໃຈໃສ່ແກ້ໄຂບັນຫາຢາເສບຕິດ, ຖືບັນຫາຢາເສບຕິດເປັນມະຫັນຕະໄພຮ້າຍແຮງ ທີ່ປຽບເໝືອນ "ມະເຮັງຮ້າຍທາງສັງຄົມ" ເຊິ່ງແມ່ນບໍ່ເກີດຂອງໄພສັງຄົມຕ່າງໆ ເປັນຕົ້ນເຫດຂອງຄວາມຫາຍະນະທາງສັງຄົມ ພວກເຮົາຕ້ອງຮັບຮູ້ວ່າ ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ແມ່ນການຕໍ່ສູ້ທີ່ດຸເດືອດຂ້ຽວຂາດ ແມ່ນການສູນລະຫວ່າງ ອຳນາດລັດກັບຜູ້ທີ່ມີສວນກ່ຽວຂ້ອງກັບເສບຕິດ ຫຼື ເວົ້າໄດ້ວ່າ ເປັນອົງກອນອາດຊະຍາກຳ ເຊິ່ງອາດຈະນຳໄປສູ່ການສູນເສຍ ການເສຍສະຫຼະເປັນການຕໍ່ສູ້ກັບກຸ່ມຜົນປະໂຫຍດ ທີ່ພົວພັນເຖິງຕ່ອງໂສ້ ເຄືອຂ່າຍ-ທຸລະກິດ ການຄ້າຢາເສບຕິດດ້ວຍເຫດນັ້ນ ການແກ້ໄຂບັນຫາເສບຕິດ ແມ່ນສະໜາມຮົບບັ້ນໜຶ່ງທີ່ສຳຄັນ ເຊິ່ງເນື້ອແທ້ກໍ່ແມ່ນການ "ປະກາດສົງຄາມຕໍ່ສູ້ກັບຢາເສບຕິດ" ໂດຍໄດ້ກຳນົດບັນຫາດັ່ງກ່າວ ເປັນວາລະແຫ່ງຊາດໃນກອງປະຊຸມຄົບຄະນະສະໄໝວິສາມັນຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ພ້ອມກັນນັ້ນ, ກົມການເມືອງສູນກາງພັກ ກໍ່ໄດ້ອອກຄຳສັ່ງ ເລກທີ 02 ກມສພ ວ່າດ້ວຍເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກແຕ່ລະຂັ້ນຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ເວົ້າລວມ, ເວົ້າສະເພາະອົງຄະນະພັກເມືອງສິງ ແຂວງຫຼວງນ້ຳທາ ກໍ່ເປັນເມືອງໜຶ່ງທີ່ຖືເອົາບັນຫາດັ່ງກ່າວ ເປັນວຽກງານສຳຄັນ ແລະ ຮີບດ່ວນ.

ເມືອງສິງ ຕັ້ງຢູ່ທິດຕາເວັນຕົກສ່ຽງເໜືອຂອງແຂວງຫຼວງນ້ຳທາ ມີເນື້ອທີ່ທັງໝົດ 1.789 ກມ^2, ທິດເໜືອຕິດກັບ ສປ ຈີນ, ທິດໃຕ້ຕິດກັບເມືອງລອງ, ທິດຕາເວັນອອກຕິດກັບເມືອງຫຼວງນ້ຳທາ, ທິດຕາເວັນຕົກຕິດກັບປະເທດມຽນມາ; ດ້ານພູມສັນຖານ 85% ແມ່ນເຂດພູດອຍ, 15% ແມ່ນເຂດທົ່ງພຽງ ແລະ ພູພຽງ; ມີພົນລະເມືອງທັງໝົດ 44 ພັນກວ່າຄົນ, ຍິງ 22 ພັນກວ່າຄົນ, ປະກອບມີ 93 ບ້ານ, ມີ 8.490 ຫຼັງຄາເຮືອນ, ມີ 14 ຊົນເຜົ່າ, ເປັນເມືອງທີ່ມີທົ່ງພຽງ, ພູພຽງ ແລະ ມີອາກາດເໝາະສົມແກ່ການປູກຝັງ-ລ້ຽງສັດ, ມີຊັບພະຍາກອນທຳມະຊາດອັນອຸດົມສົມບູນ, ມີຮ່ອງຮອຍປະຫວັດສາດອັນເກົ່າແກ່ ແລະ ວັດທະນະທຳທີ່ເປັນເອກະລັກຂອງເມືອງ, ເປັນເມືອງທາງຜ່ານມີຊາຍແດນຕິດກັບປະເທດ ສປ ຈີນ, ມຽນມາ, ມີປະຕູດ່ານອອກໄປສູ່ຕ່າງປະເທດ 2 ດ່ານ ເຊິ່ງເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການຂົນສົ່ງ, ການລົງທຶນ, ການບໍລິການ ແລະ ການທ່ອງທ່ຽວ.

ສະພາບ ແລະ ຈຸດພິເສດຂອງເມືອງສິງ ແຂວງ

ຫຼວງນ້ຳທາ ເຊິ່ງເປັນເມືອງໜຶ່ງ ທີ່ເປັນຈຸດຫຼໍ່ແຫຼມທາງດ້ານຍຸດທະສາດທາງດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຊາຍແດນຕິດຈອດກັບເຂດທີ່ມີການຜະລິດຢາເສບຕິດຂະໜາດໃຫຍ່ຂອງພາກພື້ນ, ທັງເປັນເສັ້ນທາງຜ່ານໃນການນຳເຂົ້າ, ພັກເຊົາ, ລຳລຽງ ຂົນສົ່ງຢາເສບຕິດໄປຍັງແຂວງອື່ນໆ, ເປັນເຂດທີ່ໝົ້ນເກົ່າຂອງການປະຕິວັດ, ຈຶ່ງເຮັດໃຫ້ກາຍເປັນເປົ້າໝາຍຂອງກຸ່ມຄົນທີ່ບໍ່ດີຫວັງມ້າງເພທຳລາຍ, ກໍ່ຄວາມບໍ່ສະຫງົບ ຢູ່ພາຍໃນເມືອງສິງ ແຂວງຫຼວງນ້ຳທາ; ພາຍຫຼັງທີ່ຄຳສັ່ງດັ່ງກ່າວ ຄະນະພັກ, ອົງການປົກຄອງແຕ່ລະຂັ້ນພາຍໃນເມືອງສິງ ກໍ່ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ດ້ວຍຄວາມຮັບຜິດຊອບສູງ, ສຸມທຸກກຳລັງແຮງທີ່ວປວງຊົນ ເຂົ້າໃນການຕ້ານ ແລະ ສະກັດກັ້ນບັນຫາຢາເສບຕິດ, ແນໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງເມືອງໃຫ້ມີຄວາມສະຫງົບ, ໝັ້ນຄົງ ຮັບປະກັນໃຫ້ພື້ນຖານເສດຖະກິດມີການຂະຫຍາຍຕົວຖືກທິດ, ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າພາຍໃນເມືອງໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ, ເຊິ່ງສະແດງອອກດັ່ງນີ້:

ຄະນະພັກ, ອົງການປົກຄອງແຕ່ລະຂັ້ນພາຍໃນເມືອງ ໄດ້ເປັນເຈົ້າການໃນສຶກສາອົບຮົມການເມືອງ-ນຳພາແນວຄິດຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງ, ຮັບປະກັນເຮັດໃຫ້ວຽກງານດັ່ງກ່າວນີ້ສອດຫ້ອຍໄປທຸກຂົງເຂດວຽກງານ, ເຮັດວຽກງານນີ້ເປັນປົກກະຕິ, ທົ່ວເຖິງ ແລະ ລົງຮອດຮາກຖານ. ໂດຍສະເພາະກໍ່ແມ່ນການເລີ່ມຈາກການເຊື່ອມຊຶມບັນດາເນື້ອໃນຈິດໃຈຊີ້ນຳ ຂອງຄະນະຮັບຜິດຊອບລະດັບຊາດ, ຂັ້ນແຂວງກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໃຫ້ແກ່ພະນັກງານຫຼັກແຫຼ່ງພາຍໃນເມືອງໃຫ້ມີຄວາມຮັບຮູ້ເຂົ້າໃຈ, ເປັນເອກະພາບ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດ; ຈັດຕັ້ງຄະນະຮັບຜິດຊອບຂັ້ນເມືອງ, ໂຄສະນາເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍ ຄຳສັ່ງຂອງກົມການເມືອງສູນກາງພັກ, ມະຕິຂອງສະພາແຫ່ງຊາດ ແລະ ເນື້ອໃນໂຄງການຈຸດສຸມຂອງວາລະແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ບັນດາຫ້ອງການຂັ້ນເມືອງ ແລະ ກຸ່ມບ້ານໃຫ້ຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງ, ເປັນເອກະພາບໃນການຈັດຕັ້ງ ດ້ວຍຮູບການໂຄສະນາເຜີຍແຜ່ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວາລະແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຜ່ານສື່ມວນຊົນຂອງເມືອງ ແລະ ວິທະຍຸໂທລະໂຄ່ງຂອງແຕ່ລະບ້ານ ເປັນປົກກະຕິ, ຕໍ່ເນື່ອງໄດ້ 235 ຄັ້ງ, 117,50 ຊົ່ວໂມງ; ພ້ອມນີ້ກໍ່ຍັງໄດ້ຈັດຕັ້ງການໂຄສະນາດ້ວຍສື່ໂຄສະນາໂປດສະເຕີ, ຕິດປ້າຍຄຳຂວັນ ແລະ ຈັດຕັ້ງພິທີໂຄສະນາປາຖະກະຖາ ຜົນຮ້າຍຂອງຮ້າຍຂອງຢາເສບຕິດ ຢູ່ເທດສະບານເມືອງ ແລະ ຢູ່ບັນດາບໍລິສັດທີ່ລົງທຶນປູກພືດທົດແທນການປູກຝິ່ນໃນໂອກາດວັນແຫ່ງຊາດຕ້ານຢາເສບຕິດ, ວັນສາກົນ ຕ້ານຢາເສບຕິດ, ບັນດາກຸ່ມບ້ານດ້ວຍຮູບການໂຄສະນາເຄື່ອນທີ່, ໂຄສະນາດ້ວຍປາກເປົ່າ ເພື່ອປູກຈິດສຳນຶກໃຫ້ປະຊາຊົນບັນດາເຜົ່າພາຍໃນເມືອງສິງ ແຂວງຫຼວງນ້ຳທາຮັບຮູ້, ເຂົ້າໃຈ, ມີຄວາມຕື່ນຕົວ, ໃຫ້ການຮ່ວມມືຕ້ານ ແລະ ແກ້ໄຂບັນຫາຜົນຮ້າຍຂອງຢາເສບຕິດໃຫ້ຫຼຸດລົງໃນທົ່ວເມືອງ.

ລົງເກັບກຳຂໍ້ມູນບັນດາເປົ້າໝາຍຜູ້ທີ່ພົວພັນກັບຢາເສບຕິດ, ການສ້າງປຶດບັນທຶກນຳບຸກຄົນໃນກຸ່ມເປົ້າໝາຍຄອບຄົວ, ບ້ານ, ສຳນັກງານອົງການຂອງລັດ ແລະ ການແກ້ໄຂບຳບັດຜູ້ຕິດຢາເສບຕິດ ຢູ່ພາຍໃນເມືອງ ເຊິ່ງ

ມັນສະແດງອອກມີ 9 ກຸ່ມບ້ານ, 7.981 ຄອບຄົວ, ລວມ 41.356 ຄົນ, ຍິງ 10.640 ຄົນ; ມີພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ເຂົ້າຮ່ວມທັງໝົດ 1.291 ຄົນ, ຍິງ 512 ຄົນ. ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີພາກສ່ວນທີ່ມີສ່ວນພົວພັນກັບບັນຫາຢາເສບຕິດ, ມາຮອດປະຈຸບັນສຳເລັດ 100%. ຈັດຕັ້ງບຳບັດຜູ້ທີ່ຕິກເປັນທາດຂອງຢາເສບຕິດ ມາຮອດປະຈຸບັນປະຕິບັດໄດ້ 7 ຊຸດ, ມີຜູ້ເຂົ້າບຳບັດທັງໝົດ 1.890 ຄົນ, ຍິງ 395 ຄົນ, ບຳບັດຢູ່ຄຣີນິກເອກະຊົນ 1.086 ຄົນ, ຍິງ 220 ຄົນ.

ປັບປຸງການຈັດຕັ້ງ ແລະ ວິຊາສະເພາະ ໄດ້ສຸມໃສ່ປັບປຸງການຈັດຕັ້ງ ຢູ່ບັນດາຫ້ອງການອ້ອມຂ້າງເມືອງ ແລະ ກຳລັງປ້ອງກັນຄວາມສະຫງົບພາຍໃນເມືອງຈຳນວນໜຶ່ງເພື່ອໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ; ໄດ້ແຕ່ງຕັ້ງພະນັກງານທີ່ມີຄວາມຮູ້, ຄວາມສາມາດຈາກເຈົ້າໜ້າທີ່ ປກສ ແຂວງລົງຊ່ວຍ ປກສ ເມືອງຈຳນວນ 01 ສະຫາຍ, ແຕ່ງຕັ້ງພະນັກງານລັດ ຈາກບັນດາຫ້ອງການອ້ອມຂ້າງເມືອງລົງຊ່ວຍກຸ່ມບ້ານຈຳນວນໜຶ່ງ, ເປີດຝຶກອົບຮົມວຽກງານວິຊາສະເພາະ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ເຈົ້າໜ້າທີ່ ປກສ ບ້ານ, ກຸ່ມບ້ານໄດ້ 7 ຊຸດ, ມີຜູ້ເຂົ້າຮຽນ 1.702 ຄົນ, ຍິງ 395 ຄົນ ແລະ ບັນຈຸສັບຊ້ອນພະນັກງານແພດໝໍເຂົ້າປິ່ນປົວ ແລະ ບຳບັດຜູ້ຕິດຢາເສບຕິດ 730 ຄົນ, ຍິງ 167 ຄົນ, ພ້ອມກັບການປັບປຸງການຈັດຕັ້ງແຕ່ລະຂັ້ນພາຍໃນເມືອງໃຫ້ໜັກແໜ້ນເຂັ້ມແຂງ, ປະສານສົມທົບກັບຄະນະພັກຂັ້ນເທິງຄົ້ນຄວ້າ, ປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າພາຍໃນເມືອງ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງວາລະແຫ່ງຊາດ.

ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງ ຄະນະຮັບຜິດຊອບສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດແຂວງໄດ້ປະສານສົມທົບກັບຄະນະປະຈຳພັກເມືອງ, ປກສ ແຂວງ ແລະ ປກສ ເມືອງ ໃນການສຳຫຼວດ-ອອກແບບ, ຄິດໄລ່ປະເມີນມູນຄ່າໂຄງການກໍ່ສ້າງສູນບຳບັດ ແລະ ຝຶກອົບຮົມວິຊາຊີບ ໃຫ້ບຸກຄົນທີ່ຕົກເປັນທາດຂອງຢາເສບຕິດ ໂດຍສະເໜີໃຫ້ກະຊວງປ້ອງກັນຄວາມສະຫງົບເອົາເຂົ້າແຜນງົບປະມານການລົງທຶນຂອງລັດປີ 2023 ຈຳນວນ 3 ແຫ່ງຄື: ສູນບຳບັດ ແລະ ສູນຝຶກອົບຮົມວິຊາຊີບຫຼັກ 4 ຢູ່ເທດສະບານເມືອງ 1 ແຫ່ງ, ມູນຄ່າ 12,36 ຕື້ກີບ, ສົມທົບກັບເຈົ້າໜ້າທີ່ ປກສ ເມືອງ ປັບປຸງຫ້ອງກັກຂັງດັດສ້າງຊົ່ວຄາວມາເປັນຫ້ອງບຳບັດຜູ້ຕິກເປັນທາດຂອງຢາເສບຕິດຊົ່ວຄາວ; ມາຮອດປະຈຸບັນສຳເລັດ100%.

ການສົ່ງເສີມຜະລິດເປັນສິນຄ້າທົດແທນການປູກຝິ່ນ: ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ໄດ້ເອົາໃຈໃສ່ຊຸກຍູ້, ສົ່ງເສີມປະຊາຊົນບັນດາເຜົ່າ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ ລົງທຶນປູກພືດເປັນສິນຄ້າ, ແນໃສ່ສ້າງລາຍຮັບໃຫ້ແກ່ປະຊາຊົນ; ໃນປີ 2022 ຜະລິດພືດເປັນສິນຄ້າ ບັນລຸໄດ້ 1,32 ລ້ານໂຕນ, ໃນນີ້ ນ້ຳຢາງພາລາບັນລຸໄດ້ 130.087 ໂຕນ, ປູກອ້ອຍບັນລຸໄດ້ 1,10 ລ້ານໂຕນ; ລ້ຽງປາ ແລະ ລ້ຽງໄກ່ພັນໄຂ່ຮັບໃຊ້ການບໍລິໂພກພາຍໃນເມືອງສາມາດກຸ້ມຕົນເອງ, ບັນລຸໄດ້ 12,32 ພັນໂຕນ; ໄດ້ສົ່ງເສີມການລ້ຽງສັດ ແລະ ປູກພືດເປັນສິນຄ້າທົດແທນການປູກຝິ່ນ; ມີຟາມລ້ຽງແບ້ 12 ແຫ່ງ, ມີສັດລ້ຽງ 875 ໂຕ, ຟາມລ້ຽງໝູ 8 ແຫ່ງ, ມີສັດລ້ຽງ 84.000 ໂຕ ແລະ ຟາມລ້ຽງໄກ່ 4 ຟາມ, ມີສັດລ້ຽງ 74.000 ໂຕ; ປູກຢາງພາລາໄດ້ 3.000 ຮຕ ທຽບໃສ່ປີ 2021 ເພີ່ມຂຶ້ນ 2.500 ຮຕ, ຜະລິດເບ້ຍຢາງພາລາໄດ້ 2,5 ລ້ານເບ້ຍ.

ຍົກສູງປະສິດທິພາບການກວດກາຄົນເຂົ້າ-ອອກ

ເມືອງ: ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ, ນໍາພາແນວຄິດ ໃຫ້ພະນັກງານ-ສະມາຊິກພັກໃຫ້ເຈົ້າໜ້າທີ່ຕໍາຫຼວດ ແລະ ພາກສ່ວນກ່ຽວຂ້ອງ ປະຈໍາດ່ານທ້ອງຖິ່ນຢູ່ພາຍໃນເມືອງໃຫ້ເຂົາເຈົ້າມີຖຸນທາດການເມືອງໜັກແໜ້ນ, ຮັກສາໄດ້ຄຸນສົມບັດສິນທໍາປະຕິວັດ, ມີຄວາມໂປ່ງໃສທາງດ້ານວຽກງານວິຊາສະເພາະໃນການປະຕິບັດໜ້າທີ່ສະກັດກັ້ນ, ຄວບຄຸມ, ກວດກາ ການນໍາເຂົ້າ-ສົ່ງອອກສິນຄ້າປະເພດຕ່າງໆ ມີຄວາມເຂັ້ມງວດ, ກວດກາຕໍ່ການລັກລອບເຂົ້າ-ອອກເມືອງທີ່ຜິດກົດໝາຍ, ການລັກລອບຊື້-ຂາຍສິ່ງເສບຕິດ ຢູ່ລຽບຕາມຊາຍແດນລາວ-ຈີນ, ລາວ-ມຽນມາ ຢ່າງເດັດຂາດ, ເຂັ້ມງວດ; ເກັບກໍາຂ່າວ, ສືບຂ່າວ ແລະ ເບາະແສຕ່າງໆ ທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ສິ່ງຜິດກົດໝາຍຕ່າງໆໄດ້ທັນເວລາ. ພ້ອມນີ້ດ້ານການພົວພັນຮ່ວມມືກັບຕ່າງປະເທດໄດ້ເປັນເຈົ້າການປະສານສົມທົບວຽກງານວິຊາສະເພາະຕ້ານ ແລະ ສະກັດກັ້ນ ອາດສະຍາກໍາຂ້າມຊາດ ຮ່ວມກັບເຈົ້າໜ້າທີ່ຕໍາຫຼວດຈີນ ເຄື່ອນໄຫວກວດກາກຸ່ມເປົ້າໝາຍລັກລອບຄ້າ-ຂາຍຢາເສບຕິດຢູ່ຕາມຊາຍແດນລາວ-ຈີນ ເປັນປົກກະຕິ, ເຮັດໃຫ້ຊາຍແດນລະຫວ່າງຊາດລາວ-ຈີນ ມີຄວາມສະຫງົບປອດໄພໂດຍພື້ນຖານ; ສົມທົບກັບຄະນະກໍາມະການຊາຍແດນແຫ່ງຊາດ, ພະແນກຊາຍແດນກອງບັນຊາການທະຫານແຂວງ ລົງຕິດຕາມ, ກວດກາ ຫຼັກໝາຍຊາຍແດນລາວ-ຈີນ, ລາວ-ມຽນມາ ເພື່ອປ້ອງກັນ, ສະກັດກັ້ນ ການລັກລອບຊື້-ຂາຍຢາເສບຕິດຢູ່ຕາມຊາຍແດນ.

ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ, ເຮັດໃຫ້ເມືອງສິງມີຄວາມສະຫງົບໂດຍພື້ນຖານ, ພື້ນຖານເສດຖະກິດກໍ່ໄດ້ມີການຂະຫຍາຍຕົວຂຶ້ນເປັນກ້າວໆ, ທົ່ວສັງຄົມມີຄວາມສາມັກຄີ ເປັນເອກະພາບເປັນເຈົ້າການໃນການປະກອບສ່ວນຢ່າງຕັ້ງໜ້າຂອງທຸກພາກສ່ວນ ແລະ ໄດ້ຮັບການສະໜັບສະໜູນຈາກສັງຄົມ, ສາມາດແກ້ໄຂບັນຫາຢາເສບຕິດໄດ້ດີພໍສົມຄວນຖ້າທຽບໃສ່ຜ່ານມາ. ແຕ່ເຖິງຢ່າງໃດກໍ່ຕາມກໍ່ຍັງມີຫຼາຍບັນຫາທີ່ຕັ້ງຂຶ້ນ ເຊິ່ງຈະຕ້ອງໄດ້ປັບປຸງແກ້ໄຂໃນຕໍ່ໜ້າ ທັງຮັບປະກັນເຮັດໃຫ້ວຽກງານດັ່ງກ່າວນີ້ ດໍາເນີນໄປຢ່າງມີປະສິດທິຜົນສູງເປັນຕົ້ນແມ່ນ: ຄະນະພັກ, ອົງການປົກຄອງ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນຈໍານວນໜຶ່ງຄວາມຮັບຮູ້-ເຂົ້າໃຈ ຕໍ່ເນື້ອໃນຈິດໃຈ ວາລະແຫ່ງຊາດ ຍັງບໍ່ທັນໜັກແໜ້ນ, ເລິກເຊິ່ງ, ໂດຍສະເພາະຍັງມີຫຼາຍຫ້ອງການ, ກົມກອງຮາກຖານບ້ານຈໍານວນໜຶ່ງ ຍັງບໍ່ທັນຫັນເອົາເນື້ອໃນຈິດໃຈ ຂອງວາລະແຫ່ງຊາດ ມາເປັນທິດທາງ, ໂຄງການວຽກງານຈຸດສຸມ ໃນຂະແໜງການຂອງຕົນຢ່າງລະອຽດ, ຍັງຖືວ່າ ການປະຕິບັດວາລະແຫ່ງຊາດ ບໍ່ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ.ການຈັດຕັ້ງປະຕິບັດວາລະແຫ່ງຊາດເປັນວຽກໃໝ່, ຫຼາຍພາກສ່ວນບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນວຽກທີ່ມີຜົນກະທົບຕໍ່ສ່ວນບຸກຄົນ, ພາໃຫ້ເກີດມີແນວຄິດຈິ່ງຈຽມ; ອຸປະກອນ, ພາຫະນະ ແລະ ງົບປະມານຮັບໃຊ້ເຂົ້າໃນວຽກງານວາລະແຫ່ງຊາດ ບໍ່ພຽງພໍເຮັດໃຫ້ການເຄື່ອນໄຫວບໍ່ໄດ້ຕາມແຜນການ.

ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ໄດ້ຮັບຜົນສໍາເລັດຕາມຈຸດປະສົງລະດັບຄາດໝາຍນັ້ນ, ພວກເຮົາໄດ້ສຸມໃສ່ແກ້ໄຂບາງບັນຫາຄືດັ່ງລຸ່ມນີ້:

1. ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ, ພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ ຕ້ອງເພີ່ມທະວີ ແລະ ຖືເອົາວຽກວາລະແຫ່ງຊາດ ຕິດພັນກັບວຽກວິຊາສະເພາະ, ສ້າງເປັນແຜນ

ງານ, ແຜນການໂຄງການຈຸດສຸມປະຈຳອາທິດ, ປະຈຳເດືອນ, ພ້ອມທັງຕິດຕາມ, ຊຸກຍູ້ ແລະ ຊີ້ນຳ-ນຳພາຈັດຕັ້ງປະຕິບັດ ແລະ ມີການສະຫຼຸບຖອດຖອນບົດຮຽນເສີມຂະຫຍາຍດ້ານຕັ້ງໜ້າ, ແກ້ໄຂດ້ານອ່ອນ ແລະ ຂໍ້ຄົງຄ້າງໃຫ້ທັນເວລາ.

2. ຕ້ອງຫັນພະນັກງານ, ອຸປະກອນ, ພາຫະນະ ແລະ ງົບປະມານລົງຊ່ວຍເມືອງ, ກຸ່ມບ້ານ ແລະ ບັນດາບ້ານເປົ້າໝາຍຢູ່ພາຍໃນເມືອງແຕ່ຫົວທີ, ນຳພາອົງການປົກຄອງບ້ານຈັດຕັ້ງປະຕິບັດ ແຕ່ລະບາດກ້າວ, ຂັ້ນຕອນຕິດພັນກັບການເກັບກຳຂໍ້ມູນ, ຂຶ້ນບັນຊີພາກສ່ວນທີ່ພົວພັນກັບຢາເສບຕິດປະເພດຕ່າງໆ ໃຫ້ທັນກັບສະພາບການ ໄປພ້ອມກັບການປະຕິບັດມາດຕະການ, ກົດໝາຍທີ່ເຂັ້ມງວດຕໍ່ຜູ້ລະເມີດ, ທັງປົກປ້ອງຄວາມປອດໄພໃຫ້ບຸກຄົນ, ຄອບຄົວທີ່ໃຫ້ການຮ່ວມມື ແລະ ຖືເອົາການສຶກສາອົບຮົມການເມືອງ-ແນວຄິດໄປພ້ອມກັບການປະຕິບັດມາດຕະການຕົວຈິງ; ສ້າງສິ່ງເອື້ອອຳນວຍເພື່ອຮອງຮັບບຳບັດຜູ້ທີ່ຕົກເປັນທາດຂອງຢາເສບຕິດໃຫ້ເຂົາເຈົ້າມີອາຊີບ, ມີຊີວິດທີ່ດີຂຶ້ນ.

3. ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ, ກຸ່ມບ້ານ ຕ້ອງປະສານສົມທົບກັນຢ່າງກົມກຽວໃນການຕິດຕາມ, ກວດກາ; ການຈັດຕັ້ງປະຕິບັດລະບຽບການ ແລະ ກົດໝາຍວ່າດ້ວຍຢາເສບຕິດໃຫ້ເຂັ້ມງວດ; ປະຕິບັດວຽກງານສືບຂ່າວ, ກຳສະພາບການໃຫ້ໜັກແໜ້ນ, ກຳແໜ້ນບັນດາເປົ້າໝາຍ ແລະ ພື້ນທີ່ເພື່ອຈັດວາງກຳລັງ, ຜູ້ບັງຄັບບັນຊາເຂົ້າໃສ່, ປະສານສົມທົບກັບພາຍໃນ ແລະ ພາຍນອກໃຫ້ດີ, ຕີລາຄາສະພາບການດ້ານຕ່າງໆ ທີ່ຈະເກີດຂຶ້ນໃຫ້ມີຄວາມຊັດເຈນເພື່ອສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ທັນເວລາ.

4. ປັບປຸງກຳລັງ ປກຊ-ປກສ ຂັ້ນບ້ານ, ກຸ່ມບ້ານໃຫ້ໜັກແໜ້ນ, ເຂັ້ມແຂງ, ໂປ່ງໃສ, ແມ່ນສິ່ງຈຳເປັນ, ພາວະວິໄສ, ປະຕິບັດນະໂຍບາຍ ຕໍ່ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ທີ່ໄດ້ປະກອບສ່ວນປະຕິບັດວາລະແຫ່ງຊາດ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດລະບຽບກົດໝາຍ ແລະ ວາລະແຫ່ງຊາດ ວ່າດ້ວຍຢາເສບຕິດຢ່າງເຂັ້ມງວດ ແມ່ນຈະເຮັດໃຫ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໄດ້ຮັບຜົນສຳເລັດ; ຖືເອົາວຽກງານການແກ້ໄຂບັນຫາຢາເສບຕິດຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ ແຕ່ລະຂັ້ນ.

ບັນຫາຢາເສບຕິດແມ່ນເປັນໜຶ່ງໃນບັນດາປະກົດການຫຍໍ້ທໍ້ທາງສັງຄົມ, ເປັນໜໍ່ແໜງ ແລະ ເປັນສາເຫດຕົ້ນຕໍຂອງການເກີດຄວາມຮຸນແຮງ ແລະ ສິ່ງຫຍໍ້ທໍ້ທາງສັງຄົມສິ່ງຜົນກະທົບໂດຍກົງຕໍ່ກັບການພັດທະນາເສດຖະກິດ-ສັງຄົມ, ຕໍ່ສຸຂະພາບຂອງປະຊາຊົນ ທີ່ສ້າງຜົນກະທົບເບື່ອເມົາຊາວໜຸ່ມ, ເຍົາວະຊົນ ທີ່ເປັນກຳລັງແຮງ, ເປັນຜູ້ສືບທອດພາລະກິດ ແລະ ອານາຄົດຂອງຊາດ. ສະນັ້ນ, ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແມ່ນມີຄວາມສຳຄັນຢ່າງຍິ່ງ ແລະ ເປັນໜ້າທີ່ຕົ້ນຕໍ ຂອງຄະນະພັກແຕ່ລະຂັ້ນ, ສະມາຊິກພັກ-ພະນັກງານແຕ່ລະສະຫາຍກໍ່ຄືທົ່ວສັງຄົມ, ປຸກລະດົມໃຫ້ທຸກຊັ້ນຄົນໃນສັງຄົມເຂົ້າຮ່ວມຢ່າງກວ້າງຂວາງ, ຖືສຳຄັນ ແລະ ເປັນພັນທະໜ້າທີ່, ເປັນຄວາມຮັບຜິດຊອບ ແລະ ເປັນພາລະກິດທົ່ວປວງຊົນເຊື່ອພັກ-ລັດເປັນແກນກາງ ເພື່ອຂັບເຄື່ອນແກ້ໄຂຢ່າງມີຈຸດສຸມ, ເປັນລະບົບ, ເປັນຂະບວນການຟົດຟື້ນທົ່ວສັງຄົມໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໂດຍປະຕິບັດຢ່າງເຂັ້ມງວດ, ຈຶ່ງຈະເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ປອດໄພຈາກຢາເສບຕິດ...ຯ

ຜະລິດຕະພັນນ້ຳດື່ມສະໝຸນໄພໃບໝາດ ກຳລັງເປັນທີ່ນິຍົມດື່ມ ຈົນກາຍເປັນ ສິນຄ້າໃນປະຈຸບັນ

ໂດຍ: ຈັນອາລີຈິດ

ປະຈຸບັນນີ້, ຜະລິດຕະພັນສະໝຸນໄພ ເພື່ອຄຸນນະພາບຫຼາຍຊະນິດ, ຫຼາຍຜະລິດຕະພັນ ທີ່ໄດ້ຮັບການປຸງແຕ່ງຈາກໂຮງງານ ແລະ ຈາກການປຸງແຕ່ງແບບດັ່ງເດີມຂອງປະຊາຊົນໃນແຕ່ລະຂົງເຂດ ທີ່ມີສັບພະຄຸນ, ຮູບຊົງ ແລະ ສີສັນແຕກຕ່າງກັນແລ້ວ ຕາມຄ່ານິຍົມຊົມຊອບຂອງຄົນໃນສັງຄົມ. ໃນນັ້ນ, ຜະລິດຕະພັນນ້ຳດື່ມສະໝຸນໄພທີ່ຜະລິດມາຈາກໃບໝາດ ແມ່ນຜະລິດຕະພັນເພື່ອສຸຂະພາບ ເຊິ່ງກຳລັງເປັນທີ່ນິຍົມຫຼາຍໃນສັງຄົມ ເພາະມັນເປັນເຄື່ອງດື່ມທີ່ດີຕໍ່ສຸຂະພາບມີສັບພະຄຸນທາງຢາ ເປັນພືດທີ່ປູກງ່າຍ, ເກີດຕາມທຳມະຊາດ. ຍ້ອນເຫັນໄດ້ເຖິງສັບພະຄຸນ ແລະ ຄວາມນິຍົມຂອງສັງຄົມຄືດັ່ງກ່າວນັ້ນ ນາງ ດວງສະໝອນ ພິມມະຈັນ ຈຶ່ງທົດລອງຜະລິດນ້ຳສະໝຸນໄພໃບໝາດເປັນອາຊີບເສີມ ສາມາດສ້າງລາຍຮັບເຂົ້າຄອບຄົວປີໜຶ່ງບໍ່ຕ່ຳກວ່າ 120 ລ້ານກີບ.

ນາງ ດວງສະໝອນ ພິມມະຈັນ ອາຍຸ 31 ປີ ອາຊີບເປັນຄູສອນ, ປະຈຸບັນຢູ່ບ້ານໜອງຜື ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ລາວໄດ້ເວົ້າສູ່ຟັງວ່າ: ຕົນເອງຮູ້ສຶກດີໃຈ ແລະ ພາກພູມໃຈຫຼາຍທີ່ໄດ້ມີໂອກາດຕອບຄຳຖາມສຳພາດຂອງທີມງານກົມໂຄສະນາກໍ່ສ້າງພັກ-ພະນັກງານ ທີ່ລົງມາເຄື່ອນໄຫວວຽກງານວິຊາສະເພາະຢູ່ແຂວງສະຫວັນນະເຂດ ແລະ ໄດ້ມີໂອກາດນຳສະເໜີຜະລິດຕະພັນນ້ຳສະໝຸນໄພໃບໝາດ ເຊິ່ງແມ່ນຜະລິດຕະພັນປະເພດເຄື່ອງດື່ມສະໝຸນໄພທີ່ມີຄວາມສະອາດ, ໂດຍຜ່ານການກັ່ນຕອງແບບປະຖົມປະຖານ ແລະ ໄດ້ເລີ່ມທົດລອງຜະລິດນ້ຳສະໝຸນໄພໃບໝາດແຕ່ປີ 1999.

ຄວາມເປັນມາຂອງນ້ຳສະໝຸນໄພໃບໝາດແມ່ນເກີດມາຈາກແນວຄວາມຄິດຂອງຜູ້ເປັນແມ່ ເຊິ່ງໃນເມື່ອກ່ອນແມ່ຂອງຕົນ ໄດ້ມີອາການປວດເມື່ອຍຕາມຮ່າງກາຍເນື່ອງຈາກເຮັດວຽກໜັກ ເລີຍໄດ້ເກັບເອົາໃບໝາດມາໜຶ້ງ ເພື່ອຮົມຮ່າງກາຍພາຍຫຼັງຮົມແລ້ວກໍ່ຮູ້ສຶກແຂງແຮງຂຶ້ນໃນຂະນະທີ່ໜຶ້ງໃບໝາດນັ້ນ ເພິ່ນໄດ້ເອົາຖ້ວຍມາວາງໃສ່ກາງໝໍ້ຊຶ່ງ ເພື່ອຕອງເອົານ້ຳທີ່ກັ່ນຈາກໃບໝາດມາທົດລອງດື່ມຜ່ານການທົດລອງດື່ມກໍ່ຮູ້ສຶກສົດຊື່ນ ແລະ ຊຸ່ມເຢັນຄໍດີ, ອາການເຈັບປວດຕາມຮ່າງກາຍກໍດີຂຶ້ນ ຕໍ່ມາເພິ່ນກໍ່ໄດ້ກັ່ນຕອງເອົານ້ຳສະໝຸນໄພໃບໝາດ ເພື່ອແຈກຢາຍໃຫ້ພີ່ນ້ອງທີ່ມາຢ້ຽມຢາມ ແລະ ໃຫ້ຊາວບ້ານໜອງຜືໄດ້ລອງດື່ມ, ຜູ້ທີ່ດື່ມໄດ້ໃຫ້ຄຳຕອບ ແລະ ຄຳຍ້ອງຍໍວ່າ: ລົດຊາດດີ, ກິ່ນ

ຫອມ, ດື່ມແລ້ວມີຄວາມສົດຊື່ນ ແລະ ດີຕໍ່ສຸຂະພາບ, ອາການອິດເໝື່ອຍໃນຮ່າງກາຍກໍ່ດີຂຶ້ນ ເປັນຕົ້ນແມ່ນ ໂລກກະເພາະ, ເຈັບເສັ້ນ, ເຈັບປວດຕາມຕົນໂຕ, ເຈັບ ຫຼັງປວດແອວ, ວິນວຽນໜ້າມືດຕາລາຍແລະ ຊ່ວຍ ໃຫ້ນອນຫຼັບງ່າຍ, ເລືອດໄຫຼວຽນດີ, ສະໝານແຜຫຼັງ ຈາກເກີດລູກໃໝ່, ຊ່ວຍຮັກສາບາດແຜສົດ ແລະ ແກ້ຊ້ຳ ໃນໄດ້ດີ.

ເມື່ອເຫັນໄດ້ຄືແນວນັ້ນ, ຈຶ່ງໄດ້ຕັດສິນໃຈທົດ ລອງແບບຈິງຈັງ ເພີ່ມການຜະລິດຂຶ້ນ ເພື່ອຈຳໜ່າຍ ເປັນສິນຄ້າ ພາຍໃນເມືອງເຫັນວ່າໄດ້ຜົນຕອບຮັບ ເປັນຢ່າງດີ ແລະ ມີຄວາມຕ້ອງການເພີ່ມຂຶ້ນ ມາຮອດ ປີ 2022 ຕົນເອງກໍໄດ້ມີແນວຄິດລິເລີ່ມຫັນມາຜະ ລິດເປັນສິນຄ້າສຳເລັດຮູບ ອອກຈຳໜ່າຍສູ່ຕະຫຼາດ ຈາກນັ້ນມາ ເພື່ອໃຫ້ຜູ້ທີ່ຮັກສາສຸຂະພາບໄດ້ດື່ມຢ່າງ ກວ້າງຂວາງ ແລະ ເຫັນວ່າຜູ້ບໍລິໂພກຜະລິດຕະພັນນ້ຳ ດື່ມສະໝຸນໄພໃບໝາດໃຫ້ຄວາມສົນໃຈຫຼາຍຂຶ້ນ ເພາະມີຜົນດີຕໍ່ສຸຂະພາບ ມີການຕອບຮັບຈາກສັງຄົມ ຫຼາຍຂຶ້ນ ຈຶ່ງເຮັດໃຫ້ຄອບຄົວມີຕົ້ນທຶນການຜະລິດ ແລະ ໄດ້ມີແນວຄວາມຄິດປັບປຸງຜະລິດຕະພັນດ້ວຍ ການອອກແບບໂລໂກ້, ສັນຍາລັກຂອງຜະລິດຕະພັນ, ຂວດບັນຈຸພັນໃຫ້ມີຮູບຊົງສວຍງາມ ແລະ ມີຄຸນນະ ພາບດີ ເປັນອາຊີບເສີມສ້າງລາຍຮັບໃຫ້ແກ່ຄອບຄົວ ສູງສົມຄວນ ເຊິ່ງສະແດງອອກ ປີໜຶ່ງສາມາດຜະລິດ ໄດ້ 5 ງວດ, ງວດລະ 1.000 ຕຸກ ບັນຈຸ 350 ມລ ຕັດ ຈາກຕົ້ນທຶນການລະລິດ ສາມາດສ້າງລາຍຮັບງວດລະ 24 ລ້ານກີບ, ແຮງງານການຜະລິດແມ່ນ 4 ຄົນ ເຊິ່ງແມ່ນ ຄົນພາຍໃນຄອບຄົວເອງ; ດວງສະໝອນຍັງໄດ້ໃຫ້ ຮູ້ຕື່ມວ່າ: ກ່ອນຈະມີຜະລິດຕະພັນນີ້ ຕົນເອງຕ້ອງໄດ້ ຝຶກຝົນ ແລະ ຮຽນຮູ້ຈາກຜູ້ເປັນແມ່ຫຼາຍຢ່າງ ເພື່ອຖອດ ຖອນບົດຮຽນນຳເພິ່ນ ພື້ນຖານຕ້ອງເປັນຜູ້ທີ່ດຸໝັ່ນ ຫ້າວຫັນ ແລະ ພັດທະນາຕົນເອງ.

ສະເພາະໃນທິດທາງແຜນການຕໍ່ໜ້າ ຄິດໄວ້ວ່າ ຈະສືບຕໍ່ຂະຫຍາຍການຜະລິດ ແລະ ຂະຫຍາຍຕະຫຼາດ ໃຫ້ກວ້າງອອກໄປເລື້ອຍໆດ້ວຍການໂຄສະນາທາງ

ສີຕ່າງໆ ຫຼື ບອກປາກຕໍ່ປາກ ແລະ ຈະພະຍາຍາມປັບປຸງການຜະລິດໃຫ້ດີຂຶ້ນຕື່ມອີກ ເພື່ອພັດທະນາຜະລິດຕະພັນນໍ້າດື່ມສະໝຸນໄພໃບໝາດໃຫ້ໄດ້ຫຼາຍຂະໜາດດ້ວຍການພາຊະນະບັນຈຸພັນ ແລະ ເພີ່ມປະລິມານການຜະລິດໃຫ້ຫຼາຍຂຶ້ນ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ ແລະ ໃນໄວໆນີ້ຈະມີການປັບປ່ຽນພາສະນະບັນຈຸພັນແບບໃໝ່ທີ່ມີຮູບຊົງສວຍງາມສາມາດດຶງດູດລູກຄ້າຫຼາຍຂຶ້ນ ແລະ ຈະພະຍາຍາມສືບທອດຈາກລຸ້ນສູ່ລຸ້ນເພື່ອຮັກສາ ແລະ ພັດທະນາຕໍ່ຍອດຜະລິດຕະພັນນໍ້າດື່ມສະໝຸນໄພໃບໝາດໃຫ້ດີຂຶ້ນເລື້ອຍໆ ແລະ ໄດ້ກຳລັງຢູ່ໃນຂະບວນການສະເໜີທາງເມືອງ ກໍຄືແຂວງ ເພື່ອຈົດທະບຽນ ອຢ.

ໃນໂອກາດທີ່ມາສຳພາດຄອບຄົວຄອບຕົວແບບນີ້ເປັນກຽດທີ່ທ່ານ ຂັນທະນາມ ບຸນເພັດຕາວັນ ເລຂາໜ່ວຍພັກບ້ານນາຍບ້ານ ບ້ານໜອງຜື ຕາງໜ້າໃຫ້ທາງຄອບຄົວ ນາງ ດວງສະໝອນ ທີ່ເຮັດນໍ້າສະໝູນໄພໃບໝາດນໍ້າດື່ມທີ່ມາຮັບໃຊ້ໃຫ້ພໍ່ແມ່ປະຊາຊົນ ເຮົາກໍ່ດີອົກດີໃຈທີ່ເພິ່ນໄດ້ເຮັດຜະລິດຕະພັນນີ້ຂຶ້ນມາ ຢ່າງມີຄຸນນະພາບຄືດັ່ງທີ່ຮູ້ນຳກັນແລ້ວວ່ານັບແຕ່ໃບ, ລຳຕົ້ນ ແລະ ຮາກຂອງໃບໝາດລ້ວນແຕ່ເປັນຢາ, ເປັນພືດສະໝຸນໄພທີ່ນຳໃຊ້ກັນມາແຕ່ສະໄໝບູຮານຈົນເຖິງປະຈຸບັນ. ແຕ່ລະບ່ອນເພິ່ນກໍ່ໄດ້ລົງມາຢັ້ງຢືນໃຫ້ມັນຖືກຕ້ອງຕາມລະບຽບກົດໝາຍບ້ານເມືອງ ພວກເຮົາກໍ່ເຫັນດີຍ້ອງຍໍຊົມເຊີຍເປັນຄອບຄົວໜຶ່ງທີ່ມີແນວຄວາມຄິດສ້າງສັນຮູ້ຈັກຄົ້ນຄິດສ້າງຜະລິດຕະພັນເພື່ອຕໍ່ຍອດທີ່ເຮັດໃຫ້ສັງຄົມຮັບຮູ້ ແລະ ນິຍົມກັນດື່ມພວກເຮົາຮຽກຮ້ອງມາຍັງແຕ່ລະຄອບຄົວ ຫຼື ຍາດຕິພີ່ນ້ອງແຕ່ລະພາກສ່ວນໃຫ້ການສະໜັບສະໜູນຫັນມານຳໃຊ້ນໍ້າສະໝຸນໄພໃບໝາດໃຫ້ທົ່ວເຖິງ ເພື່ອສົ່ງເສີມຜະລິດຕະພັນພາຍໃນສະນັ້ນຂໍຕາງໜ້າອຳນາດການປົກຄອງບ້ານໜອງຜື, ນະຄອນໄກສອນ ພົມວິຫານ ແຂວງສະຫວັນນະເຂດ ຂໍຢັ້ງຢືນ ແລະ ສົ່ງເສີມໃຫ້ສືບຕໍ່ຜະລິດຕະພັນນໍ້າສະໝຸນໄພໃບໝາດອອກຈຳໜ່າຍໃຫ້ສັງຄົມໄດ້ຮັບຮູ້, ໄດ້ດື່ມກັນຢ່າງກວ້າງຂວາງ.

ຈາກຜົນສຳເລັດທີ່ກ່າວມານັ້ນ, ນອກຈາກຄວາມດຸໝັ່ນ, ພາກພຽນພະຍາຍາມ ແລະ ຄວາມມັກຮັກ ຂອງຕົນແລ້ວ ຄວາມສາມັກຄີເປັນເອກະພາບພາຍໃນຄອບຄົວກໍ່ສຳຄັນ ມີການປຶກສາຫາລືກັນຕັດສິນໃຈໃນການພັດທະນາຊີວິດການເປັນຢູ່ ແລະ ອີກດ້ານໜຶ່ງ ທາງອົງການຈັດຕັ້ງບ້ານ ກໍ່ໄດ້ໃຫ້ການຊຸກຍູ້ສົ່ງເສີມ, ສະໜັບສະໜູນໃນດ້ານຕ່າງໆ ບໍ່ວ່າດ້ານການໂຄສະນາເຜີຍແຜ່, ໃຫ້ຄວາມສະດວກ ຈຶ່ງເຮັດໃຫ້ຜະລິດຕະພັນຂອງຄອບຄົວຕົນເອງ ໄດ້ຮັບຄວາມນິຍົມ ແລະ ເປັນທີ່ຍອມຮັບຢ່າງກວ້າງຂວາງ ຂອງຜູ້ບໍລິໂພກໃຫ້ຫຼາຍຂຶ້ນຕື່ມອີກ ເພື່ອປະກອບສ່ວນສ້າງລາຍຮັບໃຫ້ແກ່ປະຊາຊົນບ້ານໜອງຜື ຂ້າພະເຈົ້າ ຈຶ່ງຮຽກຮ້ອງມາຍັງພໍ່ແມ່ປະຊາຊົນທີ່ມີເນື້ອທີ່ເປົ່າຫວ່າງ ຫັນມາປູກພືດໃບໝາດ ເພື່ອເປັນວັດຖຸດິບສະໜອງໃຫ້ແກ່ຕົນເອງ ແລະ ເພື່ອເປັນການລາຍຮັບເພີ່ມ ທັງເປັນການປະກອບສ່ວນຊຸກຍູ້ສົ່ງເສີມ, ອຸດໜູນນໍ້າດື່ມສະໝຸນໄພໃບໝາດ ຂອງລາວເຮົາເຊິ່ງເປັນຜະລິດຕະພັນພາຍໃນ ໃຫ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ ດັ່ງຄຳຂວັນທີ່ວ່າ: ລາວລາວ, ລາວໃຊ້, ລາວໄດ້, ລາວຈະເລີນ.

ຫາກທ່ານໃດສົນໃຈຢາກດື່ມ ຫຼື ເປັນຕົວແທນຈຳໜ່າຍຜະລິດຕະພັນດັ່ງກ່າວ ກໍ່ສາມາດຕິດຕໍ່ຫາຂ້າພະເຈົ້າໄດ້ ດວງສະໝອນ ເບີໂທ: 020 23606866...ຯ

"ຢາກໃຫ້ຊາດເຂັ້ມແຂງ ຕ້ອງສ້າງກະສິກຳໃຫ້ເຂັ້ມແຂງ"

ແປ ແລະ ຮຽບຮຽງໂດຍ: ສຸກສະຫວາດ ເທບພະວົງ

ປະເທດຈີນ ເປັນກະສິກຳທີ່ໃຫຍ່ທີ່ສຸດມາແຕ່ບູຮານ, ປະຈຸບັນເຖິງວ່າຄວາມທັນສະໄໝຂອງຈີນໄດ້ກ້າວໂດດສູ່ຄວາມສີວິໄລຢ່າງເຕັມທີ່ແລ້ວ ແຕ່ການນຳພັກ-ລັດຂອງຈີນ ຍັງໃຫ້ຄວາມສຳຄັນກັບວຽກງານການພັດທະນາກະສິກຳຢ່າງບໍ່ຢຸດຢັ້ງ. ໂດຍສະເພາະໃນສະພາບການທີ່ຜັນປ່ຽນ ໃນພາກພື້ນ ແລະ ສາກົນ ເປັນຕົ້ນບັນຫາສົງຄາມ, ການເມືອງ ແລະ ວິກິດທາງເສດຖະກິດແບບນີ້ ສປ ຈີນ ຍິ່ງໃຫ້ຄວາມສຳຄັນທີ່ສຸດ ໃນເລື່ອງສະບຽງອາຫານ ເພື່ອຮັບປະກັນໃຫ້ປະຊາກອນຂອງຕົນມີສະບຽງອາຫານພຽງພໍ ໃນຍາມທີ່ພົບກັບວິກິດຕ່າງໆທີ່ອາດຈະເກີດຂຶ້ນ.

ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ XVIII ຂອງພັກກອມມູນິດຈີນເປັນຕົ້ນມາ, ພາຍໃຕ້ການນຳຂອງສູນກາງພັກກອມມູນິດຈີນ ໂດຍມີປະທານ ສີຈິ້ນຜິງ ເປັນແກນນຳ ໄດ້ຍົກສູງຄວາມສຳຄັນວຽກງານ ກະສິກຳ 3 ດ້ານ ຂຶ້ນສູ່ລະດັບ. ການນຳພາຊຸກຍູ້ວຽກງານພັດທະນາຄວາມທັນສະໄໝດ້ານກະສິກຳຂອງຊົນນະບົດໃນຍຸກໃໝ່, ສົ່ງເສີມໃຫ້ວຽກກະສິກຳໃນຊົນນະບົດໄດ້ຮັບໝາກຜົນ ທີ່ມີລັກສະນະປະຫວັດສາດ ເພື່ອໃຫ້ເກີດມີການປ່ຽນແປງໃນໜ້າປະຫວັດສາດໃໝ່. ໃນບົດປາໄສຫົວຂໍ້ທີ່ວ່າ: ເລັ່ງການກໍ່ສ້າງປະເທດເຂັ້ມແຂງທາງກະສິກຳ, ຊຸກຍູ້ກະສິກຳຂອງຊົນນະບົດໃຫ້ທັນສະໄໝຂອງທ່ານເລຂາທິການໃຫຍ່ ສີຈິ້ນຜິງ ໃຫ້ເລັ່ງສຸມໃສ່ການປະຕິບັດວຽກງານລວມຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ກ່ຽວກັບວຽກງານກະສິກຳ ແລະ ຊົນນະບົດຄື ກຳນົດເປົ້າໝາຍໃນການກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳ, ເນັ້ນວຽກງານຊົນນະບົດ ແລະ ກະສິກຳໃຫ້ແທດເໝາະກັບສະພາບຄວາມເປັນຈິງ ໃຫ້ເຊື່ອມໂຍງກັບປະຫວັດສາດ ຄວາມເປັນຈິງ ແລະ ອະນາຄົດ ອະທິບາຍຄວາມໝາຍ, ຄວາມສຳຄັນຂອງການກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳຢ່າງເລິກເຊິ່ງ ໂດຍການສົມທົບທັງພາຍໃນ ແລະ ສາກົນ, ສີສັນພິເສດຂອງຈີນ ໃນການຈັດຕັ້ງປະຕິບັດຕົວຈິງ. ພ້ອມທັງຕອບຄຳຖາມພື້ນຖານ ເພື່ອຫຍັງ, ແມ່ນຫຍັງ, ເຮັດຫຍັງ ຂອງການເລັ່ງສ້າງປະເທດເຂັ້ມແຂງດ້ານກະສິກຳ ຢ່າງມີຫຼັກການວິທະຍາສາດ ດັ່ງລຸ່ມນີ້:

❖ ຍ້ອນຫຍັງຈຶ່ງສ້າງປະເທດທີ່ເຂັ້ມແຂງດ້ານກະສິກຳ?.

ຄວາມໝາຍສຳຄັນທີ່ຍິ່ງໃຫຍ່ໃນການເລັ່ງສ້າງປະເທດທີ່ເຂັ້ມແຂງທາງດ້ານກະສິກຳ ສະຫາຍເລຂາທິການໃຫຍ່ ສີຈິ້ນຜິງ ໄດ້ກ່າວຢ່າງເລິກເຊິ່ງວ່າ: ປະເທດເຂັ້ມແຂງທາງດ້ານກະສິກຳ ແມ່ນຮາກຖານຂອງປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງ, ບໍ່ວ່າລະດັບ

ຄວາມທັນສະໄໝຂອງສັງຄົມຈະສູງປານໃດກໍ່ຕາມ, ເລື່ອງສະບຽງອາຫານຂອງຄົນ 1400 ລ້ານຄົນ ແລະ ການສະໜອງຜະລິດຕະພັນ ດ້ານກະສິກຳທີ່ສຳຄັນ ຍັງແມ່ນວຽກທີ່ຍິ່ງໃຫຍ່ສຳຄັນທີ່ສຸດ ພ້ອມທັງໄດ້ມີການອະທິບາຍຢ່າງເລິກເຊິ່ງ ຜ່ານ 3 ດ້ານດັ່ງລຸ່ມນີ້:

1. ຍ້ອນ ການຕອບສະໜອງຄວາມຕ້ອງການ ການດຳລົງຊີວິດທີ່ສຸກສຳລານຂອງປະຊາຊົນ ແມ່ນປາສະຈາກການພັດທະນາກະສິກຳບໍ່ໄດ້ ຂະແໜງກະສິກຳ ແມ່ນຂະແໜງໜຶ່ງທີ່ສຳຄັນສ້າງວຽກເຮັດງານທຳໃຫ້ເກືອບ 2 ຮ້ອຍລ້ານຄົນ, ມີຊາວນາທີ່ອາໄສໃນສວນຂອງຕົນ ຢູ່ຊົນນະບົດເກືອບ 5 ຮ້ອຍລ້ານຄົນ, ສະນັ້ນ, ມີພຽງພັດທະນາກະສິກຳ ແລະ ຊົນນະບົດໃຫ້ດີຂຶ້ນເທົ່ານັ້ນ ປະຊາຊົນທັງຫຼາຍ ຈຶ່ງມີຄວາມເຂັ້ມແຂງ ພວກເຂົາ ຈຶ່ງຮູ້ສຶກໄດ້ຮັບຜົນ, ມີຄວາມສຸກ ແລະ ຄວາມປອດໄພຢ່າງພຽງພໍ.

2. ຍ້ອນ ການບັນລຸການພັດທະນາທີ່ມີປະສິດທິພາບສູງ ແມ່ນປາສະຈາກການພັດທະນາກະສິກຳບໍ່ໄດ້ ເມື່ອຂະແໜງກະສິກຳເຂັ້ມແຂງ, ມີຄວາມຮັບປະກັນໃນການສະໜອງຜະລິດຕະພັນດ້ານກະສິກຳ, ລາຄາສິນຄ້າຈຶ່ງຄົງທີ່, ຈິດໃຈປະຊາຊົນຈຶ່ງສະຫງົບສຸກ ແລະ ໂຄງສ້າງດ້ານເສດຖະກິດກໍ່ຈຶ່ງສາມາດໝັ້ນຄົງໄດ້; ເສີມຂະຫຍາຍຊ່ອງຫວ່າງການພັດທະນາສິ່ງທັນສະໄໝ, ວຽກງານດ້ານກະສິກຳ ແລະ ຊົນນະບົດ ທີ່ຍັງເປັນຊ່ອງຫວ່າງໃຫ້ກວ້າງຂວາງທີ່ສຸດ; ຂະຫຍາຍຄວາມຕ້ອງການພາຍໃນໃຫ້ເຕີບໂຕຢ່າງໝັ້ນຄົງ, ສົ່ງເສີມການພັດທະນາ ແລະ ກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳ ແມ່ນຈຸດເລີ່ມຕົ້ນ ແລະ ຈຸດບຸກທະລຸທີ່ສຳຄັນ.

3. ຍ້ອນຂະແໜງກະສິກຳ ເປັນພື້ນຖານດ້ານຄວາມປອດໄພຂອງຊາດ ໃນສະພາບປະຈຸບັນ, ໄດ້ມີການປ່ຽນແປງຢ່າງໄວວາແບບກ້າວກະໂດດທີ່ບໍ່ເຄີຍມີມາກ່ອນ ເຊັ່ນ: ການລະບາດຂອງພະຍາດໂຄວິດ-19, ການຂວ້ຳບາດທາງການຄ້າຈາກພາຍນອກທີ່ນັບມື້ນັບຮຸນແຮງຂຶ້ນ ເຊິ່ງເປັນປັດໄຈທີ່ບໍ່ສາມາດຄວບຄຸມໄດ້ນັບມື້ນັບເພີ່ມຂຶ້ນເລື້ອຍໆ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ: ມີພຽງເຮັດໃຫ້ຂະແໜງກະສິກຳເຂັ້ມແຂງ ແລະ ຄວາມປອດໄພດ້ານສະບຽງອາຫານ ຈຶ່ງມີຄວາມຮັບປະກັນການຮັກສາສະຖຽນລະພາບດ້ານໂຄງສ້າງ, ການປ່ຽນແປງໂຄງສ້າງ ແລະ ການເປີດໂຄງສ້າງໃໝ່ ຈຶ່ງສາມາດສ້າງຄວາມໝັ້ນໃຈ ແລະ ເປັນເຈົ້າການໃນການລິເລີ່ມດ້ານກົນລະຍຸດໄດ້.

❖ ສ້າງປະເທດເຂັ້ມແຂງດ້ານກະສິກຳແບບໃດ?

ເລັ່ງສ້າງປະເທດທີ່ເຂັ້ມແຂງດ້ານກະສິກຳທີ່ມີສີສັນພິເສດຂອງຈີນ; ເລຂາທິການໃຫຍ່ ສີຈິ້ນຜິງ ໄດ້ເນັ້ນໜັກວ່າ: ພວກເຮົາຕ້ອງສ້າງປະເທດທີ່ມີຄວາມເຂັ້ມແຂງດ້ານກະສິກຳ, ບັນລຸກະສິກຳທີ່ທັນສະໄໝ, ໃຫ້ມີລັກສະນະພິເສດທີ່ຄືກັນກັບຕ່າງປະເທດທີ່ມີຄວາມເຂັ້ມແຂງດ້ານກະສິກຳແລ້ວ ສະເພາະ ສປ ຈີນ ແມ່ນມີສີສັນພິເສດແບບຈີນຕາມເອກະລັກຂອງພວກເຮົາເອງ ລັກສະນະພິເສດທີ່ຄືກັບສາກົນ ໝາຍເຖິງການຍຶດຖືຫຼັກການທັນສະໄໝພື້ນຖານຂອງກະສິກຳເພື່ອສ້າງເປັນປະເທດເຂັ້ມແຂງດ້ານກະສິກຳທີ່ຮັບປະກັນການສະໜອງອາຫານຢ່າງແຂງແຮງ, ມີເຄື່ອງມືອຸປະກອນເຕັກໂນໂລຊີທີ່ເຂັ້ມແຂງ ແລະ ທັນສະໄໝ, ມີລະບົບການດຳເນີນທຸລະກິດທີ່ເຂັ້ມແຂງ, ຄວາມທົນທານຂອງອຸດສະຫະກຳທີ່ເຂັ້ມແຂງ ແລະ ມີກຳລັງການແຂ່ງຂັນທີ່ເຂັ້ມແຂງ; ລັກສະນະສີສັນພິເສດຂອງຈີນ ໝາຍເຖິງການຍຶດຖືຈຸດຢືນຄວາມເປັນຊາດຈີນ, ຊົມໃຊ້ຂໍ້ໄດ້ປຽບດ້ານຊັບພະຍາກອນຫຼາຍ ແຕ່ຄົນໜ້ອຍ

ໃຫ້ເຕັມທີ່, ຮັກສາປະຫວັດສາດຂອງອະລິຍະທຳການຄາດໄຖ, ການອາໄສເພິ່ງພາເຊິ່ງກັນ ແລະ ກັນ ລະຫວ່າງຄົນກັບທຳມະຊາດຕາມຄວາມຕ້ອງການຂອງຍຸກສະໄໝ, ກ້າວໄປບົນເສັ້ນທາງຂອງຕົນ ແລະ ສ້າງຮູບແບບປະເທດທີ່ເຂັ້ມແຂງທາງກະສິກຳໃນຮູບແບບຂອງຈີນທີ່ດີເລີດ ແລະ ບໍ່ຄືໃຜ.

ລາຍລະອຽດຂອງສີສັນພິເສດຈີນ, ຄວາມເປັນຈີນ ແລະ ປະເທດທີ່ເຂັ້ມແຂງດ້ານກະສິກຳທີ່ທັນສະໄໝ ຕາມຮູບແບບຂອງຈີນ ປະທານ ສີຈິ້ນຜິງ ໄດ້ອະທິບາຍຢ່າງລະອຽດຜ່ານ 5 ດ້ານດັ່ງນີ້: 1. ກຳແໜ້ນຖ້ວຍເຂົ້າຂອງຕົນດ້ວຍການເພິ່ງກຳລັງແຮງຂອງຕົນເອງ; 2. ມອບໃຫ້ລະບົບການຕະຫຼາດພັດທະນາກະສິກຳ; 3. ພັດທະນາກະສິກຳທີ່ໃຊ້ກາກບອນຕ່ຳ, 4 ສືບທອດອະລິຍະທຳການຄາດໄຖ ແລະ 5. ມຸ່ງໝັ້ນຊຸກຍູ້ຄວາມຮັ່ງມີສຳລານທີ່ພ້ອມພຽງກັນ.

❖ ສ້າງປະເທດເຂັ້ມແຂງດ້ານກະສິກຳແນວໃດ?

ການເລັ່ງກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳຕ້ອງມີມາດຕະຖານໃນການປະຕິບັດຕົວຈິງ: ສະຫາຍເຂລາທິການໃຫຍ່ ສີຈິ້ນຜິງ ໄດ້ກຳນົດມາດຕະຖານອະທິບາຍເປົ້າໝາຍການກໍ່ສ້າງປະເທດເຂັ້ມແຂງດ້ານສິກຳ, ແຜນການວິທະຍາສາດ ແລະ ຊຸກຍູ້ວຽກງານ 3 ກະສິກຳ ດັ່ງນີ້:

ໜຶ່ງ, ເພີ່ມທະວີການອອກແບບໂຄງບົນ: ສ້າງແຜນການກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳ, ໂດຍອີງໃສ່ເປົ້າໝາຍແຜນພັດທະນາ 5 ປີ 2023 ແລະ ຍຸກກາງຂອງສະຕະວັດນີ້ ກຳນົດແຜນການດ້ວຍການແບ່ງພາບເສັ້ນທາງເດີນ ແລະ ພາບການປະຕິບັດ ແລະ ເພີ່ມທະວີຫຼັກການຜົນສັກສິດຂອງແຜນການ; ສະຫາຍເລຂາທິການໃຫຍ່ ເນັ້ນໜັກວ່າ: ການກຳນົດແຜນການແມ່ນຕ້ອງເຊື່ອມໂຍງກັບເປົ້າໝາຍໃນປະຈຸບັນ, ຮັກສາຄວາມຕໍ່ເນື່ອງຂອງວຽກງານ, ບໍ່ໃຫ້ ປີ້ນໄປປ່ຽນມາ; ຕ້ອງປະຕິບັດຕາມແຜນການຢ່າງເຂັ້ມງວດ, ຫ້າມຖືເບົາກັບແຜນການຈັດຕັ້ງປະຕິບັດຢ່າງເດັດຂາດ.

ສອງ, ຕ້ອງມີຄວາມຄືບໜ້າຢ່າງຕໍ່ເນື່ອງ, ປັກຫຼັກໃຫ້ໝັ້ນສ້າງສາໃຫ້ແໜ້ນ; ການກໍ່ສ້າງປະເທດເຂັ້ມແຂງດ້ານກະສິກຳເປັນພາລະກິດຂອງຊາດທີ່ຍາວນານ ແລະ ຫຍຸ້ງຍາກ. ສະນັ້ນ, ຕ້ອງແບ່ງໄລຍະການປະຕິບັດໄປເທື່ອລະກ້າວໃຫ້ໝັ້ນທ່ຽງ ເຮັດໄປໜ້າເໝືອນເຫຼັກຕະປູທີ່ໜຽວໝັ້ນ ບໍ່ຍອມປ່ອຍວາງ. ສະຫາຍເລຂາທິການໃຫຍ່ເນັ້ນໜັກວ່າ: ໃຫ້ເອົາສິ່ງສຳຄັນໃນປະຈຸບັນ ມາສຸມໃສ່ໃນວຽກງານການສ້າງຊົນນະບົດໃຫ້ຈະເລີນຮຸ່ງເຮືອງຮອບດ້ານ, ການວາງຮາກຖານ ແລະ ມີຜົນປະໂຫຍດທີ່ຍາວນານໃຫ້ດີຫຼາຍຂຶ້ນ.

ສາມ, ກໍ່ສ້າງໂດຍອີງໃສ່ເງື່ອນໄຂແຕ່ລະທ້ອງຖິ່ນ, ໃຫ້ຄວາມສຳຄັນກັບສະພາບຄວາມເປັນຈິງ, ແຕ່ລະທ້ອງຖິ່ນໃຫ້ນຳໃຊ້ຂໍ້ໄດ້ປຽບດ້ານຊັບພະຍາກອນ ແລະ ໄລຍະການພັດທະນາໃຫ້ເຕັມທີ່, ນຳໃຊ້ຂໍ້ໄດ້ປຽບຂອງຕົນເອງ, ບໍລິການຄວາມຕ້ອງການຂອງຍຸດທະຍາດລວມ, ຕັ້ງໜ້າປະກອບສ່ວນຜົນປະໂຫຍດສູ່ສັງຄົມດ້ວຍຄວາມຫ້າວຫັນ, ເປັນເຈົ້າການ ແລະ ມີການສ້າງສັນໃໝ່. ທ່ານເລຂາທິການໃຫຍ່ກ່າວວ່າ: ຕ້ອງເຮັດໂຄງການໃດເປັນໂຄງການນັ້ນ, ເຮັດເລື່ອງໃດຕ້ອງສຳເລັດເລື່ອງນັ້ນ, ບໍ່ຕ້ອງໄປເຮັດສິ່ງທີ່ຍິ່ງໃຫຍ່ທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ຫຼື ໂຄງການກໍ່ສ້າງໃຫຍ່ທີ່ເອົາແຕ່ໜ້າ...ຯ

ແປຈາກ: ນັກວິຈານວາລະສານ ສັດຈະທຳ ຊິວຊື່ (qiushi) ສະບັບທີ 18 ມີນາ 2023

ວາລະສານກໍ່ສ້າງພັກ, ສະບັບ 260 ຕຸລາ 2023

ຜູ້ຊີ້ນຳ

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

ຄະນະບັນນາທິການ

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ວິລັດ ສຸນີຈັນ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ

ບັນນາທິການ, ອອກແບບ ແລະ ຈັດໜ້າ

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສນຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສົມພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ຄຳສອນ	
ບກ	-ປະທານ ໄກສອນ ພົມວິຫານ ເວົ້າເຖິງພະນັກງານການນຳ	1
	ທິດສະດີ ແລະ ພຶດຕິກຳ	
ແສງຄຳ	-ບາງຜົນສຳເລັດໃນການນຳພາ-ຊີ້ນຳ ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ	2
ປາໃນ ວຽງວິໄລ	-ການກໍ່ສ້າງ, ປັບປຸງການຈັດຕັ້ງຮາກຖານພັກ ຂອງອົງຄະນະພັກກະຊວງແຮງງານ	8
ຕຸ້ຍ ສຸລິເດດ	-ຄະນະພັກຫ້ອງວ່າການແຂວງຫົວພັນ ໄດ້ເອົາໃຈໃສ່ປັບປຸງການຈັດຕັ້ງ	13
ສ. ສິດໃສ	-ບາງຜົນງານການນຳພາຂອງອົງຄະນະພັກເມືອງໜອງບົກ ແຂວງຄຳມ່ວນ	18
	ຄົ້ນຄວ້າ-ແລກປ່ຽນ	
ສົມຈິດ ດວງສະຫວັນ	-ຍົກສູງບົດບາດສະພາແຫ່ງຊາດ ໃນການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ	24
ຄຳໝັ້ນ ພອນວິໄລຄຳ	-ຍົກສູງຄຸນນະພາບກໍ່ສ້າງ ແລະ ບຳລຸງພະນັກງານ-ສະມາຊິກພັກ ຢູ່ແຂວງຊຽງຂວາງ	29
ປູ່ງລໍ່ ຫວາເຊັ້ງ	-ອົງຄະນະພັກແຂວງໄຊສົມບູນ ຖືເອົາການຍົກສູງຄຸນທາດການເມືອງ ໃຫ້ພະນັກງານ	33
ບຸນມີ ທິບມີໄຊ	-ເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານສິ່ງແວດລ້ອມ ຢູ່ແຂວງຊຽງຂວາງ	38
ບົວໄລ ສຸທຳມາ	-ບາງບົດຮຽນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍກ້າວແກ້ໄຂບັນຫາ	43
	ວຽກດີຄົນເດັ່ນ	
ຈັນອາລີຈິດ	-ຜະລິດຕະພັນນໍ້າດື່ມສະໝຸນໄພໃບໝາດ ກຳລັງເປັນທີ່ນິຍົມດື່ມ ຈົນກາຍເປັນສິນຄ້າ	48
	ບົດຮຽນຕ່າງປະເທດ	
ສຸກສະຫວາດ ເທບພະວົງ	-"ຢາກໃຫ້ຊາດເຂັ້ມແຂງ ຕ້ອງສ້າງກະສິກຳໃຫ້ເຂັ້ມແຂງ"	51
✍✍✍✍	-ສາລະບານ	54